# ໂລກາພິວັດທາງເສດຖະກິດ
# ກັບການພັດທະນາປະເທດເຮົາ



ຄະນະໂຄສະນາອົບຮົມສູນກາງພັກ
ຫ້ອງການຄົ້ນຄວ້າທິດສະດີ-ພຶດຕິກຳ

# ໂລກາພິວັດທາງເສດຖະກິດ ກັບການພັດທະນາປະເທດເຮົາ

ຂຽນໂດຍ: ເຈືອງ ສົມບູນຂັນ

ວຽງຈັນ, ປີ 2003

* ຈັດຈຳໜ່າຍໂດຍຫ້ອງການຄົ້ນຄວ້າ
ທິດສະດີ ແລະ ພຶດຕິກຳ - ໜັງສືພິມປະເທດລາວ

ໂທ: 222982, 215880, 212447
(020) 526465,

* ສະຫງວນລິຂະສິດ

ຄຳນຳ

ໃນມະຕິກອງປະຊຸມໃຫຍ່ຄັ້ງທີ່ VII ຂອງພັກ ໄດ້ກຳນົດທິດທາງໜ້າທີ່ ຂອງວຽກງານແນວຄິດທິດສະດີໄວ້ຈຸດໜຶ່ງວ່າ: ການຄົ້ນຄວ້າທິດສະດີ-ພຶດຕິກຳ ຕ້ອງຊີ້ໃຫ້ເຫັນແຈ້ງກ່ຽວກັບກາລະໂອກາດ ແລະ ສິ່ງທ້າທາຍທົດສອບສຳລັບປະເທດເຮົາ ໃນການຮ່ວມສຳພັນທາງດ້ານເສດຖະກິດ ແລະ ການປັບຕົວເຂົ້າຫາກັນຂອງບັນດາປະເທດໃນຍຸກໂລກາພິວັດ.

ເນື່ອງຈາກວ່າໂລກາພິວັດ ແມ່ນສັບໃໝ່ທີ່ພວມນິຍົມໃຊ້ກັນຢ່າງແຜ່ຫລາຍໃນວົງການຕ່າງໆຂອງປະເທດເຮົາ ແລະ ໃນເວທີສາກົນ; ເນື່ອງຈາກວ່າໃນໂລກປັດຈຸບັນ ໄດ້ມີເຫດການຕ່າງໆເກີດຂຶ້ນຢ່າງຫລວງຫລາຍ ແລະ ຜັນແປຢ່າງສັບສົນ - ສະລັບສັບຊ້ອນ ສະນັ້ນຈຶ່ງມີຄວາມຈຳເປັນຄົ້ນຄວ້າ ເພື່ອຈຳແນກໃຫ້ເຫັນວ່າ ແມ່ນອັນໃດເປັນຜົນສືບເນື່ອງຂອງໂລກາພິວັດທາງເສດຖະກິດ ແລະ ໃນນັ້ນ ແມ່ນອັນໃດແທ້ ທີ່ເປັນສິ່ງທ້າທາຍ ຫລື ເປັນກາລະໂອກາດສຳລັບການພັດທະນາ.

ດ້ວຍເຫດຜົນດັ່ງກ່າວນັ້ນ ຄະນະໂຄສະນາອົບຮົມສູນກາງພັກຈຶ່ງມອບໃຫ້ຫ້ອງການຄົ້ນຄວ້າທິດສະດີ-ພຶດຕິກຳ ຈັດພິມປຶ້ມ "ໂລກາພິວັດທາງເສດຖະກິດ ແລະ ການພັດທະນາປະເທດເຮົາ" ອອກສູ່ສັງຄົມ.

ໃນປຶ້ມ "ໂລກາພິວັດທາງເສດຖະກິດ ແລະ ການພັດທະນາ ປະເທດເຮົາ" ໄດ້ສະເຫນີໃຫ້ຮູ້ກ່ຽວກັບທີ່ມາ ຫລື ສາເຫດທາງປະຫວັດສາດຂອງໂລກາພິວັດທາງເສດຖະກິດ ໂດຍໃຊ້ວິທີວິທະຍາວັດຖຸນິຍົມປະຫວັດວິພາກ ແລະ ຫລັກມູນຂອງທິດສະດີມາກ-ເລນິນມາຊີ້ແຈ້ງ ແລະ ຢັ້ງຢືນ. ພ້ອມກັນນັ້ນ ກໍ່ໄດ້ພະຍາຍາມສ້າງຄວາມເຂົ້າໃຈດ້ວຍການໃຫ້ນິຍາມ ແລະ ຕີຄວາມຫມາຍຂອງໂລກາພິວັດທາງເສດຖະກິດຢ່າງກະທັດລັດ.

ເນື້ອໃນຕົ້ນຕໍ-ໃຈກາງຂອງປຶ້ມຫົວນີ້ ແມ່ນການສະເຫນີໃຫ້ເຫັນແຈ້ງສິ່ງທ້າທາຍ ແລະ ກາລະໂອກາດຂອງໂລກາພິວັດທາງເສດຖະກິດຢ່າງເປັນລະບົບ. ໃນນີ້, ໄດ້ຍົກໃຫ້ເຫັນດ້ານທີ່ທ້າທາຍກ່ອນ; ຈາກນັ້ນຈຶ່ງຍົກໃຫ້ເຫັນດ້ານທີ່ເປັນກາລະໂອກາດ.

ການສະເຫນີໃຫ້ເຫັນທັງສອງດ້ານ ຂອງບັນຫາດຽວ ໂດຍແຍກອອກຈາກກັນ ກໍ່ເພື່ອໃຫ້ທ່ານຜູ້ອ່ານສາມາດຈຳແນກ ແລະ ທຳຄວາມເຂົ້າໃຈໄດ້ສະດວກຂຶ້ນ ກ່ຽວກັບແຕ່ລະດ້ານຂອງໂລກາພິວັດທາງເສດຖະກິດ, ໂດຍໄດ້ນຳເອົາຕົວເລກຂໍ້ມູນ ແລະ ບົດຮຽນຕົວຈິງຈຳນວນຫນຶ່ງມາປະກອບໃສ່ເພື່ອຢືນຢັນ.

ໃນຕອນທ້າຍຂອງປຶ້ມ ໄດ້ມີການສະເຫນີທັດສະນະ ແລະ ແນວຄວາມຄິດກ່ຽວກັບການສ້າງພື້ນຖານສຳລັບການພັດທະນາທີ່ຫມັ້ນຄົງຢູ່ປະເທດເທດເຮົາ ໂດຍໄດ້ເອົາແນວທາງຂອງພັກມາອ້າງອີງ ແລະ ອະທິບາຍ. ພ້ອມນັ້ນ ກໍ່ໄດ້ຍົກໃຫ້ເຫັນກົນໄກສຳຄັນ ທີ່ຈະຮັບປະກັນ

ໃຫ້ການຈັດຕັ້ງປະຕິບັດແນວທາງ ແລະ ຈຸດໝາຍຍຸດທະສາດປະກົດເປັນຈິງ.

ປຶ້ມ "ໂລກາພິວັດທາງເສດຖະກິດ ແລະ ການພັດທະນາປະເທດເຮົາ" ແມ່ນການບຸກເບີກດ້ານການຄົ້ນຄວ້າຢູ່ປະເທດເຮົາ ກ່ຽວກັບບັນຫາໃໝ່ຂອງຍຸກສະໄໝ. ສະນັ້ນ ຈຶ່ງບໍ່ອາດຫລີກໄດ້ຄວາມບົກພ່ອງ ແລະ ຄວາມບໍ່ຊັດເຈນໃນບາງດ້ານ ເປັນຕົ້ນແມ່ນຂໍ້ມູນ ແລະ ສິ່ງອ້າງອີງ.

ພວກເຮົາ ພ້ອມທີ່ຈະຮັບເອົາຄວາມເຫັນຈາກທ່ານ, ທັງຫວັງວ່າປຶ້ມຫົວນີ້ຈະເປັນປະໂຫຍດບໍ່ຫລາຍກໍ່ໜ້ອຍ ສຳລັບຜູ້ສົນໃຈຄົ້ນຄວ້າ ແລະ ຊອກຮູ້ບັນຫາໃໝ່ໆແຫ່ງຍຸກໂລກາພິວັດ.

ຄະນະໂຄສະນາອົບຮົມ
ສູນກາງພັກ

♦ ສັງຄົມມະນຸດເຮົາ ຕັ້ງແຕ່ເກີດຂຶ້ນຮອດປັດຈຸບັນ ໄດ້ຜ່ານຂະບວນວິວັດການຂະຫຍາຍຕົວອັນຍາວນານ ທີ່ສາມາດແຍກອອກເປັນຍຸກສະໄຫມປະຫວັດສາດເຊັ່ນ: ສະໄຫມດຶກດຳບັນ, ສະໄຫມໂບຮານ, ສະໄຫມກາງ, ສະໄຫມໃຫມ່ ແລະ ສະໄຫມປັດຈຸບັນເປັນຕົ້ນ. ໃນຍຸກສະໄຫມປະຫວັດສາດຕ່າງໆເຫລົ່ານັ້ນ ໄດ້ມີຮູບຖານເສດຖະກິດ-ສັງຄົມຫລາຍຮູບແບບເກີດຂຶ້ນ ເຊັ່ນ: ສັງຄົມສະຫະຊີບປະຖົມບູຮານ, ສັງຄົມຂ້າທາດ, ສັງຄົມສັກດີນາ, ສັງຄົມທຶນນິຍົມ ແລະ ສັງຄົມສັງຄົມນິຍົມ. ຮູບຖານເສດຖະກິດ-ສັງຄົມເຫລົ່ານັ້ນ ຈຳນວນຫນຶ່ງໄດ້ຄົງຕົວ, ຂະຫຍາຍຕົວມາໄລຍະຫນຶ່ງ ແລ້ວກໍ່ສະລາຍຕົວໄປ; ແຕ່ມີຈຳນວນຫນຶ່ງໄດ້ຮັບການພັດທະນາໃຫ້ຫມັ້ນຄົງຍືນຍົງ.

ຈະແມ່ນໃນຍຸກໃດ, ສະໄຫມໃດ, ສັງຄົມລ້ວນແຕ່ມີໂຄງສ້າງ, ມີແບບວິທີການຜະລິດ, ມີກົນໄກ ແລະ ກົດເກນສະເພາະ ແລະຈະແມ່ນໃນຍຸກໃດ, ສະໄຫມໃດກໍ່ຕາມ ກຳລັງການຜະລິດ,ລ້ວນແຕ່ມີບົດບາດຕັດສິນຕໍ່ການຂະຫຍາຍຕົວ ແລະ ຄວາມກ້າວຫນ້າຂອງສັງຄົມໃນຍຸກນັ້ນ ສະໄຫມນັ້ນ. ການຂະຫຍາຍຕົວຂອງກຳລັງການຜະລິດປຽບເຫມືອນ "ຫມໍ້ໄຟ" ທີ່ເຮັດໃຫ້ອົງປະກອບຕ່າງໆຂອງລະບົບກົນໄກສັງຄົມເຄື່ອນເຫນັງ ຕາມພາລະຫນ້າທີ່ຂອງໃຜຂອງມັນ, ເຮັດໃຫ້ການພົວພັນການຜະລິດຕ້ອງປັບຕົວໃຫ້ສອດຄ່ອງ, ຊຶ່ງລັດທິມາກ-ເລນິນເອີ້ນວ່າ:. ກົດເກນວ່າດ້ວຍຄວາມສອດຄ່ອງຂອງການພົວພັນການຜະລິດກັບລະດັບ ແລະ ລັກສະນະການຂະຫຍາຍຕົວຂອງກຳລັງຜະລິດ.

ຕັ້ງແຕ່ກາງຂອງສະຕະວັດທີ 20 ມານີ້, ກຳລັງການຜະລິດຢູ່ຫລາຍປະເທດໄດ້ຂະຫຍາຍຕົວຢ່າງໄວວາ ແລະ ມີລະດັບສູງກວ່າຊຸມປີກ່ອນນັ້ນຢ່າງຂາດຂັ້ນ. ການຂະຫຍາຍຕົວດັ່ງກ່າວ ແມ່ນຜົນຈາກການປະຕິວັດທາງດ້ານວິທະຍາສາດ-ເຕັກນິກ ແລະ ຄວາມກ້າວໜ້າອັນມະຫັດສະຈັນຂອງວິທະຍາການ ກໍ່ຄືເຕັກໂນໂລຢີ; ຊຶ່ງບໍ່ຈຳກັດຢູ່ໃນຂອບເຂດຂອງປະເທດໃດໜຶ່ງ, ແຕ່ຫາກແຜ່ກະຈາຍໄປຍັງປະເທດຕ່າງໆຢ່າງໄຮ້ເຂດແດນ. ມັນແມ່ນການຂະຫຍາຍຕົວທີ່ມີລັກສະນະສາກົນ ແລະ ເຮັດໃຫ້ປະເທດຕ່າງໆເຊື່ອມຕິດເຂົ້າກັນເໝືອນດັ່ງຕາແຫ.

ການຂະຫຍາຍຕົວ ຂອງກຳລັງການຜະລິດທີ່ມີລັກສະນະກ້າວກະໂດດ ໄດ້ເຮັດໃຫ້ການພົວພັນຜະລິດມີການປ່ຽນແປງ-ປັບຕົວຄັ້ງໃຫຍ່, ໂດຍສະເພາະແມ່ນການພົວພັນກ່ຽວກັບກຳມະສິດ, ການຄຸ້ມຄອງ ແລະ ການແຈກຢາຍ...

ກຳລັງການຜະລິດຂະຫຍາຍຕົວສູງທໍ່ໃດ, ຍິ່ງເຮັດໃຫ້ການຜະລິດມີລັກສະນະສັງຄົມກວ້າງທໍ່ນັ້ນ, ເຮັດໃຫ້ການພົວພັນຜະລິດເປັນຕົ້ນແມ່ນຮູບແບບກຳມະສິດກໍ່ປ່ຽນໄປນຳ. ພ້ອມນັ້ນການຈັດຕັ້ງການຜະລິດ ແລະ ການຄຸ້ມຄອງກໍ່ປ່ຽນ: ຈາກບໍລິສັດແຫ່ງຊາດ ເປັນບໍລິສັດຂ້າມຊາດ; ຈາກບໍລິສັດຈຳກັດ ເປັນບໍລິສັດມະຫາຊົນ; ຈາກບໍລິສັດລົງທຶນຂອງຕ່າງປະເທດພຽງຝ່າຍດຽວ ເປັນບໍລິສັດຮ່ວມທຶນ; ຈາກການບໍລິຫານຄຸ້ມຄອງຜູ້ດຽວ ໃປສູ່ການຄຸ້ມຄອງ ຫລື ບໍລິຫານເປັນໝູ່ຄະນະ

(ມີສະພາບໍລິຫານ) ຈາກການບໍລິຫານດ້ວຍຜູ້ເປັນເຈົ້າຂອງ ໄປສູ່ການຈ້າງ "ມືອາຊີບ" ເປັນຜູ້ບໍລິຫານ ຫລື ຈັດການແທນ...

ການປ່ຽນແປງດັ່ງກ່າວນັ້ນ ເປັນໄປຢ່າງພາວະວິໄສຕາມຂັ້ນຕອນແຕ່ຕ່ຳຫາສູງ, ແຕ່ງ່າຍດາຍຫາສັບສົນ, ຈາກປະລິມານສູ່ຄຸນນະພາບ, ຈາກອັນທີ່ບໍ່ຄົບຖ້ວນສົມບູນ ກາຍເປັນລະບົບຄົບຊຸດ ແລະ ສົມບູນແບບຂຶ້ນເລື້ອຍໆ.

ການຂະຫຍາຍຕົວຂອງກຳລັງການຜະລິດ ແລະ ການປ່ຽນແປງທີ່ເກີດຂຶ້ນ ໃນລະບົບການພົວພັນເສດຖະກິດຂອງບັນດາປະເທດໃນໂລກ ໄດ້ເປັນສາເຫດສຳຄັນຂອງໂລກາພິວັດທາງເສດຖະກິດ.

# ການຂະຫຍາຍຕົວຂອງລະບົບທຶນນິຍົມ ຕົ້ນກຳເນີດຂອງໂລກາພິວັດທາງເສດຖະກິດ

♦ ສັບພະສິ່ງໃນໂລກແຫ່ງວັດຖຸ ລ້ວນແຕ່ຄົງຢູ່ບົນພື້ນຖານການເຄື່ອນເໜັງ ແລະ ມີການປ່ຽນແປງຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ. ລະບອບສັງຄົມກໍ່ເຊັ່ນດຽວກັນ.

ລະບົບທຶນນິຍົມນັບແຕ່ມື້ເກີດ ມາຮອດຊູ່ມື້ນີ້ ໄດ້ມີການປັບຕົວປ່ຽນແປງ ແລະ ຂະຫຍາຍຕົວມາຢ່າງຕໍ່ເນື່ອງ ຕາມກົດເກນ ແຫ່ງການສືບທອດອັນທີ່ເປັນແກ່ນສານທາດແທ້ ແລະ ໂຄງສ້າງທີ່ເປັນລະບົບສະເພາະ.

ເປັນທີ່ຮູ້ກັນດີແລ້ວວ່າ ໃນລະຫວ່າງສັດຕະວັດທີ່ 14-15 ໜໍ່ແໜງຂອງແບບວິທີການຜະລິດທຶນນິຍົມ ໄດ້ເກີດຂຶ້ນໃນຕົວເມືອງຈຳນວນໜຶ່ງແຖບທະເລເມດີເຕຣານເນ. ແຕ່ໃນເວລາຕໍ່ມາ ຄືຮອດທ້າຍສະຕະວັດທີ 16 ລະບອບທຶນນິຍົມໄດ້ເກີດຂຶ້ນຢູ່ປະເທດໂຮນລັງ (ຕັ້ງທ້ອງ-ຖືພາຢູ່ທາງໃຕ້ ແຕ່ພັດໄປເກີດຢູ່ທາງເໜືອ). ຈາກນັ້ນມາ 40 -50 ປີ ລະບອບທຶນນິຍົມໄດ້ເກີດຂຶ້ນຢູ່ປະເທດອັງກິດ. ຍ້ອນຫຍັງຈຶ່ງເປັນແນວນັ້ນ?

ຍ້ອນວ່າໃນໄລຍະແຕ່ປີ 1566 ຫາ 1609 ການປະຕິວັດນາຍທຶນໄດ້ເກີດຂຶ້ນຢູ່ປະເທດໂຮນລັງ. ການປະຕິວັດນາຍທຶນໄດ້ກໍ່ໃຫ້ເກີດປັດໄຈຕ່າງໆທີ່ປຽບເໝືອນ "ຢາກະຕຸ້ນ" ທີ່ສຳຄັນໃຫ້ແກ່ການ

ເກີດ ແລະ ການຂະຫຍາຍຕົວຂອງທຶນນິຍົມໃນຖານະທີ່ເປັນລະບອບເສດຖະກິດ-ສັງຄົມອັນໜຶ່ງ.

ປັດໄຈຕົ້ນຕໍທີ່ພາໃຫ້ທຶນນິຍົມເກີດ ແລະ ຂະຫຍາຍຕົວມີດັ່ງນີ້:

1/. ຄວາມກ້າວໜ້າໃນດ້ານການຜະລິດພາຫະນະ ແລະ ອຸປະກອນການຜະລິດ. ຄວາມກ້າວໜ້າດ້ານການຜະລິດພາຫະນະ ແລະອຸປະກອນການຜະລິດໄດ້ຊ່ວຍໃຫ້ສາມາດສ້າງເຮືອກຳປັ່ນ, ເຄື່ອງຈັກຕຳແຜ່ນ, ຜະລິດເຈ້ຍ ແລະ ອື່ນໆ... ເມື່ອສາມາດຜະລິດພາຫະນະ ແລະ ອຸປະກອນການຜະລິດທີ່ທັນສະໄໝໄດ້ຄືແນວນັ້ນ ການຊ່າງຫັດຖະກຳໄດ້ຖືກຫັນປ່ຽນໄປສູ່ການອຸດສາຫະກຳເປັນກ້າວໆ.

ເມື່ອມີການອຸດສາຫະກຳ ແລະ ມີວິທະຍາການກ້າວໜ້າ ຈຶ່ງສາມາດຜະລິດສິນຄ້າໄດ້ຫລາຍ. ເມື່ອຜະລິດສິນຄ້າໄດ້ຫລາຍ ກໍ່ຕ້ອງສ້າງພາຫະນະບັນທຸກ-ຂົນສົ່ງຂະໜາດໃຫຍ່ຂຶ້ນ ເປັນຕົ້ນແມ່ນເຮືອກຳປັ່ນທີ່ບັນທຸກໄດ້ຫລາຍ ແລະ ເດີນທະເລໄດ້ໄກ ເພື່ອທຳການຄ້າຂາຍກັບຫລາຍປະເທດໃນໂລກ.

2/. ການຂະຫຍາຍອານາເຂດ ແລະ ການຄ້າ ຫລືການຊື້-ຂາຍແບບເອົາລັດເອົາປຽບ (ຊື້ຖືກ-ຂາຍແພງ), ການເອົາຄົນໄປຂາຍເປັນທາດ ຫລື ເອີ້ນວ່າການຄ້າທາດຈາກທະວີບອາຟຣິກາ ໄປຍັງເອີລົບ ແລະ ອາເມຣິກາ.

ເມື່ອຜະລິດສິນຄ້າໄດ້ຫລາຍ ແລະ ສາມາດສ້າງກຳປັ່ນທີ່ເດີນທະເລໄດ້ໄກ, ພວກນາຍທຶນ ກໍ່ມີເງື່ອນໄຂຂະຫຍາຍຂອບເຂດການ

ຈຳໜ່າຍສິນຄ້າ ໄປຍັງປະເທດຕ່າງໆໄດ້ກວ້າງອອກ ແລະ ຂາຍໄດ້ຫລາຍກວ່າເກົ່າ. ຈາກນັ້ນ ກໍ່ຊື້ເອົາວັດຖຸດິບ ແລະ ຜະລິດຕະພັນອັນອື່ນທີ່ຕ້ອງການດ້ວຍລາຄາຖືກໆ ແລ້ວມາຂາຍຢູ່ປະເທດຂອງຕົນ ແລະ ປະເທດອື່ນໃນທະວີບເອີຣົບດ້ວຍລາຄາແພງ, ຊຶ່ງໄດ້ກຳໄລຢ່າງຫລວງຫລາຍ.

ນອກຈາກວັດຖຸດິບ ແລະ ສິນຄ້າວັດຖຸພັນແລ້ວ, ພວກເຂົາຍັງຊື້ເອົາຄົນໄປຂາຍເປັນທາດ. ຂ້າທາດຖືເປັນສິນຄ້າພິເສດທີ່ຊື້-ຂາຍກັນດ້ວຍເງິນ ແລະ ຄຳ, ບັງຄັບດ້ວຍແສ້ ແລະ ປືນ. ມັນແມ່ນການຄ້າທີ່ເຕັມໄປດ້ວຍຄວາມຮຸນແຮງ ແລະ ຄວາມທຸກທໍລະມານ; ແມ່ນການຄ້າແຫ່ງການຫລັ່ງເລືອດ ແລະ ນ້ຳຕາ. ຂ້າທາດໄດ້ຖືກໃຊ້ເປັນກຳລັງແຮງງານ (ເຄື່ອງຈັກທີ່ປາກໄດ້) ລາຄາຖືກທີ່ເຮັດວຽກຢ່າງໜັກໜ່ວງ ແລະ ສ້າງຜະລິດຕະພັນໃຫມ່ຂຶ້ນຢ່າງຫລວງຫລາຍ, ສ້າງຮັ່ງຄູນມີໃຫ້ພວກນາຍທຶນຢ່າງມະຫາສານ.

3/. ການສະສົມທຶນ

ເມື່ອເປີດກວ້າງການຄ້າຂາຍ ໄປຍັງປະເທດຕ່າງໆໄດ້ຫລາຍຂຶ້ນ (ລວມທັງການຄ້າທາດ) ກໍ່ກອບໂກຍກຳໄລໄດ້ມະຫາສານ; ເມື່ອມີກຳໄລຫລາຍ ກໍ່ຍິ່ງສະສົມທຶນໄດ້ຫລາຍ. . ເມື່ອມີທຶນຫລາຍ ກໍ່ສາມາດຂະຫຍາຍການຜະລິດກວ້າງອອກ ແລະ ມີສິນຄ້າໄປຂາຍຫລາຍຂຶ້ນ. ຈາກນັ້ນ ຈຶ່ງເຮັດໃຫ້ລະບອບທຶນນິຍົມຍິ່ງຂະຫຍາຍຕົວ.

4/. ການເກີດມີສູນກາງການຄ້າ ແລະ ສູນກາງການເງິນ-ສິນເຊື່ອ.

ທ່າກຳປັ່ນໃຫຍ່ໆໃນສະໄຫມນັ້ນ ເປັນຕົ້ນທ່າກຳປັ່ນເມືອງອຳສະແຕັກດຳ ບໍ່ພຽງແຕ່ໄດ້ເປັນສູນກາງດ້ານຄົມມະນາຄົມ ແລະ ການຂົນສົ່ງທາງທະເລພຽງຢ່າງດຽວ, ແຕ່ອັນສຳຄັນແມ່ນເປັນສູນກາງດ້ານສິນເຊື່ອ ແລະ ດ້ານການເງິນ. ພວກນາຍທຶນການເງິນຢູ່ທີ່ນັ້ນໄດ້ເປັນຜູ້ບຸກເບີກຮຸ່ນທຳອິດ ໃນດ້ານການໃຫ້ສິນເຊື່ອ (ເງິນກູ້) ແກ່ອຸດສາຫະກຳ ແລະ ການຄ້າດ້ວຍອັດຕາດອກເບ້ຍແບບສົ່ງເສີມ, ຊຶ່ງຖືໄດ້ວ່າເປັນການຄົ້ນຄິດປະດິດສ້າງຢ່າງຫນຶ່ງທີ່ມີຄວາມຫມາຍສຳຄັນ.

ການເງິນ ແລະ ສິນເຊື່ອໄດ້ເປັນປັດໄຈຊຸກຍູ້ເພີ່ມເຕີມໃຫ້ແກ່ການຂະຫຍາຍຕົວຢ່າງໄວວາ ແລະ ກວ້າງຂວາງຂອງລະບອບທຶນນິຍົມ.

ປັດໄຈທັງສີ່ທີ່ສະເຫນີເທິງນັ້ນ ແມ່ນປັດໄຈຕົ້ນຕໍໃນຈະນວນຫລາຍໆປັດໄຈແຫ່ງວິວັດການເກີດຂຶ້ນ ແລະ ຂະຫຍາຍຕົວຂອງລະບົບທຶນນິຍົມ. ມັນເປັນປັດໄຈທຳອິດ ຫລື ເປັນບາດກ້າວເບື້ອງຕົ້ນສູ່ໂລກາພິວັດທາງດ້ານເສດຖະກິດ.

♦ ຜ່ານໄລຍະເວລາເປັນສິບໆປີ, ຮ້ອຍປີ ລະບອບທຶນນິຍົມໄດ້ປະສົບກັບວິກິດການອັນຫນັກຫນ່ວງຫລາຍຄັ້ງ ແລະ ໄດ້ຜ່ານຜ່າສິ່ງທ້າທາຍທົດສອບຫລາຍຢ່າງ. ເນື່ອງຈາກວ່າພວກນາຍທຶນໄດ້ພະຍາຍາມຮຽນຮູ້ຈາກບົດຮຽນ ແລະ ປະສົບການຂອງຕົນເອງ, ທັງມີຄວາມກ້າຫານປັບປຸງປ່ຽນແປງຕົນເອງ ລະບອບນາຍທຶນຈຶ່ງຂະຫຍາຍຕົວສືບຕໍ່ມາ.

ຕະຫລອດໄລຍະປະຫວັດສາດອັນຍາວນານດັ່ງກ່າວ, ໃນດ້ານໜຶ່ງ ລະບົບທຶນນິຍົມໄດ້ສ້າງຄວາມຈະເລີນກ້າວໜ້າຫລາຍຢ່າງທີ່ເປັນຜົນດີສຳລັບມວນມະນຸດ, ສ່ວນໃນດ້ານໜຶ່ງອີກ ມັນໄດ້ສ້າງຄວາມທຸກທໍລະມານ ແລະ ຄວາມສູນເສຍສຳລັບປະຊາຊາດຕ່າງໆຢ່າງຫລວງຫລາຍ.

ເຖິງຢ່າງໃດກໍ່ດີ, ລະບົບທຶນນິຍົມໄດ້ສືບຕໍ່ກ້າວເດີນຕາມວົງຈອນຂຶ້ນສູ່ລະດັບໃໝ່ ຫລື ຂັ້ນໃໝ່ ຄືຂັ້ນຂອງລັດທິຈັກກະພັດນິຍົມບົນພື້ນຖານການສືບທອດເສີມຂະຫຍາຍປັດໄຈຕ່າງໆທີ່ ມີລັກສະນະຈຳເພາະຂອງມັນ.

ຍ້ອນແມ່ນການສືບທອດຕໍ່ເນື່ອງ ແລະ ແມ່ນການຂະຫຍາຍຕົວບົນພື້ນຖານໂຄງສ້າງເດີມ, ລັດທິຈັກກະພັດນິຍົມຈຶ່ງບໍ່ແຕກຕ່າງຢ່າງສິ້ນເຊີງຈາກລັດທິທຶນນິຍົມ. ທ່ານເລນິນ ໄດ້ໃຫ້ທັດສະນະກ່ຽວກັບບັນຫານີ້ວ່າ: ລັດທິຈັກກະພັດນິຍົມບໍ່ແມ່ນຮູບຖານເສດຖະກິດ-ສັງຄົມໃໝ່ແຕ່ຢ່າງໃດ, ມັນແມ່ນທຶນນິຍົມລະດັບສູງກວ່າເກົ່າ ເຊິ່ງມີກົດເກນເສດຖະກິດອັນດຽວກັນ...

ຈາກນີ້ຈຶ່ງຢັ້ງຢືນໄດ້ວ່າ ລັດທິຈັກກະພັດນິຍົມ ແມ່ນໄລຍະໃໝ່ແຫ່ງການປັບຕົວຂອງທຶນນິຍົມ ເພື່ອໃຫ້ແທດເໝາະກັບສະພາບແວດລ້ອມປະຫວັດສາດ ໃນໄລຍະໃໝ່, ຊຶ່ງທ່ານ ເລນິນ ໄດ້ໄຈ້ແຍກໃຫ້ເຫັນລັກສະນະຈຳເພາະ 5 ຢ່າງດັ່ງນີ້:

1/. ການຮວບຮວມທຶນ ແລະ ຮວມການຜະລິດໄວ້ໃນກຳມືຂອງນາຍທຶນໃຫຍ່ ຫລື ກຸ່ມນາຍທຶນ ເຖິງຂັ້ນກາຍເປັນນາຍທຶນຜູກ

ຂາດ ຫລື ກຸ່ມນາຍທຶນຜູກຂາດ ທີ່ມີບົດບາດຕັດສິນຕໍ່ຊີວິດທາງດ້ານເສດຖະກິດ.

2/. ການເຊື່ອມໂຍງເຂົ້າກັນລະຫວ່າງທຶນການເງິນ ກັບທຶນອຸດສາຫະກຳທີ່ກໍ່ໃຫ້ເກີດ "ຍັກໃຫຍ່ທາງການເງິນ" (ຫລືເອີ້ນວ່າ ຫົວໂປ່ການເງິນ) ທີ່ມີບົດບາດຊີ້ຂາດຕໍ່ພື້ນຖານເສດຖະກິດຂອງປະເທດ.

3/. ການສົ່ງທຶນອອກນອກປະເທດ ແທນໃຫ້ການສົ່ງສິນຄ້າອອກ ເພື່ອກອບໂກຍຜົນປະໂຫຍດຈາກແຫລ່ງວັດຖຸດິບ ແລະ ແຮງງານລາຄາຖືກ.

4/. ການສ້າງຕັ້ງອົງການສາກົນຂອງບັນດານາຍທຶນຜູກຂາດຂອງປະເທດຕ່າງໆ ທີ່ໄດ້ແບ່ງໂລກນຳກັນແລ້ວ.

5/. ການແບ່ງໂລກທາງດ້ານພື້ນທີ່ໂດຍປະເທດມະຫາອຳນາດທຶນນິຍົມ.

* ນັບຕັ້ງແຕ່ ເລນິນ ໄດ້ຂຽນປຶ້ມທິດສະດີວ່າດ້ວຍລັດທິຈັກກະພັດນິຍົມ (ປີ 1916) ມາຮອດຍຸກປັດຈຸບັນ, ເຖິງວ່າໂລກໄດ້ປ່ຽນໄປຫລາຍ ແລະ ລະບົບທຶນນິຍົມກໍ່ມີການປັບຕົວ ແຕ່ປັດໄຈທີ່ເປັນພື້ນຖານ, ເປັນທາດແທ້ ແລະ ເປັນກົດເກນລວມຂອງລະບົບກໍ່ຍັງຄົງຢູ່ ແລະ ໄດ້ຮັບການພັດທະນາຕະຫລອດມາ. ທັງຫມົດ 5 ລັກສະນະຈຳເພາະທີ່ເປັນທາດແທ້ ຊຶ່ງທ່ານເລນິນໄດ້ຊີ້ແຈ້ງໃນນິພົນຂອງເພິ່ນວ່າດ້ວຍລັດທິຈັກກະພັດນິຍົມນັ້ນ, ມາຮອດຊູ່ມື້ນີ້ ຍັງສະແດງອອກຢ່າງປະຈັກຕາຢູ່ໃນການພົວພັນລະຫວ່າງຊາດ.

ຈາກການໄຈ້ແຍກ 5 ລັກສະນະຈຳເພາະຂ້າງເທິງ, ຍິ່ງເຫັນໄດ້ແຈ້ງວ່າ: ລັດທິຈັກກະພັດນິຍົມນອກຈາກໄດ້ສືບທອດ ແລະ ເສີມຂະຫຍາຍບັນດາປັດໄຈພື້ນຖານຕ່າງໆ ທີ່ຊຸກຍູ້ການຂະຫຍາຍຕົວຂອງລະບົບທຶນນິຍົມແລ້ວ, ມັນຍັງເປັນຕົວເລັ່ງ ໃຫ້ແກ່ການເປີດກວ້າງຂະບວນໂລກາພິວັດທາງເສດຖະກິດ; ເຮັດໃຫ້ໂລກາພິວັດທາງເສດຖະກິດມີລັກສະນະພົ້ນເດັ່ນ ແລະ ເປັນທ່າອ່ຽງລວມທີ່ຕ້ອງເປັນໄປຢ່າງພາວະວິໄສ.

ຫມາຍຄວາມວ່າ, ເມື່ອມີລັດທິຈັກກະພັດນິຍົມເກີດຂຶ້ນ ໂລກາພິວັດທາງເສດຖະກິດ ກໍ່ໄດ້ຮັບການກະຕຸ້ນໃຫ້ຂະຫຍາຍຕົວເປັນກະແສແຮງຂຶ້ນ. ແຕ່ຫາກແມ່ນກະແສທີ່ມີລັກສະນະ "ລວງດຽວ" ຄື: ພວກຈັກກະພັດລ່າເມືອງຂຶ້ນ ພາກັນແກ່ງແຍ້ງແຂ່ງຂັນກັນຂະຫຍາຍຕະຫລາດ ແລະ ເປີດກວ້າງພື້ນທີ່ການປົກຄອງແບບເມືອງຂຶ້ນ ເພື່ອສາມາດຈຳຫນ່າຍສິນຄ້າໄດ້ຫລາຍ ແລະ ແຜ່ຜາຍວັດທະນະທຳ, ພາສາ ແລະ ແບບດຳລົງຊີວິດຂອງຕົນ; ພ້ອມນັ້ນ ກໍ່ປຸ້ນສະດົມ ແລະ ກອບໂກຍເອົາຊັບພະຍາກອນທີ່ມີລາຄາແພງ ແລະ ຊັບສິນສົມບັດອັນມີຄ່າຈາກປະເທດທົ່ວເມືອງຂຶ້ນ ມາສ້າງຮັ່ງຄູນມີໃຫ້ແກ່ປະເທດຕົນ.

ໃນເນື້ອແທ້, ອັນນີ້ແມ່ນຂະບວນວິວັດແຫ່ງການແຜ່ອຳນາດເພື່ອປົກຄອງ ຕິດພັນກັບການສະແຫວງຫາຜົນປະໂຫຍດທາງດ້ານເສດຖະກິດສຳລັບສະເພາະຫນ້າ ແລະ ຍາວນານ ບົນພື້ນຖານການໃຊ້ກຳລັງອາວຸດ, ກຳລັງທະຫານ ແລະ ຖານະທາງເສດຖະກິດທີ່ເຫນືອກວ່າຂອງປະເທດຫນຶ່ງ ຕໍ່ອີກປະເທດຫນຶ່ງ.

ແລະ ອັນນີ້ທັງເປັນສາເຫດສຳຄັນແຫ່ງການເກີດສົງຄາມໂລກທັງສອງຄັ້ງທີ່ຜ່ານມາລະຫວ່າງປະເທດຈັກກະພັດ.

ວິວັດການຂະຫຍາຍຕົວຂອງທຶນນິຍົມ ຕັ້ງແຕ່ຕົ້ນຮອດສະໄຫມແຫ່ງລັດທິຈັກກະພັດນິຍົມ ດັ່ງທີ່ໄດ້ສະເຫນີມານັ້ນ ໄດ້ກໍ່ໃຫ້ເກີດການປ່ຽນແປງທີ່ສຳຄັນ ໃນລະບົບການພົວພັນລະຫວ່າງປະເທດ ເປັນຕົ້ນແມ່ນການເກີດຂຶ້ນຂອງ "ລັດທິລ່າເມືອງຂຶ້ນແບບໃຫມ່" ທີ່ໄດ້ໃຫ້ຄວາມສຳຄັນ ແກ່ການສະແຫວງຫາຜົນປະໂຫຍດທາງດ້ານເສດຖະກິດໄປຄຽງຄູ່ກັບຜົນປະໂຫຍດທາງດ້ານການເມືອງ-ການທະຫານ.

ສະຫລຸບລວມແລ້ວ, ການຂະຫຍາຍຕົວຂອງກຳລັງການຜະລິດ ແລະ ການຜະລິດທີ່ມີລັກສະນະສັງຄົມກວ້າງອອກກວ້າງອອກບວກກັບການປັບປຸງ-ປ່ຽນແປງຢູ່ໃນໂຄງສ້າງຂອງລະບົບທຶນນິຍົມ ໄດ້ເຮັດໃຫ້ການພົວພັນທາງດ້ານເສດຖະກິດລະຫວ່າງປະເທດຕ່າງໆ ມີການປ່ຽນແປງໄປຕາມທິດທັນເປັນທົ່ວໂລກ ຫລື ເປັນໂລກາພິວັດທາງເສດຖະກິດ.

# ໂລກາພິວັດທາງເສດຖະກິດ

## ນິຍາມຄວາມໝາຍ

**ໂລກາພິວັດ** ເປັນຫົວຂໍ້, ເປັນບັນຫາທີ່ນັກຄົ້ນຄວ້າດ້ານການພົວພັນລະຫວ່າງປະເທດ, ນັກປະຫວັດສາດ, ນັກເສດຖະສາດຫລາຍຄົນສົນໃຈຄົ້ນຄວ້າມາດົນແລ້ວ, ຊຶ່ງພໍສັງລວມມາສະເໜີໄດ້ດັ່ງນີ້:

♦ ພວກໜຶ່ງໃຫ້ທັດສະນະວ່າ ໂລກາພິວັດທາງເສດຖະກິດໄດ້ເລີ່ມຂຶ້ນພາຍຫລັງສົງຄາມໂລກຄັ້ງທີ 2, ໂດຍສະເພາະ ແມ່ນເລີ່ມຕົ້ນຕັ້ງແຕ່ເວລາສະຫະລັດອາເມລິກາ ໄດ້ເຂົ້າໄປຊ່ວຍຟື້ນຟູບູລະນະປະເທດເອີລົບຕາເວັນຕົກ ຕາມທິດສະດີຂອງປະທານນາທິບໍດີ ທຣູແມນ (Truman Doctrine). ວັດຖຸປະສົງສຳຄັນຂອງການຊ່ວຍເຫລືອດັ່ງກ່າວ ແມ່ນເພື່ອສະກັດກັ້ນອິດທິພົນຂອງສະຫະພາບໂຊວຽດ ຫລືຕ້ານລັດທິກອມມູນິດນັ້ນເອງ.

• ເພື່ອໃຫ້ທິດສະດີດັ່ງກ່າວມີຄວາມເປັນໄປໄດ້, ສະຫະລັດກໍ່ໄດ້ດຳເນີນແຜນການ "ມາກຊານ" (Marshall Plan) ຊຶ່ງບາງຄົນເອີ້ນແຜນການນີ້ວ່າ "ແຜນການຫັນເອີລົບຕາເວັນຕົກໄປຕາມອາເມລິກາ" (ຫລື Americanization). ໃນການປະຕິບັດໂຄງການນີ້ ສະຫະລັດໄດ້ໃຊ້ງົບປະມານມະຫາສານ ແນ່ໃສ່ຟື້ນຟູ ແລະ ເລັ່ງລັດການຂະຫຍາຍຕົວທາງເສດຖະກິດ ໂດຍໃຫ້ 16 ປະເທດເອີລົບເຂົ້າຮ່ວມໃນອົງການເພື່ອຄວາມຮ່ວມມືທາງເສດຖະກິດແຫ່ງເອີລົບ. ປະເທດທີ່ເຂົ້າຮ່ວມໃນ

ອົງການນີ້ທັງຫມົດຕ້ອງເຮັດແຜນພັດທະນາໄລຍະ 4 ປີ ເພື່ອຮັບເອົາເງິນຊ່ວຍເຫລືອຈາກສະຫະລັດກວ່າ 12 ພັນລ້ານໂດລາ, ຊຶ່ງໃນນັ້ນອັງກິດ, ເຢຍລະມັນ, ຝຣັ່ງ ແລະ ອີຕາລີໄດ້ຮັບລວມກັນກວມ 65% ຂອງການຊ່ວຍເຫລືອທັງຫມົດ.

ການສະຫນັບສະຫນູນ ຊ່ວຍເຫລືອຂອງສະຫະລັດແກ່ 16 ປະເທດ ບົນພື້ນຖານການໂຮມກັນເຂົ້າເປັນກຸ່ມ ຫລື ອົງການເພື່ອຄວາມຮ່ວມມືທາງເສດຖະກິດແຫ່ງເອີລົບ ໄດ້ເປັນ **ຈຸດເລີ່ມຕົ້ນອັນເປັນປະຫວັດການແຫ່ງໂລກາພິວັດທາງເສດຖະກິດໃນໂລກຍຸກໃຫມ່.**

* ໄປພ້ອມກັບການຊ່ວຍເຫລືອອັນມະຫາສານທາງດ້ານເສດຖະກິດ ສະຫະລັດອາເມລິກາ ຍັງໄດ້ເພີ່ມບົດບາດ ແລະ ອິດທິພົນຂອງຕົນຂຶ້ນຢ່າງໄວວາຢູ່ບັນດາປະເທດເອີລົບຕາເວັນຕົກ ດ້ວຍການດຶງປະເທດຕ່າງໆເຂົ້າເປັນກຸ່ມ ຫລື ເປັນພັນທະມິດດ້ານການເມືອງ-ການທະຫານໃນປີ 1949 ເຊິ່ງເອີ້ນວ່າ ອົງການສົນທິສັນຍາຮ່ວມປ້ອງກັນອັດລັງຕິກເຫນືອ (ຫລື ນາໂຕ້ NATO).

ຕໍ່ຈາກນັ້ນມາອີກບໍ່ເທົ່າໃດປີ ການສ້າງກຸ່ມພັນທະມິດແບບດຽວກັນນີ້ ຂອງສະຫະລັດກໍ່ໄດ້ຂະຫຍາຍໄປສູ່ພາກພື້ນອື່ນໆຂອງໂລກຢ່າງລຽນຕິດເຊັ່ນ: ອົງການລັດອາເມລິກັນ (Organization of American States OAS); ອົງການສົນທິສັນຍາຮ່ວມປ້ອງກັນແຫ່ງອາຊີຕາເວັນອອກສ່ຽງໃຕ້ (SEATO), ສົນທິສັນຍາກັບປະເທດຕ່າງໆໃນຕາເວັນອອກກາງ ຫລື ເອີ້ນວ່າອົງການສົນທິສັນຍາກາງ (CENTO), ສົນທິສັນຍາລະຫວ່າງອົດສຕຼາລີ - ນິວຊີແລນ-ສະຫະລັດ (ANZUS)...

ການຮ່ວມມືກັນ ຫລື ການຮ່ວມສຳພັນກັນລະຫວ່າງປະເທດຕ່າງໆ ທີ່ມີສະຫະລັດອາເມລິກາເປັນຜູ້ລິເລີ່ມ ແລະ ເປັນຕົວຕັ້ງຕົວຕີໃນເວລານັ້ນ ໄດ້ກວມເອົາເກືອບ 50 ປະເທດ. ຈຸດປະສົງຕົ້ນຕໍຂອງການສ້າງຕັ້ງກຸ່ມພັນທະມິດການເມືອງ - ການທະຫານຂຶ້ນຢ່າງຫລວງຫລາຍໃນພາກພື້ນຕ່າງໆຂອງໂລກເຊັ່ນນັ້ນ ໃນດ້ານຫນຶ່ງແມ່ນເພື່ອປ້ອງກັນ ແລະ ສະກັດກັ້ນການແຜ່ຂະຫຍາຍອິດທິພົນຂອງໂຊວຽດ; ແຕ່ໃນດ້ານຫນຶ່ງອີກ ກໍ່ແມ່ນເພື່ອປົກປ້ອງຜົນປະໂຫຍດທາງເສດຖະກິດທີ່ເກີດຈາກໂລກາພິວັດນັ້ນເອງ.

ການສ້າງຕັ້ງກຸ່ມ**ການເມືອງ - ການທະຫານຄືແນວນັ້ນ ບໍ່ສາມາດເອີ້ນໄດ້ວ່າ ເປັນໂລກາພິວັດທາງດ້ານເສດຖະກິດ**. ເພາະອັນນີ້ແມ່ນການຮວມຕົວກັນເພື່ອຈຸດປະສົງສະກັດກັ້ນ ແລະ ກຳຈັດຜູ້ອື່ນ; ເພື່ອການແຜ່ຂະຫຍາຍອິດທິພົນ ຂອງປະເທດທີ່ເຂັ້ມແຂງໄປສູ່ປະເທດອື່ນໆ ແນໃສ່ສ້າງກຸ່ມບໍລິວານເພື່ອປົກປ້ອງຜົນປະໂຫຍດຂອງຕົນ.

♦ ມີນັກຄົ້ນຄວ້າ, ນັກເສດຖະສາດນາຍທຶນບາງຄົນໄດ້ໃຫ້ທັດສະນະກ່ຽວກັບໂລກາພິວັດ ໂດຍຕິດພັນກັບການແບ່ງວິວັດການຂະຫຍາຍຕົວຂອງສັງຄົມມະນຸດເຮົາ ອອກເປັນ 3 ໄລຍະແຫ່ງອະຣິຍະທຳຄື: (1) ອະຣິຍະທຳແຫ່ງການກະສິກຳ, (2) ອະຣິຍະທຳແຫ່ງການອຸດສາຫະກຳ,(3)ອະຣິຍະທຳແຫ່ງຂໍ້ມູນຂ່າວສານ (Information), ໂດຍມີຄອມພິວເຕີ ແລະ ອີເລັກໂຕຼນິກສ໌ ເປັນປັດໄຈສຳຄັນ, ຊຶ່ງໃນນີ້ຖືວ່າອະຣິຍະທຳອັນທີ່ສາມ ເປັນປັດໄຈສຳຄັນແຫ່ງການຫັນເປັນທົ່ວໂລກ ຫລື ໂລກາພິວັດ.

ຜູ້ທີ່ເປັນເຈົ້າຂອງແນວຄິດ-ທິດສະດີນີ້ ແມ່ນ ອານວິນ ໂຕບ ຟະເລີ ທີ່ຂຽນປຶ້ມ "ກະແສຟອງທີ່ສາມ", (Alvin Toffler; The Third Wave) ຊຶ່ງພໍສັງລວມເນື້ອໃນມາສະເຫນີໂດຍສັງເຂບໄດ້ດັ່ງນີ້:

**ກະແສຟອງທີ່ຫນຶ່ງ**: ແມ່ນການປະຕິວັດກະສິກຳ ທີ່ກໍ່ໃຫ້ເກີດການຫັນປ່ຽນຈາກການກະສິກຳແບບເລື່ອນລອຍ ມາເປັນການກະສິກຳແບບຄົງທີ່ ທີ່ມີການປັບປຸງດິນ. ກະແສຟອງປະຕິວັດຄັ້ງທີ່ຫນຶ່ງນີ້ ແກ່ຍາວເກືອບພັນປີ.

**ກະແສຟອງທີ່ສອງ**: ແມ່ນການປະຕິວັດອຸດສາຫະກຳທີ່ເກີດຢູ່ປະເທດອັງກິດ ເມື່ອປະມານປີ ຄ.ສ 1760 (ການຜະລິດ ແລະ ໃຊ້ເຄື່ອງຈັກອາຍນ້ຳ) ຊຶ່ງຕໍ່ມາໄດ້ຂະຫຍາຍໄປສູ່ປະເທດອື່ນໆ ແລະ ແກ່ຍາວຮອດກາງສະຕະວັດທີ 20. ການປະຕິວັດອຸດສາຫະກຳ ໄດ້ພາໃຫ້ເກີດຕົວເມືອງໃຫຍ່ໆຂຶ້ນໃນທະວີບເອີລົບ, ອາເມລິກາ ແລະ ທະວີບອື່ນໆ, ເຮັດໃຫ້ສັງຄົມໃນຕົວເມືອງເຫລົ່ານັ້ນເປັນສັງຄົມອຸດສາຫະກຳ; ເຮັດໃຫ້ໂຄງສ້າງຂອງສັງຄົມ, ສະຖາບັນຄອບຄົວ ແລະ ຊີວິດສ່ວນຕົວຂອງຄົນ ປ່ຽນແປງຢ່າງເລິກເຊິ່ງ-ເປັນອະຣິຍະທຳອຸດສາຫະກຳ.

**ກະແສຟອງທີ່ສາມ**: ແມ່ນກະແສຟອງທີ່ເກີດຂຶ້ນໃນລະຫວ່າງກາງຂອງສະຕະວັດທີ 20 ດ້ວຍການປະຕິວັດດ້ານເຕັກໂນໂລຢີສາຣະສົນເທດ ຫລື ເຕັກໂນໂລຢີຂໍ້ມູນຂ່າວສານ (Information Technology), ຫລືເອີ້ນຢ່າງຫນຶ່ງວ່າການປະຕິວັດທາງດ້ານຄອມພິວເຕີ ແລະ ດ້ານອີເລັກໂທຣນິກສ.

ຕາມທັດສະນະຂອງ ອານວິນ ໂຕບຟະເລີ, ກະແສຟອງທີ່ສາມ **ແມ່ນປັດໄຈສຳຄັນກວ່າໝູ່ ທີ່ເຮັດໃຫ້ປະຊາຄົມໂລກຕ້ອງປັບຕົວເຊື່ອມໂຍງເຂົ້າກັນ** ເພື່ອໃຫ້ດຳລົງຄົງຕົວຢູ່ໄດ້, ຊຶ່ງເອີ້ນວ່າ **ສັງຄົມແຫ່ງຍຸກໂລກາພິວັດ.**

* ໂລກາພິວັດ ໝາຍເຖິງວິວັດການເຊື່ອມຕົວເຂົ້າກັນ **ລະຫວ່າງປະເທດຕ່າງໆໃນໂລກ ໂດຍມີປັດໄຈສຳຄັນຕ່າງໆເປັນສິ່ງດຶງດູດ ເປັນຕົ້ນແມ່ນຜົນປະໂຫຍດແຫ່ງການຄົງຕົວ ແລະ ຂະຫຍາຍຕົວຂອງແຕ່ລະປະເທດ, ຂອງກຸ່ມປະເທດ ກໍ່ຄືຜົນປະໂຫຍດລວມຂອງມວນມະນຸດ. ໃນຂະບວນວິວັດແຫ່ງການເຊື່ອມເຂົ້າກັນນັ້ນ ບັນດາປະເທດທັງແຂ່ງຂັນກັນ ຊຶ່ງບາງຄັ້ງກໍ່ເກີດຄວາມຂັດແຍ້ງປໍລະປັກກັນ, ແຕ່ມີການພົວພັນຮ່ວມມືກັນ ແລະ ເພິ່ງພາອາໄສກັນ.**

ສະນັ້ນ ໂລກາພິວັດ ຈຶ່ງແມ່ນຍຸກສະໄໝທີ່ມີການຕິດຕໍ່ສື່ສານວ່ອງໄວ ແລະ ໄຮ້ເຂດແດນ, ຊຶ່ງຊ່ວຍໃຫ້ມະນຸດສາມາດຮັບຂ່າວສານ (ທັງອັນດີ ແລະ ອັນບໍ່ດີ) ໄດ້ຢ່າງໄວວາ; ແມ່ນຍຸກທີ່ຄວາມຮູ້ ແລະ ສະຕິປັນຍາມີຄ່າສູງກວ່າຍຸກໃດໆໃນອະດີດ; ແມ່ນຍຸກແຫ່ງການແຂ່ງຂັນຊອກຮູ້ຂໍ້ມູນຂ່າວສານ ແລະ ແຂ່ງຂັນທາງດ້ານເສດຖະກິດທີ່ດຸເດືອດ; ແມ່ນຍຸກທີ່ລະບົບການເງິນ ກາຍເປັນລະບົບທີ່ບໍ່ມີຂອບເຂດຊາຍແດນ ທັງມີລັກສະນະຄົບຊຸດບໍລິບູນກວ່າລະບົບອື່ນໆ.

ຍ້ອນການຮັບຮູ້ຂໍ້ມູນຂ່າວສານ ມີຄວາມສະດວກວ່ອງໄວ, ດັ່ງນັ້ນ ຄົນຊາດຕ່າງໆຈຶ່ງສາມາດແລກປ່ຽນ-ຮຽນຮູ້ຊຶ່ງກັນແລະກັນ, ທັງມີ

ການຮຽນແບບຮັບເອົາວັດທະນະທຳ ຂອງກັນແລະກັນຢ່າງບໍ່ເຄີຍມີມາກ່ອນ.

♦ ໂລກາພິວັດທາງເສດຖະກິດ ແມ່ນການເຊື່ອມເຂົ້າກັນທາງດ້ານເສດຖະກິດລະຫວ່າງປະເທດຕ່າງໆ ເພື່ອສະແຫວງຫາຜົນປະໂຫຍດຮ່ວມກັນ ແລະ ຜົນປະໂຫຍດສະເພາະຂອງແຕ່ລະປະເທດ.

ການເຊື່ອມເຂົ້າກັນເປັນໄປຢ່າງພາວະວິໄສ ແລະ ໄຮ້ເຂດແດນ ໂດຍມີປັດໄຈສຳຄັນຈຳນວນໜຶ່ງເປັນຕົວດຶງ. ປັດໄຈເຫລົ່ານັ້ນມີຄື: ການຄ້າລະຫວ່າງປະເທດ, ການລົງທຶນ, ການຖ່າຍທອດເຕັກໂນໂລຢີ, ການສົ່ງເງິນຂ້າມຊາດ, ການສົ່ງແຮງງານຂ້າມຊາດ, ການຕິດຕໍ່ສື່ສານຂ້າມທະວີບ; ການທ່ອງທ່ຽວ ແລະ ອື່ນໆອີກ.

ການເຊື່ອມເຂົ້າກັນ ເປັນໄປຢ່າງມີຂັ້ນມີຕອນ, ຜ່ານການຕໍ່ສູ້ແກ່ງແຍ້ງແຂ່ງກັນທີ່ຊັ່ງວຂາດ ແລະ ຜ່ານການເຈລະຈາປຶກສາຫາລືຜ່ອນສັ້ນຜ່ອນຍາວໃຫ້ກັນແລະກັນ. ມັນແມ່ນຂະບວນວິວັດທີ່ມີມາແຕ່ດົນນານແລ້ວ ໂດຍເລີ່ມຈາກອັນທີ່ງ່າຍດາຍ ສູ່ອັນທີ່ສັບສົນ, ຈາກດ້ານໃດດ້ານໜຶ່ງສູ່ຫລາຍດ້ານ; ຈາກສອງຝ່າຍສູ່ຫລາຍຝ່າຍ, ຈາກບາງປະເທດສູ່ຫລາຍປະເທດ...

ມາຮອດປັດຈຸບັນ ວິວັດການດັ່ງກ່າວຍັງດຳເນີນໄປຢ່າງບໍ່ຢຸດຢັ້ງ, ທັງມີລັກສະນະສະລັບສັບຊ້ອນດ້ວຍກົນໄກ, ລະບຽບການ, ກົດເກນ ແລະ ປະເພນີປະຕິບັດ; ທັງມີຂອບເຂດກວ້າງອອກໄປເລື້ອຍໆ ໂດຍບໍ່ມີຜູ້ໃດຈະຢຸດມັນໄດ້ໂດຍລຳພັງພຽງຜູ້ດຽວ.

ການເຊື່ອມເຂົ້າກັນທາງດ້ານເສດຖະກິດໃນຊູ່ມື້ນີ້ ຍິ່ງມີພະລັງດຶງດູດປະເທດຕ່າງໆເຂົ້າສູ່ວົງຈອນຫລາຍຂື້ນ ທັງປະເທດນ້ອຍປະເທດໃຫຍ່ ທັງບໍລິເວນເຂດແຄວ້ນທີ່ຢູ່ຫ່າງໄກໃນຊົມພູທະວີບ ແລະເກາະດອນໃນມະຫາສະຫມຸດ, ທັງປະເທດທີ່ຖືສາສະຫນາຄຣິສ, ພຸດ ແລະ ມຸດສະລິມ...

- ຜູ້ມີບົດບາດສຳຄັນໃນການສ້າງພະລັງດຶງດູດປະເທດຕ່າງໆໃຫ້ເຊື່ອມໂຍງເສດຖະກິດເຂົ້າກັນ ແມ່ນ**ບໍລິສັດຂ້າມຊາດ**. ເພາະບໍລິສັດຂ້າມຊາດ ເປັນຜູ້ກຳຂອດສຳຄັນຂອງເສດຖະກິດຢູ່ໃນປະເທດຕ່າງໆ ເປັນຕົ້ນແມ່ນ: **ການລົງທຶນ, ການຜະລິດ, ການເງິນ, ການຄ້າ, ການຕິດຕໍ່ສື່ສານ, ການຄົ້ນຄວ້າວິໄຈ ແລະ ການປະດິດຄິດຄົ້ນສິ່ງທີ່ໃຫມ່ໆ. ບໍລິສັດຂ້າມຊາດ ແມ່ນຕົວລະຄອນເອກໃນເວທີໂລກາພິວັດ** ທາງເສດຖະກິດ.

ເມື່ອບໍລິສັດຂ້າມຊາດເປັນຕົວລະຄອນເອກ, ພວກເຂົາຈຶ່ງເປັນຕົວກຳນົດ "ບັນຍາກາດ" ຢູ່ບົນເວທີໂລກາພິວັດ. ບັນຍາກາດຈະສົດຊື່ນລື້ນເລີງ ຫລື ບັນຍາກາດຈະເສົ້າໂສກ, ຫນ້າສະທ້ານຢ້ານກົວລ້ວນແຕ່ຂື້ນກັບການຫລິ້ນບົດບາດຕ່າງໆຂອງພວກເຂົາ. ແຕ່ວ່າບັນຍາກາດດີຫລືບໍ່ດີ ລ້ວນແຕ່ມີຜົນສະທ້ອນອັນກວ້າງຂວາງຕໍ່ສັງຄົມຂອງປະເທດຕ່າງໆ.

ເວົ້າລວມ, ການເຄື່ອນໄຫວຂອງບໍລິສັດຂ້າມຊາດໃນທົ່ວໂລກມີຜົນກະທົບຢ່າງໃຫຍ່ຫລວງຕໍ່ສະພາວະເສດຖະກິດໂລກ; ສ່ວນກະໂຕບໍລິສັດຂ້າມຊາດເອງ ກໍ່ນັບມື້ມີບົດບາດສຳຄັນຫລາຍຂື້ນໃນການ

ພົວພັນຮ່ວມມືລະຫວ່າງປະເທດ. ໃນປີ 1978 ພຽງປີດຽວ, ບໍລິສັດຂ້າມຊາດຂະໜາດໃຫຍ່ 400 ກວ່າບໍລິສັດ ສາມາດສ້າງຜະລິດຕະພັນທີ່ມີມູນຄ່າຫລາຍກວ່າ 1.800 ຕື້ໂດລາສະຫະລັດ. ແຕ່ມາໃນຕົ້ນຊຸມປີ 1990, ພຽງແຕ່ 40 ກວ່າບໍລິສັດຂ້າມຊາດທີ່ໃຫຍ່ທີ່ສຸດ ກໍ່ສາມາດຜະລິດສິນຄ້າມີມູນຄ່າຫລາຍກວ່າ 2000 ຕື້ໂດລາສະຫະລັດ ຫລື ເກືອບຮອດ 10% ຂອງມູນຄ່າຜົນຜະລິດຂອງໂລກ.

## ສິ່ງທ້າທາຍຂອງໂລກາພິວັດທາງດ້ານເສດຖະກິດ

ໂລກາພິວັດທາງເສດຖະກິດ ບໍ່ໄດ້ເກີດຂຶ້ນຢ່າງກະທັນຫັນແບບບັງເອີນ. ມັນເກີດຂຶ້ນໃນຂະບວນວິວັດອັນຍາວນານແຫ່ງການທົດສອບ, ປັບປຸງປ່ຽນແປງ ແລະ ຂະຫຍາຍຕົວຂອງລະບົບທຶນນິຍົມເວົ້າສະເພາະ ກໍ່ຄືຂອງສັງຄົມມະນຸດເຮົາເວົ້າລວມ. ເມື່ອໂລກາພິວັດທາງດ້ານເສດຖະກິດໄດ້ມີບົດບາດພົ້ນເດັ່ນຂຶ້ນ ແລະ ກາຍເປັນທ່າອ່ຽງລວມອັນໜຶ່ງທີ່ມີລັກສະນະພາວະວິໄສ ຈຶ່ງເກີດມີຄວາມຈຳເປັນຕ້ອງສ້າງກົນໄກ ແລະ ກຳນົດກົດເກນລະບຽບການຕ່າງໆອອກ.

• ສິ່ງທ້າທາຍຂອງໂລກາພິວັດເກີດຂຶ້ນຢູ່ໃນກົນໄກ, ລະບຽບການ ແລະ ກົດເກນແຫ່ງການພົວພັນ-ຮ່ວມມືກັນລະຫວ່າງປະເທດ. ບັນຫາ ແລະ ສິ່ງທ້າທາຍເຫລົ່ານັ້ນມີຫຍັງ, ເຮັດແນວໃດຈຶ່ງຈະສາມາດຈຳກັດ-ຜ່ານຜ່າມັນໄດ້? ອັນນີ້ແມ່ນ "ໂຈດ" ຂໍ້ໃຫຍ່ທີ່ຈຳໃຫ້ແຕ່ລະຊາດ ແຕ່ລະປະເທດຕ້ອງຮຽນຮູ້ ແລະ ຊອກຫາວິທີແກ້ໄຂໂດຍຕົນເອງ.

ຄວາມຈິງ, ຂະບວນວິວັດແຫ່ງການຂະຫຍາຍຕົວຂອງສັງຄົມຍາມໃດກໍ່ເຮັດໃຫ້ມີບັນຫາໃຫມ່ໆເກີດຂຶ້ນ ທີ່ຈຳໃຫ້ຊາດຕ່າງໆຕ້ອງເປັນເຈົ້າການແກ້ໄຂ. ຫາກປະເທດໃດສາມາດແກ້ໄຂບັນຫາ ແລະ ຜ່ານຜ່າສິ່ງທ້າທາຍທີ່ເກີດຂຶ້ນໄດ້ດີ, ປະເທດນັ້ນກໍ່ສາມາດສ້າງຖ່ວງທ່າ ຫລືພື້ນຖານທີ່ດີໃຫ້ແກ່ການຂະຫຍາຍຕົວອັນຫນັກແຫນັ້ນຂຶ້ນຕໍ່ໆໄປ.

ໂລກາພິວັດທາງເສດຖະກິດ, ຊຶ່ງແມ່ນວິວັດການຂະຫຍາຍຕົວທີ່ກວ້າງຂວາງ-ເລິກເຊິ່ງໃນການພົວພັນຮ່ວມມືລະຫວ່າງປະເທດ ໄດ້ກໍ່ໃຫ້ເກີດບັນຫາ ແລະ ສິ່ງທ້າທາຍຫລາຍຢ່າງ.

ສະນັ້ນ, ຈະແມ່ນປະເທດໃດກໍ່ຕາມຕ້ອງຮູ້, ຕ້ອງກຳແຫນັ້ນບັນຫາ ແລະ ສິ່ງທ້າທາຍເຫລົ່ານັ້ນ, ເພື່ອຄົດຄົ້ນວາງນະໂຍບາຍ ແລະ ວິທີການແກ້ໄຂທີ່ເຫມາະສົມສຳລັບຕົນເອງ.

ບັນຫາ ແລະ ສິ່ງທ້າທາຍເຫລົ່ານັ້ນມີຫຍັງ?

**<u>ສິ່ງທ້າທາຍອັນທີ່ໜຶ່ງ</u>: ລັກສະນະໄຮ້ເຂດແດນຂອງການພົວພັນທາງເສດຖະກິດ, ການຄ້າ ແລະ ການເງິນລະຫວ່າງປະເທດ; ການສູ້ຟັນ - ແຂ່ງຂັນກັນລະຫວ່າງກຸ່ມເສດຖະກິດ - ການຄ້າໃນພາກພື້ນຕ່າງໆຂອງໂລກ.**

ດັ່ງທີ່ຮູ້ກັນດີແລ້ວວ່າ ການຄ້າ, ການລົງທຶນ, ການເງິນ... ແມ່ນປັດໄຈສຳຄັນທີ່ດຶງປະເທດຕ່າງໆເຂົ້າໃນໂລກາພິວັດ. ເມື່ອໄດ້ຮັບເງື່ອນໄຂກະຕຸກຊຸກຍູ້ດ້ວຍລະບົບເສດຖະກິດເສລີ, ການຄ້າເສລີ ແລະ ການນຳໃຊ້ຜົນສຳເລັດ ທາງດ້ານເຕັກໂນໂລຢີດ້ານການຕິດຕໍ່ສື່ສານການຄ້າການລົງທຶນການເງິນ... ຈຶ່ງຂະຫຍາຍຕົວຢ່າງເປັນຂະບວນກວ້າງຂວາງໃນຂອບເຂດທົ່ວໂລກ ແລະ ດຳເນີນໄປຢ່າງໄຮ້ເຂດແດນ.

ລັກສະນະໄຮ້ເຂດແດນນີ້ເອງ ເປັນຜູ້ກໍ່ໃຫ້ເກີດບັນຫາ ແລະ ສິ່ງທ້າທາຍແກ່ການຄຸ້ມຄອງຂອງລັດໃນປະເທດຕ່າງໆ.

ສຳລັບປະເທດມະຫາອຳນາດທາງເສດຖະກິດ ບັນຫາ ແລະ ສິ່ງທ້າທາຍແມ່ນການຮັກສາບົດບາດຄອບງຳ ແລະ ປົກປ້ອງຜົນປະໂຫຍດທີ່ເຄີຍມີ.

ສຳລັບປະເທດ ທີ່ບໍ່ແມ່ນມະຫາອຳນາດທາງເສດຖະກິດ, ແຕ່ເປັນປະເທດພັດທະນາແລ້ວ, ບັນຫາ ແລະ ສິ່ງທ້າທາຍສຳລັບເຂົາເຈົ້າແມ່ນເຮັດແນວໃດຈຶ່ງຈະຮັກສາລະດັບ ຫລື ເລື່ອນລະດັບຖານະ, ບົດບາດຂອງປະເທດຕົນຂຶ້ນຕື່ມອີກ, ແລະເຮັດແນວໃດຈຶ່ງຈະຮັກສາຄວາມເຂັ້ມແຂງຂອງຕົນໄວ້ໄດ້.

ສຳລັບປະເທດພວມພັດທະນາ, ດ້ອຍພັດທະນາທັງຫລາຍ ບັນຫາ ແລະ ສິ່ງທ້າທາຍແມ່ນເຮັດແນວໃດສິໄດ້ຮັບ "ສ່ວນແບ່ງ" ຫລື ຜົນປະໂຫຍດທີ່ເຫມາະສົມ. ໃນນັ້ນ ມີຫລາຍປະເທດ ແມ່ນຕົກຢູ່ໃນສະພາບທີ່ຕ້ອງບຸກບືນສູ້ຊົນເພື່ອຄວາມຢູ່ລອດ.

ເວົ້າລວມຈະແມ່ນປະເທດໃດ ກໍ່ລ້ວນແຕ່ຕ້ອງບຸກບືນເປັນເຈົ້າການພັດທະນາຕົນເອງ ເພື່ອແຂ່ງກັບຜູ້ອື່ນ ແລະ ເພື່ອຄວາມຢູ່ລອດ. ຈະແມ່ນປະເທດໃດກໍ່ຕາມລ້ວນແຕ່ຕ້ອງປະເຊີນກັບບັນຫາ ແລະ ສິ່ງທ້າທາຍໃນລັກສະນະທີ່ຕ່າງກັນ; ບໍ່ມີປະເທດໃດຈະຢູ່ໄດ້ຢ່າງສະບາຍໂດຍບໍ່ມີບັນຫາ ແລະ ສິ່ງທ້າທາຍໃດໆ.

★ ຍຸກໂລກາພິວັດທາງເສດຖະກິດ ຍັງມີຈຸດພິເສດຕ່າງຈາກສະໄຫມກ່ອນຢູ່ບ່ອນວ່າ ການແຂ່ງຂັນສູ້ຢັນກັນ ໄດ້ກາຍເປັນການແຂ່ງຂັນສູ້ຢັນກັນລະຫວ່າງກຸ່ມປະເທດຕາມພາກພື້ນ ໄປຄຽງຄູ່ກັບການແຂ່ງຂັນແບບກະຈັດກະຈາຍຕາມອັດຕະພາບ.

24/7 ຂ່າວ ຈຳໜ່າຍ

ເປັນທີ່ຮູ້ກັນດີວ່າ, ຢູ່ໃນພາກພື້ນຕ່າງໆຂອງໂລກຈະແມ່ນຢູ່ເອີລົບ, ຢູ່ອາເມລິກາ, ຢູ່ອາຊີຕາເວັນອອກສ່ຽງໃຕ້ ໄດ້ເກີດມີກຸ່ມຮ່ວມມື ທາງດ້ານເສດຖະກິດ-ການຄ້າລະຫວ່າງປະເທດຕ່າງໆເຊັ່ນ: ກຸ່ມສະຫະພາບເອີລົບ (ຫລື EU), ສະມາຄົມປະຊາຊາດອາຊີຕາເວັນອອກສ່ຽງໃຕ້ ຫລື ອາຊຽນ (ASEAN), ເຂດການຄ້າເສລີອາເມລິກາເຫນືອ (ຫລື ນາຟຕ້າ NAFTA), ເຂດການຄ້າເສລີອາຊຽນ (ຫລື ອາຟຕ້າ AFTA), ກຸ່ມຮ່ວມມືທາງເສດຖະກິດອາຊີ-ປາຊີຟິກ (ຫລື ເອເປັກ APEC) ແລະ ອື່ນໆອີກ...

ຈຸດປະສົງຂອງການຕັ້ງກຸ່ມ ຫລື ເຂດຕ່າງໆເຫລົ່ານີ້ຂຶ້ນ ໃນເນື້ອແທ້ ແມ່ນເພື່ອປົກປ້ອງຜົນປະໂຫຍດຂອງກຸ່ມປະເທດທີ່ເປັນສະມາຊິກ ຫລື ຢ່າງຫນ້ອຍກໍ່ເພື່ອຮັກສາຜົນປະໂຫຍດຂອງແຕ່ລະປະເທດ.

ດັ່ງນັ້ນ, ເບິ່ງຈັ່ງຫນຶ່ງ ມັນແມ່ນ**ລັດທິປົກປ້ອງຕົນເອງ ຫລື ລັດທິກີດກັນປະເທດອື່ນ**ນັ້ນເອງ. ການຕັ້ງກຸ່ມ (ຫລື Bloc) ຄືແນວນີ້, ໄດ້ສ່ອງແສງໃຫ້ເຫັນວ່າການແຂ່ງຂັນກັນທາງດ້ານເສດຖະກິດ- ການຄ້າລະຫວ່າງປະເທດໄດ້ເພີ່ມທະວີຄວາມຮຸນແຮງຂຶ້ນເລື້ອຍໆ, ຊຶ່ງຈະໄປເຖິງການເກີດສົງຄາມທາງການຄ້າໄດ້.

* ການຮວມຕົວເປັນກຸ່ມຄືແນວນີ້ ບໍ່ໄດ້ຫມາຍຄວາມວ່າຢູ່ພາຍໃນຂອງກຸ່ມຈະບໍ່ມີບັນຫາໃດໆທີ່ຕ້ອງໄດ້ແກ້ໄຂ. ໃນທາງກົງກັນຂ້າມ, ຢູ່ພາຍໃນກຸ່ມຕ່າງໆລ້ວນແຕ່ມີບັນຫາ ສະເພາະຂອງໃຜລາວເປັນຕົ້ນແມ່ນ:

+ ຄວາມເປັນເອກະສັນໃນການຕົກລົງບັນຫາຕ່າງໆ ແລະ ຄວາມຍຶດໝັ້ນໃນການປະຕິບັດຂໍ້ຕົກລົງໃຫ້ເປັນຈິງ.

+ ການແຂ່ງຂັນລະຫວ່າງປະເທດຕ່າງໆທີ່ເປັນສະມາຊິກຂອງກຸ່ມ (ການຕໍ່ສູ້ກັນຢູ່ພາຍໃນ) ເພື່ອປົກປ້ອງຜົນປະໂຫຍດຂອງໃຜຂອງມັນ.

+ ຄວາມເປັນຈິດໜຶ່ງໃຈດຽວ ແລະ ຄວາມເດັດດ່ຽວພາຍໃນກຸ່ມ ເພື່ອຕໍ່ສູ້-ແຂ່ງຂັນກັບກຸ່ມອື່ນໆ.

+ ການ "ບຸກໂຈມຕີ" ຈາກກຸ່ມນີ້ເພື່ອສ້າງຄວາມອ່ອນເພຍໃຫ້ແກ່ກຸ່ມອື່ນ, ເພື່ອຫລຸດຜ່ອນຄວາມສາມາດແຂ່ງຂັນຂອງກຸ່ມອື່ນລົງ.

**<u>ສິ່ງທ້າທາຍອັນທີສອງ</u>: ການເປີດເສລີ ແລະ ການປົກປ້ອງຕົນເອງ.**

ການເປີດເສລີທາງການຄ້າ ແມ່ນປັດໄຈເອກທີ່ພາໃຫ້ໂລກາພິວັດດຳເນີນໄປຢ່າງວ່ອງໄວ ແລະ ກວ້າງຂວາງ... ພວກທີ່ຍຶດໝັ້ນໃນລັດທິເສລີນິຍົມແບບໃໝ່ (Neoliberalisme) ໄດ້ຢືນຢັນມາຕະຫລອດວ່າການເປີດເສລີທາງການຄ້າເປັນຊ່ອງທາງ ສຳລັບປະເທດຕ່າງໆໃຫ້ສາມາດສົ່ງສິນຄ້າຂອງຕົນອອກຂາຍໄດ້ຫລາຍກວ່າເກົ່າ, ມີລາຍໄດ້ເຂົ້າປະເທດເພີ່ມຂຶ້ນ; ຈາກນັ້ນ ຈຶ່ງມີເງື່ອນໄຂສ້າງຄວາມຮັ່ງມີເພີ່ມຂຶ້ນ, ເປັນຕົ້ນແມ່ນປະເທດພວມພັດທະນາ.

ຄວາມຈິງເປັນແນວໃດ? ການຄ້າຂາຍຢູ່ໃນໂລກຊູ່ມື້ນີ້ມີມູນຄ່າເພີ່ມຂຶ້ນຢ່າງຫລວງຫລາຍແທ້, ຖ້າໄລ່ເປັນເງິນ ແຕ່ລະປີມູນຄ່າການສົ່ງອອກສິນຄ້າຈະມີຮອດ 65 ພັນຕື້ໂດລາສະຫະລັດ. ບັນຫາມີຢູ່

ວ່າ, ສຳລັບປະເທດຈຳນວນໜຶ່ງແມ່ນດີຂຶ້ນແທ້, ແຕ່ສຳລັບຫລາຍໆ ປະເທດມັນຊ້ຳພັດບໍ່ໄດ້ດີຂຶ້ນເລີຍ ຫລື ຍິ່ງໄປກວ່ານັ້ນແມ່ນເສື່ອມໂຊມລົງ ແລະ ປະເຊີນກັບບັນຫາທີ່ແກ້ບໍ່ຕົກ.

★ ຄວາມຈິງມີຢູ່ວ່າ ບັນດາປະເທດທີ່ພັດທະນາແລ້ວ ຊຶ່ງມີປະຊາກອນພຽງແຕ່ 20% ຂອງປະຊາກອນໂລກເປັນຜູ້ຄວບຄຸມຕະຫລາດການສົ່ງອອກເຖິງ 82%. ເມື່ອເປັນເຊັ່ນນັ້ນ, ການຄ້າຂາຍລະຫວ່າງປະເທດທີ່ພັດທະນາແລ້ວ ກັບປະເທດພວມພັດທະນາ ແລະ ດ້ອຍພັດທະນາຈຶ່ງບໍ່ສາມາດມີສະພາບທີ່ດີຂຶ້ນ ຫລື ສົມດຸນກັນໄດ້. ຍ້ອນຫຍັງຈຶ່ງເປັນແນວນັ້ນ?

ໃນດ້ານໜຶ່ງ ປະເທດທີ່ພັດທະນາແລ້ວເວລາໃດກໍ່ສະເໜີ ແລະ ຈຳໃຫ້ປະເທດທີ່ພວມພັດທະນາທັງຫລາຍຕ້ອງເປີດເສລີທາງການຄ້າ; ສ່ວນໃນດ້ານໜຶ່ງອີກ ຊ້ຳພັດວາງກົນໄກ, ລະບຽບການ, ມາດຕະຖານ ແລະ ອື່ນໆອີກຫລາຍສິ່ງຫລາຍແນວ ເພື່ອປົກປ້ອງຕົນເອງ, ເຮັດໃຫ້ສິນຄ້າຈາກປະເທດພວມພັດທະນາເຂົ້າສູ່ຕະຫລາດປະເທດເຫລົ່ານັ້ນໄດ້ຍາກ. ຍ້ອນຍັງມີລັດທິປົກປ້ອງນີ້ເອງ, ຫລັກການເພື່ອຄວາມເປັນທຳ ແລະ ຫລັກການຕ່າງຝ່າຍຕ່າງມີຜົນປະໂຫຍດຈຶ່ງຖືກລະເມີດ. ມູນຄ່າການສົ່ງອອກສິນຄ້າຂອງປະເທດພວມພັດທະນາຈຶ່ງມີທ່າອ່ຽງຫລຸດລົງ, ຊຶ່ງໃນ 2-3 ປີຫລັງມານີ້ ກວມເອົາບໍ່ຮອດ 35% ຂອງຍອດມູນຄ່າການສົ່ງອອກຂອງໂລກຊ້ຳ.

- ເມື່ອການສົ່ງອອກຫລຸດລົງ ລາຍໄດ້ເປັນເງິນຕາຕ່າງປະເທດກໍ່ຫລຸດລົງ; ເມື່ອລາຍໄດ້ເຂົ້າປະເທດຫລຸດລົງ ຄວາມສາມາດ

ຊຳລະໜີ້ຕ່າງປະເທດກໍ່ຫລຸດລົງ ແລະ ໃນທາງກົງກັນຂ້າມ ຈຳນວນເງິນຕິດໜີ້ຂອງປະເທດພວມພັດທະນາກໍ່ເພີ່ມຂຶ້ນ... ເມື່ອແກ້ບັນຫານີ້ບໍ່ຕົກ, ບັນຫາຄວາມທຸກຍາກ, ບັນຫາພະຍາດລະບາດ, ບັນຫາອຶດຢາກ... ຂອງປະເທດເຫລົ່ານັ້ນກໍ່ແກ້ບໍ່ຕົກ.

ອັນນີ້ ແມ່ນ "ວົງຈອນອຸບາດ" ສຳລັບປະເທດພວມພັດທະນາ ແລະ ດ້ອຍພັດທະນາຈຳນວນຫລວງຫລາຍ ທີ່ພະຍາຍາມດີ້ນອອກໃຫ້ມັນຫລຸດ, ແຕ່ກໍ່ເປັນໄປໄດ້ຍາກທີ່ສຸດ. ຍິ່ງໄປກວ່ານັ້ນ ວົງຈອນອຸບາດດັ່ງກ່າວ ຍັງໝູນໄປເລື້ອຍໆຕາມວັດທະຈັກຂອງມັນ ແລະດູດເອົາປະເທດພວມພັດທະນາ ແລະ ດ້ອຍພັດທະນາເຂົ້າໄປຕິດໄວ້ໃນນັ້ນນັບມື້ນັບແໜ້ນເຂົ້າ.

ໃນເມື່ອຕິດແໜ້ນເຂົ້າຈົນດີ້ນບໍ່ຫລຸດແລ້ວ ໃນທີ່ສຸດ, ຫລາຍປະເທດໄດ້ "ຍອມຈຳນົນ" ດ້ວຍການປະກາດບໍ່ຊຳລະໜີ້ ຫລື ຂໍໃຫ້ປົດໜີ້; ມີບາງປະເທດໄດ້ຕົກເຂົ້າສູ່ສະພາບລົ້ມລະລາຍ. ຍ້ອນແນວນັ້ນເອງ ໜີ້ຕໍ່ຕ່າງປະເທດຂອງປະເທດພວມພັດທະນາ ແລະ ດ້ອຍພັດທະນາຈຶ່ງມີຈຳນວນເພີ່ມຂຶ້ນຢ່າງຕໍ່ເນື່ອງ ແລະ ມີວົງເງິນສູງເຖິງ 2500 ຕື້ໂດລາສະຫະລັດ ຫລື ເພີ່ມຂຶ້ນກວ່າ 4 ເທົ່າເມື່ອທຽບກັບໄລຍະ 20 ປີກ່ອນໜ້ານີ້.

ການຄ້າທີ່ບໍ່ສົມດູນ ແລະ ບໍ່ເປັນທຳບໍ່ຕ່າງຫຍັງກັບລະເບີດເວລາທີ່ຊ້ອນໄວ້ໃນການພົວພັນລະຫວ່າງປະເທດ, ຊຶ່ງບາງຄັ້ງ ມັນກໍ່ລະເບີດຂຶ້ນ ແລະ ສ້າງຄວາມເສຍຫາຍໃຫ້ແກ່ອັນທີ່ເອີ້ນວ່າ "ລະບົບ

ການຄ້າເສລີ", ທັງສ້າງຄວາມລະແວງສົງໄສ-ບໍ່ເຂົ້າໃຈກັນລະຫວ່າງປະເທດຕ່າງໆອີກດ້ວຍ.

★ ການປົກປ້ອງຕົນເອງຂອງບັນດາປະເທດທີ່ພັດທະນາແລ້ວດຳເນີນໄປພາຍໃຕ້ກົນໄກ ແລະ ລະບຽບການອັນສະລັບສັບຊ້ອນທີ່ສຸດ, ດ້ວຍນະໂຍບາຍ ແລະ ມາດຕະການທີ່ມີຫລາຍຮູບຫລາຍແບບ ແລະ ຫລາຍລະດັບແຕກຕ່າງກັນ. ອັນໜຶ່ງທີ່ສຳຄັນໃນຈຳນວນນັ້ນແມ່ນການສະຫງວນລິຂະສິດທາງປັນຍາ ແລະ ລິຂະສິດຜະລິດສິນຄ້າ.

• ຫລາຍຄົນມີຄວາມເຫັນວ່າ ໂລກາພິວັດແມ່ນຍຸກແຫ່ງຄວາມຮູ້, ຍຸກແຫ່ງສະຕິປັນຍາ. ຈາກນັ້ນຈຶ່ງມີຄຳວ່າ "ເສດຖະກິດສະຕິປັນຍາ", "ເສດຖະກິດພູມປັນຍາ"... ບາງຄົນກໍ່ເວົ້າວ່າແມ່ນຍຸກແຫ່ງຂໍ້ມູນຂ່າວສານ, ຍຸກແຫ່ງດີຊີຕອນ ແລະ ອື່ນໆອີກ.

• ການເອີ້ນ ຫລື ການຂະໜານນາມອາດຈະມີຫລາຍກວ່ານັ້ນ ແລະ ຜູ້ໃດຈະຂະໜານນາມຄືແນວໃດກໍ່ໄດ້. ແຕ່ບໍ່ມີໃຜຈະປະຕິເສດໄດ້ວ່າ ການຂະຫຍາຍຕົວ ຫລື ຄວາມຈະເລີນກ້າວໜ້າຂອງສັງຄົມມະນຸດເຮົາ ຈະແມ່ນໃນລະບອບໃດກໍ່ຕາມ ລ້ວນແຕ່ແມ່ນການສືບທອດພູມປັນຍາ ຫລື ການສືບທອດເອົາສິ່ງຍອດຍິ່ງທາງດ້ານຄວາມຮູ້, ສະຕິປັນຍາ ແລະ ຄວາມປະດິດສ້າງຂອງຄົນລຸ້ນກ່ອນ.

• ໃນຍຸກໂລກາພິວັດ, ເບິ່ງຄືວ່າມີການປະດິດຄິດຄົ້ນສິ່ງໃໝ່ໆຂຶ້ນມາຫລາຍແທ້ໆ, ມີບາງສິ່ງບາງຢ່າງກໍ່ເໜືອການຄາດຄິດທີ່ມີມາກ່ອນ. ແຕ່ອັນນັ້ນບໍ່ໄດ້ໝາຍຄວາມວ່າ ມັນເປັນໄປໄດ້ ໂດຍບໍ່ມີ

ການສືບທອດສິ່ງຍອດຍິ່ງ ແຫ່ງສະຕິປັນຍາຂອງຄົນລຸ້ນກ່ອນນັ້ນແຕ່ຢ່າງໃດ.

ອັນແຕກຕ່າງທີ່ສຸດໃນຍຸກນີ້ ແມ່ນການສືບທອດມີລັກສະນະກວ້າງຂວາງຫລາຍດ້ານ, ໄວວາ ແລະ ມີການເສີມຂະຫຍາຍແບບທະວີຄູນ. ມີຫຍັງເປັນປັດໄຈທີ່ກໍ່ໃຫ້ເກີດລັກສະນະຄືແນວນັ້ນ?

- ກ່ອນອື່ນແມ່ນການແຂ່ງຂັນເພື່ອເປັນຜູ້ນຳໜ້າ ຫລືບໍ່ກໍ່ເພື່ອຮັກສາອັນດັບ ໃນດ້ານຕ່າງໆຂອງປະເທດຕົນໄວ້ ເປັນຕົ້ນແມ່ນອັນດັບທາງດ້ານເສດຖະກິດ. ການແຂ່ງຂັນໄດ້ຈຳໃຫ້ຫລາຍໆປະເທດຕ້ອງທຸ້ມເທທຶນຮອນ ແລະ ເພີ່ມຄວາມເອົາໃຈໃສ່ຕໍ່ວຽກງານສຶກສາ ແລະ ກໍ່ສ້າງຄົນ, ວຽກງານຄົ້ນຄວ້າວິໄຈ ແລະ ການປະດິດຄິດຄົ້ນສິ່ງໃໝ່. ໃນນີ້ ຜູ້ໃດກໍ່ຖືສຳຄັນການຫັນໝາກຜົນຂອງສະຕິປັນຍາ ຫລືຜົນແຫ່ງການຄົ້ນຄວ້າວິໄຈ ແລະ ການປະດິດຄິດຄົ້ນສິ່ງໃໝ່ໆໃຫ້ກາຍເປັນສິນຄ້າໂດຍໄວ ເພື່ອໄດ້ຮັບລິຂະສິດກ່ອນໝູ່ ແລະ ສະຫງວນໄວ້ເປັນອັນສະເພາະ.

ຈາກນັ້ນ ການຜະລິດສິນຄ້າກໍ່ຖືກຈິດເປັນລິຂະສິດ ແລະ ກາຍເປັນພື້ນຖານໃຫ້ແກ່ລິຂະສິດທາງປັນຍາ; ເຮັດໃຫ້ສິນຄ້າຂາຍໄດ້ ແລະ ສະຕິປັນຍາກໍ່ຂາຍໄດ້ເຊັ່ນກັນ.

ເມື່ອການແຂ່ງຂັນຂາຍສິນຄ້າເພີ່ມຂຶ້ນທໍ່ໃດ, ສະຕິປັນຍາກໍ່ຍິ່ງມີຄ່າສູງຂຶ້ນທໍ່ນັ້ນ. ເມື່ອສິນຄ້າສະຕິປັນຍາມີຄ່າສູງຂຶ້ນທໍ່ໃດ ກໍ່ຍິ່ງຮຽກຮ້ອງໃຫ້ມີການປົກປ້ອງດີຂຶ້ນ. ດ້ວຍເຫດນີ້ເອງ ການປົກປ້ອງລິຂະ

ສິດທາງປັນຍາ ແລະ ລິຂະສິດຜະລິດສິນຄ້າຈຶ່ງມີລັກສະນະສາກົນ ແລະ ນັບມື້ນັບເຂັ້ມງວດກວດຂັນ.

• ການປົກປ້ອງລິຂະສິດ ໃນດ້ານໜຶ່ງມັນແມ່ນການປົກປ້ອງຕົນເອງ, ສ່ວນໃນອີກດ້ານໜຶ່ງ ມັນພັດແມ່ນການກີດກັ້ນຜູ້ອື່ນ ບໍ່ໃຫ້ສວຍໃຊ້ໝາກຜົນແຫ່ງສະຕິປັນຍາຂອງຕົນ ຫລື ນຳໄປລອກແບບ.

ດ້ານທີ່ສອງນີ້ແຫລະ ແມ່ນບັນຫາ ແລະ ເປັນສິ່ງທ້າທາຍສຳລັບຫລາຍໆປະເທດໃນໂລກ, ຕົ້ນຕໍແມ່ນປະເທດພວມພັດທະນາ-ດ້ອຍພັດທະນາ ວ່າເຮັດແນວໃດຈຶ່ງຈະມີເງື່ອນໄຂ, ມີກຳລັງແຮງ ເພື່ອແຂ່ງຂັນກັບປະເທດທີ່ພັດທະນາແລ້ວ ໃນດ້ານການຄົ້ນຄວ້າວິໄຈ ແລະ ປະດິດຄິດຄົ້ນສິ່ງໃໝ່ໄດ້; ຫລືວ່າເຮັດແນວໃດປະເທດເຫລົ່ານັ້ນຈຶ່ງຈະຫລີກກໍລະນີ "ຜະລິດລອກແບບ" ຫລື "ລະເມີດລິຂະສິດ" ຂອງປະເທດອື່ນໆໄດ້??

ຖ້າຫາກດຳເນີນການຄົ້ນຄວ້າ-ວິໄຈ ແລະ ດຳເນີນການຜະລິດດ້ວຍຕົນເອງ ເພື່ອໃຫ້ມີສິ່ງປະດິດໃໝ່ໆອອກມາແຂ່ງຂັນກັບປະເທດທີ່ພັດທະນາແລ້ວ ປະເທດພວມພັດທະນາຕ້ອງໃຊ້ຈ່າຍເງິນຢ່າງຫລວງຫລາຍ ເກີນກວ່າຈະແບກຫາບໄດ້; ຫລືຖ້າມີທຶນ ກໍ່ຍັງບໍ່ແນ່ວ່າຜະລິດສິນຄ້າອອກມາແລ້ວຈະຂາຍແຂ່ງກັບເຂົາໄດ້ຫລືບໍ່. ສົມມຸດວ່າ ຂອງທີ່ຜະລິດອອກມານັ້ນພໍໃຊ້ໄດ້ ແລະ ເປັນທີ່ຍອມຮັບຂອງຕະຫລາດ, ມັນກໍ່ຍັງບໍ່ແນ່ວ່າຈະຂາຍຕໍ່ໄປໄດ້ດົນຊ່ຳໃດ ເພາະວ່າອາດຈະຖືກ "ກຳຈັດ" ດ້ວຍການທຸ້ມຕະຫລາດກໍ່ເປັນໄດ້, ຊຶ່ງໃນກໍລະນີນີ້ປະເທດພວມພັດທະນາຫລາຍປະເທດບໍ່ມີແຮງພໍທີ່ຈະສູ້ໄດ້.

• ໃນຍຸກໂລກາພິວັດ ຄວາມຮູ້, ສະຕິປັນຍາ ແລະ ຄວາມປະດິດສ້າງເປັນສິ່ງທີ່ມີຄ່າທີ່ສຸດ. ສະນັ້ນ ການຊອກຫາ "ຄົນເກັ່ງ" ແລະ "ການຊື້" ເອົາຄົນເກັ່ງຈຶ່ງເປັນເລື່ອງທີ່ບໍ່ແປກປະຫລາດ. ປະເທດທີ່ພັດທະນາແລ້ວ ເຂົາເຈົ້າ**ບໍ່ເສຍດາຍເງິນທີ່ໃຊ້ເພື່ອດູດເອົາຍອດແຫ່ງພອນສະຫວັນ ຫລື ຍອດແຫ່ງສະຕິປັນຍາ** ຈາກປະເທດຕ່າງໆ ລວມທັງຈາກປະເທດພວມພັດທະນາໄປເຮັດວຽກຢູ່ປະເທດຂອງເຂົາເຈົ້າ.

ພ້ອມດຽວກັນນັ້ນ ປະເທດທີ່ພັດທະນາແລ້ວ ຍັງໄດ້ທຸ້ມເທງົບປະມານ ແລະ ກຳລັງສະຫມອງເຂົ້າໃສ່ການພັດທະນາຄົນ; ປັບປຸງ ແລະ ເພີ່ມທະວີການກໍ່ສ້າງ ແລະ ຍົກລະດັບຄົນຂອງປະເທດເຂົາເຈົ້າຂຶ້ນຢ່າງບໍ່ຢຸດຢັ້ງ.

• ດ້ວຍເຫດນີ້ ປະເທດອຸດສາຫະກຳຂະຫຍາຍຕົວ ຈຶ່ງເປັນຜູ້ຜູກຂາດຍອດແຫ່ງມັນສະຫມອງຂອງໂລກ ແລະ ຄວບຄຸມເຖິງ 97% ຂອງລິຂະສິດໃນໂລກ. ເມື່ອເປັນເຊັ່ນນັ້ນ ກໍ່ເຫັນແຈ້ງແລ້ວວ່າບັນຫາ ແລະ ສິ່ງທ້າທາຍສຳລັບປະເທດພວມພັດທະນາ-ດ້ອຍພັດທະນາ ແມ່ນຫນັກຫນາຊ່ຳໃດ!

ລວມຄວາມແລ້ວ ປະເທດພວມພັດທະນາ-ດ້ອຍພັດທະນາ ແມ່ນປະສົບກັບສິ່ງທ້າທາຍຮ້າຍແຮງທັງສອງດ້ານຄື: ໃນດ້ານຫນຶ່ງ ແມ່ນການເປີດເສລີໃຫ້ປະເທດອື່ນເຂົ້າມາແຂ່ງຂັນກັບຕົນເອງ ໃນເງື່ອນໄຂທີ່ຕົນເອງກໍ່ບໍ່ທັນມີກຳລັງແຮງ ແລະ ຄວາມສາມາດພຽງພໍສຳລັບການແຂ່ງຂັນນັ້ນ. ສ່ວນໃນດ້ານອື່ນອີກ ປະເທດພວມພັດທະນາ-ດ້ອຍພັດທະນາຊ້ຳພັດຖືກກີດກັ້ນໂດຍປະເທດທີ່ພັດທະນາແລ້ວ ດ້ວຍຫລາຍ

ວິທີການ ແລະ ມາດຕະການແຫ່ງລັດທິປົກປ້ອງຕົນເອງ, ຊຶ່ງເຮັດໃຫ້ສິນຄ້າຈາກປະເທດທີ່ພວມພັດທະນາ - ດ້ອຍພັດທະນາເຂົ້າໄປເຖິງຕະຫລາດພາຍໃນ ຂອງປະເທດທີ່ພັດທະນາແລ້ວໄດ້ຍາກທີ່ສຸດ.

<u>ສິ່ງທ້າທາຍອັນທີ່ສາມ</u>: **ການກອບໂກຍຜົນປະໂຫຍດຈາກການລົງທຶນຂອງບັນດາບໍລິສັດຂ້າມຊາດ ໃນປະເທດພວມພັດທະນາ ແລະ ການເພີ່ມຄວາມຫລຸດໂຕນກັນໃນດ້ານການພັດທະນາ.**

ໃນສະໄຫມກ່ອນ ບັນດາປະເທດຈັກກະພັດລ່າຫົວເມືອງຂຶ້ນໄດ້ເອົາທຶນ ແລະ ວັດຖຸອຸປະກອນຈຳນວນຫນຶ່ງເຂົ້າໄປປະເທດຫົວເມືອງຂຶ້ນ, ຈ້າງຄົນໃນປະເທດຫົວເມືອງຂຶ້ນຂຸດຄົ້ນເອົາຊັບພະຍາກອນ -ແຮ່ທາດທີ່ມີຄ່າ ແລ້ວຂົນຄືນໄປຂາຍໃຫ້ປະເທດເຈົ້າເມືອງຂຶ້ນດ້ວຍລາຄາຖືກໆ.

ຕັ້ງແຕ່ກາງສະຕະວັດທີ 20 ມານີ້ ການສົ່ງທຶນອອກໄປຕ່າງປະເທດ ໄດ້ມີການປ່ຽນແປງຕ່າງແຕ່ກ່ອນຫລາຍ. ການສົ່ງທຶນອອກໄປຕ່າງປະເທດ ສ່ວນໃຫຍ່ແມ່ນບໍລິສັດຂ້າມຊາດ ຫລື ນັກລົງທຶນຈາກປະເທດທີ່ພັດທະນາແລ້ວເປັນຜູ້ດຳເນີນການ ເພື່ອໄປຕັ້ງຖານການຜະລິດໃນຖານະເປັນບໍລິສັດໃນເຄືອຂ່າຍ ຫລື ບໍລິສັດລູກ.

ສະນັ້ນ ການສົ່ງທຶນອອກນອກ ຫລື ການໄປລົງທຶນຢູ່ຕ່າງປະເທດ ຈຶ່ງຕິດພັນກັບການສົ່ງອອກເຕັກໂນໂລຢີ ແລະ ເຄັດລັບທາງດ້ານການຜະລິດ. ການສົ່ງອອກເຕັກໂນໂລຢີ ແລະ ເຄັດລັບທາງດ້ານການຜະລິດນັ້ນ ເຖິງວ່າບໍ່ແມ່ນອັນທັນສະໄຫມທີ່ລ້ຳຫນ້າ, ແຕ່ກໍ່ບໍ່ແມ່ນອັນຫລ້າສະໄຫມທີ່ສຸດ. ມັນແມ່ນອັນທັນສະໄຫມພໍສົມຄວນ.

ການເອົາອັນທັນສະໄໝພໍສົມຄວນ ມາປະກອບເປັນຖານການຜະລິດນັ້ນ ຈຸດປະສົງຕົ້ນຕໍກໍ່ແມ່ນເພື່ອຍົກສະມັດຖະພາບການຜະລິດໃຫ້ສູງ ແລະ ຮັບປະກັນຄຸນນະພາບໃຫ້ໄດ້ມາດຕະຖານອັນຈຳເປັນ. ສ່ວນຈຸດປະສົງອັນໜຶ່ງອີກ ແມ່ນເພື່ອໃຫ້ການອຸທິດແຮງງານທີ່ມີລາຄາຖືກກວ່າ ສາມາດໃຫ້ຜົນຕອບແທນຊໍ່າກັນ ຫລື ເກືອບຊໍ່າກັບຢູ່ປະເທດຂອງບໍລິສັດແມ່.

ການໃຊ້ເຕັກໂນໂລຢີທີ່ທັນສະໄໝພໍສົມຄວນ ເພື່ອຍົກສະມັດຖະພາບການຜະລິດ ແລະ ຄຸນນະພາບຂອງຜະລິດຕະພັນນັ້ນ ຊ່ວຍໃຫ້ບັນດາບໍລິສັດຂ້າມຊາດ ໄດ້ຮັບຜົນປະໂຫຍດຢ່າງຫລວງຫລາຍ. ເພາະວ່າຢູ່ປະເທດພວມພັດທະນາ-ດ້ອຍພັດທະນາ ລາຄາແຮງງານຖືກກວ່າຕັ້ງ 2-3 ເທົ່າ, ພ້ອມນັ້ນ ລາຄາວັດຖຸດິບກໍ່ຖືກ, ພາສີອາກອນກໍ່ຕ່ຳ, ການສິ້ນເປືອງເຂົ້າໃນການຮັກສາສິ່ງແວດລ້ອມກໍ່ໜ້ອຍ, ສ່ວນລາຄາຂາຍສິ່ງສິນຄ້າສຳເລັດຮູບຊໍ່າພັດແມ່ນລາຄາສາກົນ.

ຍ້ອນແນວນັ້ນ ຍອດການຂາຍຜະລິດຕະພັນຂອງບັນດາບໍລິສັດຂ້າມຊາດຈຶ່ງມີມູນຄ່າມະຫາສານ; ຊຶ່ງບາງກໍລະນີກໍ່ມີຫລາຍກວ່າລວມຍອດຜະລິດພັນແຫ່ງຊາດ ຂອງປະເທດໃດປະເທດໜຶ່ງອີກຊ້ຳ ເຊັ່ນຕົວຢ່າງ: ຍອດມູນຄ່າການຂາຍຂອງບໍລິສັດເຊເນຣານ ໂມເຕີ (General Motors) ຂອງສະຫະລັດມີຫລາຍກວ່າ 120 ພັນລ້ານໂດລາ ຊຶ່ງຫລາຍລື່ນລວມຍອດມູນຄ່າຜະລິດພັນແຫ່ງຊາດ ຂອງອະດີດປະເທດຢູໂກສະລາວີອີກຊ້ຳ; ຫລືແມ່ນແຕ່ຍອດມູນຄ່າການຂາຍຂອງບໍລິສັດແນສເລ່ (Nestle) ກໍ່ມີຫລາຍກວ່າ 35 ພັນລ້ານໂດລາ

ສະຫະລັດ ຊຶ່ງລື້ນກາຍລວມຍອດຜະລິດພັນແຫ່ງຊາດຂອງປະເທດອີຣັກ.

* ເປັນອັນຈະແຈ້ງວ່າ, ການສົ່ງທຶນອອກນອກພ້ອມກັບການສົ່ງອອກເຕັກໂນໂລຢີ ແລະ ເຄັດລັບທາງດ້ານການຜະລິດ ແມ່ນຈຸດພິເສດແຕກຕ່າງຈາກການສົ່ງສິນຄ້າອອກນອກໃນສະໄຫມກ່ອນ. ແນ່ນອນປະເທດທີ່ຮັບເອົາການລົງທຶນຍ່ອມໄດ້ຮັບຜົນປະໂຫຍດ, ແຕ່ການສົ່ງທຶນອອກນອກ ແມ່ນປັດໄຈຫນຶ່ງທີ່ສຳຄັນ ໃນການສ້າງຄວາມລໍ້າລວຍໃຫ້ແກ່ບັນດາບໍລິສັດ "ຍັກໃຫຍ່" ຂ້າມຊາດ ກໍ່ຄືບັນດາປະເທດທີ່ເປັນເຈົ້າຂອງທຶນ.

ເຮັດແນວໃດ ຈຶ່ງຈະໄດ້ຮັບຜົນປະໂຫຍດທີ່ເຫມາະສົມ ແລະ ມີການພັດທະນາທີ່ຫມັ້ນຄົງ? ນັ້ນແຫລະແມ່ນບັນຫາ ແລະ ສິ່ງທ້າທາຍໃຫຍ່ອັນຫນຶ່ງ ສຳລັບປະເທດພວມພັດທະນາທີ່ມີນະໂຍບາຍເປີດກວ້າງທາງດ້ານເສດຖະກິດ, ດຶງດູດ ແລະ ສົ່ງເສີມການລົງທຶນຂອງຕ່າງປະເທດ.

★ ຍ້ອນວ່າປະເທດພວມພັດທະນາ-ດ້ອຍພັດທະນາບໍ່ທັນໄດ້ຮັບຜົນປະໂຫຍດທີ່ເຫມາະສົມ ຈາກການພົວພັນຮ່ວມມືທາງເສດຖະກິດກັບປະເທດທີ່ພັດທະນາແລ້ວ ເປັນຕົ້ນແມ່ນຈາກການພົວພັນຄ້າຂາຍ ແລະ ການລົງທຶນ, ປະເທດເຫລົ່ານັ້ນ ຈຶ່ງບໍ່ທັນສາມາດສ້າງບາດກ້າວທັນປ່ຽນອັນຕັ້ງຫນ້າໄດ້ເທື່ອໃນການພັດທະນາ. ຈາກນັ້ນ ຈຶ່ງເຮັດໃຫ້ຄວາມເລື່ອມລໍ້າ ການຫລຸດໂຕນກັນດ້ານການພັດທະນາລະຫວ່າງປະເທດທີ່ພັດທະນາແລ້ວ (ຊຶ່ງມີຈຳນວນບໍ່ຫລາຍພໍທີ່ໃດ) ກັບປະເທດ

ພວມພັດທະນາ-ດ້ອຍພັດທະນາ (ທີ່ມີຈຳນວນຫລາຍ) ນັບມື້ນັບເພີ່ມຂຶ້ນ.

- ເລີ່ມແຕ່ຊຸມປີ 1960 ເປັນຕົ້ນມາ, ອົງການສະຫະປະຊາຊາດໄດ້ປະກາດທົດສະວັດແຫ່ງການພັດທະນາ. ຫລັງຈາກນັ້ນ ກໍ່ໄດ້ມີການວາງມາດຕະຖານ ຫລື ດັດສະນີຫມາຍວັດແທກລະດັບການພັດທະນາຂອງປະເທດຕ່າງໆ.

- ເປັນເວລາຫລາຍປີມາແລ້ວ ທີ່ຄວາມຈິງອັນຫນ້າແປກໃຈຍັງຄົງຕົວຢູ່, ນັ້ນຄືລະດັບຫລຸດໂຕນກັນດ້ານການພັດທະນາລະຫວ່າງປະເທດທີ່ພັດທະນາແລ້ວ ກັບປະເທດພວມພັດທະນາ-ດ້ອຍພັດທະນານັບມື້ນັບຫ່າງກັນ.

ຄວາມຫລຸດໂຕນກັນນີ້ ສະແດງອອກເດັ່ນທີ່ສຸດໃນດ້ານການບໍລິໂພກ ຫລື ໃນດ້ານການກິນ-ການໃຊ້ຂອງພົນລະເມືອງ. ປະເທດທີ່ພັດທະນາແລ້ວມີປະຊາກອນພຽງແຕ່ 20% ຂອງປະຊາກອນໂລກ, ແຕ່ບໍລິໂພກຜົນຜະລິດທັງຫມົດຢູ່ໃນໂລກເຖິງ 86%. ໃນຂະນະດຽວກັນນັ້ນ ປະຊາກອນໂລກກວ່າ 820 ລ້ານຄົນພັດຍັງອຶດຫິວ, ໃນນັ້ນເກືອບ 800 ລ້ານແມ່ນປະຊາກອນຂອງປະເທດພວມພັດທະນາ-ດ້ອຍພັດທະນາ.

- ມີຫລາຍຄົນໄດ້ພະຍາຍາມຊອກຫາສາເຫດຂອງບັນຫາເພື່ອວາງວິທີການແກ້ໄຂທີ່ເຫມາະສົມ. ຈຳນວນຫນຶ່ງສະເຫນີວ່າປະເທດທີ່ພັດທະນາແລ້ວ ຕ້ອງໃຫ້ການຊ່ວຍເຫລືອປະເທດທີ່ພວມພັດທະນາ - ດ້ອຍພັດທະນາຫລາຍກວ່າເກົ່າ. ຄວາມຈິງເປັນແນວໃດ?

ໃນປີ 1992 ອັດຕາການຊ່ວຍເຫລືອຂອງປະເທດທີ່ພັດທະນາແລ້ວ ໃຫ້ແກ່ປະເທດພວມພັດທະນາ-ດ້ອຍພັດທະນາກວມເອົາ 0,33% ຂອງມູນຄ່າຍອດຜະລິດພັນແຫ່ງຊາດ ຂອງປະເທດທີ່ພັດທະນາແລ້ວ. ມາຮອດປີ 1998 (ຕໍ່ມາ 6 ປີ) ອັດຕາສ່ວນດັ່ງກ່າວໄດ້ຫລຸດລົງມາຢູ່ 0,23%, ຊຶ່ງເປັນອັດຕາທີ່ຕ່ຳກວ່າອົງການສະຫະປະຊາຊາດຄາດໝາຍໄວ້ 0,7%.

- ສົມມຸດວ່າ: ອັດຕາການຊ່ວຍເຫລືອໄດ້ບັນລຸຕາມຄາດໝາຍທີ່ອົງການສະຫະປະຊາຊາດວາງໄວ້, ແຕ່ການແກ້ໄຂສະພາບຄວາມເລື່ອມລ້ຳ - ຫລຸດໂຕນກັນບໍ່ແມ່ນຈະເຮັດໄດ້ງ່າຍ, ເພາະວ່າສາເຫດຂອງມັນໄດ້ຝັງເລິກຢູ່ໃນລະບຽບການພົວພັນລະຫວ່າງປະເທດ.

ລະບຽບການພົວພັນທີ່ເປັນຢູ່ໃນປັດຈຸບັນນີ້ ໄດ້ຜູກມັດບັນດາປະເທດພວມພັດທະນາ - ດ້ອຍພັດທະນາໃຫ້ຕິດຢູ່ກັບ "ວົງຈອນອຸບາດ" ແຫ່ງຄວາມບໍ່ສະເໝີພາບ ແລະ ຄວາມບໍ່ຍຸດຕິທຳໃນດ້ານການແລກປ່ຽນຊື້ຂາຍມາແຕ່ດົນນານແລ້ວ. ວົງຈອນແຫ່ງການເສຍປຽບຂອງປະເທດເຫລົ່ານີ້ ຕໍ່ປະເທດທີ່ພັດທະນາແລ້ວມີມາຕັ້ງແຕ່ສະໄໝເປັນຫົວເມືອງຂຶ້ນ. ແຕ່ມາໃນຍຸກໂລກາພິວັດນີ້ ວົງຈອນດັ່ງກ່າວຍິ່ງມີລັກສະນະ "ອຸບາດ" ເພີ່ມຂຶ້ນ **ຍ້ອນລະບົບການເງິນເສລີ ແລະ ບໍ່ມີເຂດແດນ, ຍ້ອນລະບົບການຄ້າເສລີທີ່ມີການກີດກັ້ນ.**

- ບົດຮຽນສົດໆຮ້ອນໆຈາກວິກິດການການເງິນຢູ່ອາຊີທີ່ເລີ່ມຈາກປະເທດໄທ ໃນປີ 1997 ນັ້ນໄດ້ຢັ້ງຢືນໃຫ້ເຫັນແຈ້ງແລ້ວວ່າ ພາຍໃຕ້ລະບົບການເຄື່ອນຍ້າຍເງິນຢ່າງເສລີ ແລະ ຢ່າງທັນທີທັນໃດ

ຍ່ອມເຮັດໃຫ້ "ນັກຄ້າເງິນເອົາກຳໄລ" ແລະ ປະເທດທີ່ມີກຳລັງແຮງດ້ານເງິນຕາຕ່າງປະເທດເໜືອກວ່າ ແລະ ມີລະບົບການຄຸ້ມຄອງເງິນຕາດີກວ່າຢູ່ໃນທ່າໄດ້ປຽບ ແລະ ໄດ້ຮັບຜົນປະໂຫຍດຢ່າງຫລວງຫລາຍ.

- ສົມມຸດວ່າ ປ່ອຍໃຫ້ມີການແຂ່ງຂັນຢ່າງເປັນທຳພາຍໃຕ້ເງື່ອນໄຂຂອງກົນໄກເສດຖະກິດເສລີ, ການຄ້າເສລີ ແລະ ການເງິນເສລີ ປະເທດທີ່ພັດທະນາແລ້ວກໍ່ຍັງເປັນຝ່າຍທີ່ມີທ່າດີ ແລະ ໄດ້ປຽບຢູ່ຄືເກົ່າ. ເພາະວ່າປະເທດເຫລົ່ານັ້ນມີປັດໄຈ-ເງື່ອນໄຂດີກວ່າ ເປັນຕົ້ນແມ່ນມີສະຖຽນລະພາບທາງການເມືອງ ແລະ ມີຄວາມເຂັ້ມແຂງທາງດ້ານເສດຖະກິດ-ການເງິນຫລາຍກວ່າ, ມີພະນັກງານວິຊາການທີ່ຜ່ານການກໍ່ສ້າງ ແລະ ຜ່ານວຽກຜ່ານງານທີ່ມີປະສົບການຫລາຍກວ່າ, ປະຊາຊົນໃນປະເທດເຫລົ່ານັ້ນ ກໍ່ມີລະດັບການສຶກສາສູງກວ່າ, ມີປະສົບການດ້ານການດຳລົງຊີວິດ ໃນເງື່ອນໄຂຂອງເສດຖະກິດເສລີດີກວ່າ, ເປັນຕົ້ນແມ່ນຮູ້ໃຊ້ຮູ້ຈ່າຍຢ່າງພໍເໝາະ ແລະ ຮູ້ປະຢັດ. ສິ່ງສຳຄັນກວ່ານັ້ນ ແມ່ນເຂົາເຈົ້າສາມາດໄດ້ຮັບຂໍ້ມູນຂ່າວສານຫລາຍກວ່າ.

ເພາະສະນັ້ນ, ມີແຕ່ການສ້າງລະບຽບການໃໝ່, ປະເທດພວມພັດທະນາ-ດ້ອຍພັດທະນາຈຶ່ງຈະມີເງື່ອນໄຂ ແລະ ຄວາມອາດສາມາດລຶບລ້າງຄວາມທຸກຍາກ ຜ່ານພົ້ນຄວາມດ້ອຍພັດທະນາ ແລະ ຄ່ອຍໆຄືບຄານຂຶ້ນສູ່ລະດັບການພັດທະນາທີ່ສູງກວ່າເກົ່າໄດ້.

• ບັນຫາໃຫຍ່ ແລະ ສິ່ງທ້າທາຍໃນທີ່ນີ້ ແມ່ນເຮັດແນວໃດປະເທດພວມພັດທະນາ-ດ້ອຍພັດທະນາຈະສ້າງໄດ້ກຳລັງ ເພື່ອຕໍ່ສູ້ໃຫ້ມີການປ່ຽນແປງທີ່ດີຂຶ້ນ ໃນລະບົບການພົວພັນລະຫວ່າງປະເທດ ເປັນຕົ້ນແມ່ນມີລະບຽບການໃຫມ່ທີ່ສະເຫມີພາບ ແລະ ເປັນທຳ. ຖ້າສິ່ງນັ້ນເປັນໄປບໍ່ໄດ້ ເຮັດແນວໃດຈຶ່ງຈະຄົງຕົວ ແລະ ຂະຫຍາຍຕົວກ້າວຂຶ້ນໄດ້ ພາຍໃຕ້ "ກົດເກນ" ແຫ່ງຍຸກໂລກາພິວັດ. ມີຜູ້ໃຫ້ຄະຕິວ່າ: **"ບໍ່ມີນັກຕໍ່ສູ້ຜູ້ຍິ່ງໃຫຍ່ຄົນໃດຈະທຳຮ້າຍຕົນເອງ ເພື່ອໃຫ້ຄູ່ຕໍ່ສູ້ທີ່ດ້ອຍກວ່າເປັນຜູ້ໄດ້ໄຊຊະນະ!"** ອັນນີ້ເປັນຄະຕິທີ່ຫນ້າຄິດ.

- ປະເທດພວມພັດທະນາ-ດ້ອຍພັດທະນາທັງຫລາຍ ມີແຕ່ຮີບຮ້ອນປັບປຸງ ແລະ ສ້າງຕົນເອງໃຫ້ເຂັ້ມແຂງຂຶ້ນເທື່ອລະກ້າວ ດ້ວຍກຳລັງແຮງ ແລະ ດ້ວຍລຳແຂ່ງຂອງຕົນເອງ, ສຶກສາຮຽນຮູ້ໃຫ້ຫລາຍ ແລະ ປັບຕົວໃຫ້ທັນກັບການປ່ຽນແປງຂອງໂລກ, ຫມົດທຸກຄົນໃນຊາດຕ້ອງມີຈິດສຳນຶກ ແລະ ມີການກະທຳທີ່ເປັນເອກະພາບ, ອົດທົນ, ດຸຫມັ່ນຈຶ່ງຈະພັດທະນາປະເທດຊາດໃຫ້ເຂັ້ມແຂງ ແລະ ມີສັກສີໃນສັງຄົມໂລກ. ອັນນີ້ ທັງເປັນບັນຫາ ແລະ ເປັນຫນ້າທີ່ທີ່ທ້າທາຍສຳລັບຜູ້ນຳ, ພະນັກງານ, ນັກວິຊາການ ແລະ ປະຊາຊົນຄົນທົ່ວໄປໃນປະເທດພວມພັດທະນາ-ດ້ອຍພັດທະນາທັງຫລາຍ.

**ສິ່ງທ້າທາຍອັນທີສີ່: ຄວາມບໍ່ຫມັ້ນຄົງທາງເສດຖະກິດ ແລະ ວິກິດການທີ່ສົ່ງຜົນກະທົບໄປຍັງປະເທດຕ່າງໆຢ່າງໄວວາ.**

• ໃນສະຕະວັດທີ່ 20 ຜ່ານມາ ໃນໂລກຂອງພວກເຮົາໄດ້ເກີດວິກິດການທາງເສດຖະກິດ ຫລື ການທົດຖອຍຄັ້ງໃຫຍ່ຫລາຍ

ເທື່ອ. ວິກິດການທາງເສດຖະກິດໃຫຍ່ໆແຕ່ລະຄັ້ງໄດ້ສົ່ງຜົນສະທ້ອນຮ້າຍແຮງ ແລະ ສ້າງຄວາມເສຍຫາຍຢ່າງຫລວງຫລາຍ. ແຕ່ວິກິດການທີ່ເກີດຂຶ້ນໃນເຄິ່ງທີ່ຫນຶ່ງຂອງສະຕະວັດທີ່ 20 ນັ້ນ, ແຕກຕ່າງຢ່າງສິ້ນເຊີງກັບວິກິດການທີ່ເກີດຂຶ້ນໃນຕອນທ້າຍຂອງສະຕະວັດ.

• ໃນເມື່ອກ່ອນ ສາເຫດອັນຕົ້ນຕໍຂອງການເກີດວິກິດການແມ່ນການຜະລິດ ແລະ ການຈຳຫນ່າຍ. ເວົ້າທົ່ວໄປ ແມ່ນຍ້ອນຜະລິດຫລາຍແລ້ວຂາຍບໍ່ໄດ້, ຈາກນັ້ນຈຶ່ງເກີດເສດຖະໄພ.

ການແຜ່ລາມຂອງວິກິດການບໍ່ໄວ ແລະ ບໍ່ກວ້າງພໍທີ່ໃດ (ຢູ່ໃນຂອບເຂດຂອງປະເທດໃດຫນຶ່ງ ຫລື ບາງປະເທດ); ຜົນກະທົບກໍ່ບໍ່ມີລັກສະນະຮອບດ້ານ.

• ແຕ່ວ່າ ວິກິດການທີ່ເກີດຂຶ້ນໃນທ້າຍສະຕະວັດແລ້ວນີ້ (ວິກິດການດ້ານການເງິນຢູ່ອາຊີ) ຊ້ຳພັດແຕກຕ່າງຢ່າງສິ້ນເຊີງກັບວິກິດການທີ່ເກີດຂຶ້ນຫລາຍຄັ້ງກ່ອນຫນ້ານັ້ນ.

- ອັນແຕກຕ່າງທີ່ສຳຄັນແມ່ນ ມັນບໍ່ເກີດຈາກຂົງເຂດເສດຖະກິດຕົວຈິງ (ຫລື ຂົງເຂດການຜະລິດ) ແຕ່ຫາກເກີດຈາກຂົງເຂດການເງິນ ແລະ ເງິນຕາ.

- ມັນເກີດຂຶ້ນແບບກະທັນຫັນ (ໂດຍບໍ່ຄາດຄິດມາກ່ອນ) ແລະ ແຜ່ລາມອອກໄປຢ່າງໄວວາຈົນຄວບຄຸມບໍ່ໄດ້, ເຊັ່ນໃນປີ 1997 ຈາກປະເທດໄທ ລາມໄປໃສ່ປະເທດອື່ນໆໃນອາຊີຕາວັນອອກສ່ຽງໃຕ້, ໄປຮອດເກົາຫລີໃຕ້, ຍີ່ປຸ່ນ; ຈາກນັ້ນກໍ່ຂ້າມທະວີບໄປຮອດລັດເຊຍ

ແລະ ອາເມລິກາລາຕິນ... ມັນແມ່ນວິກິດການຮ້າຍແຮງ ທີ່ກວມເອົາຂອບເຂດບໍລິເວນກວ້າງໃຫຍ່ໄພສານ.

- ຜົນກະທົບ ແລະ ການສ້າງຄວາມເສຍຫາຍມີລັກສະນະຮອບດ້ານ, ເຂົ້າເຖິງທຸກລະດັບ: ທັງຜູ້ຮັ່ງ ແລະ ຜູ້ທຸກ, ທັງຜູ້ນ້ອຍ ແລະ ຜູ້ໃຫຍ່, ທັງຂ້າລາຊະການ ແລະ ກຳມະກອນ; ທັງປັນຍາຊົນ ແລະ ຜູ້ຂໍທານ...

ຍ້ອນຫຍັງຈຶ່ງເປັນແນວນັ້ນ, ວິກິດການທີ່ເກີດຂຶ້ນໃຫ້ບົດຮຽນຫຍັງແດ່ແກ່ພວກເຮົາ?

1. ກ່ອນອື່ນໝົດ ແມ່ນຍ້ອນວ່າການຂະຫຍາຍຕົວຂອງເສດຖະກິດ ໃນຫລາຍປະເທດບໍ່ແມ່ນຢູ່ບົນພື້ນຖານຂະແໜງການຜະລິດວັດຖຸ, ແຕ່ຫາກແມ່ນການການຂະຫຍາຍຕົວບົນພື້ນຖານຂອງການຊື້-ຂາຍຫຸ້ນ; ຂະຫຍາຍຕົວຍ້ອນການເກງກຳໄລຈາກການຊື້-ຂາຍ ແລະ ປັ່ນປ່ວນອັດຕາແລກປ່ຽນ. ໃນໄລຍະ 20 ປີຫລັງມານີ້ ການຄ້າຢູ່ໃນໂລກຂະຫຍາຍຕົວໂດຍສະເລ່ຍໃນລະດັບ 4%, ແຕ່ຂະນະດຽວກັນນັ້ນ ການໃຊ້ຈ່າຍເງິນໄດ້ເພີ່ມຂຶ້ນເຖິງ 48 ເທົ່າ. ຕົວເລກນີ້ ຊີ້ໃຫ້ເຫັນວ່າການຜະລິດສິນຄ້າ (ເປັນວັດຖຸ) ເພື່ອນຳມາຊື້ຂາຍກັນໃນໂລກນີ້ເພີ່ມຂຶ້ນບໍ່ພໍເທົ່າໃດ, ແຕ່ໃນທາງກົງກັນຂ້າມ ປະລິມານເງິນທີ່ໝູນວຽນຢູ່ໃນໂລກພັດເພີ່ມຂຶ້ນຢ່າງຫລວງຫລາຍພາຍມາກ.

ອັນນີ້ ແມ່ນປັດໄຈສຳຄັນຢ່າງໜຶ່ງທີ່ເຮັດໃຫ້ເສດຖະກິດຂາດຄວາມໝັ້ນຄົງ ເພາະມັນແມ່ນການຂະຫຍາຍຕົວແບບຈອມປອມ ຫລື ແບບ "ຟອງສະບູ່". ຫລືເວົ້າອີກຢ່າງໜຶ່ງ ແມ່ນຍ້ອນຈຳນວນເງິນ

ເພີ່ມຫລາຍເກີນໄປ, ຫລາຍກວ່າມູນຄ່າຕົວຈິງຂອງສິນຄ້າ ຈຶ່ງເຮັດໃຫ້ເສດຖະກິດຂາດຄວາມສົມດູນ ແລະ ເກີດວິກິດງ່າຍ, ຊຶ່ງອັນນີ້ໄດ້ເປັນຊ່ອງຫວ່າງໃຫ້ພວກນັກຄ້າເງິນ ນຳເອົາເງິນສ່ວນທີ່ເກີນນັ້ນໄປປັ່ນປ່ວນເອົາກຳໄລ.

2. ຍ້ອນວ່າຜູ້ໄປລົງທຶນໃນປະເທດຕ່າງໆນັ້ນ ແມ່ນນັກລົງທຶນກຸ່ມດຽວກັນ ທີ່ໄປຈາກປະເທດສະຫະລັດອາເມລິກາ, ສະຫະພາບຢູລົບ, ຍີ່ປຸ່ນ... ຫລືເວົ້າຢ່າງຫນຶ່ງ ແມ່ນນາຍທຶນຜູ້ດຽວກັນໄປລົງທຶນຢູ່ຫລາຍປະເທດ.

ກຸ່ມນາຍທຶນ ຫລື ກຸ່ມຜູ້ລົງທຶນຈາກຕ່າງປະເທດເຫລົ່ານີ້ ເມື່ອໂຮມເຂົ້າກັນແລ້ວ ເຂົາເຈົ້າຈະມີກຳລັງແຮງພໍສົມຄວນໃນການກຳນົດ **ຊີບພະຈອນເສດຖະກິດ** ຂອງປະເທດທີ່ເຂົາເຈົ້າໄປລົງທຶນນັ້ນ. ເຂົາເຈົ້າມີຄວາມສາມາດ ເຮັດໃຫ້ຊີບພະຈອນເສດຖະກິດຂອງປະເທດບ່ອນລົງທຶນເຕັ້ນຊ້າ ຫລື ເຕັ້ນໄວກໍ່ໄດ້, ຫລື ແມ່ນແຕ່ໃຫ້ຢຸດເຕັ້ນເລີຍກໍ່ອາດສາມາດເຮັດໄດ້.

ຍ້ອນແນວນັ້ນເອງ, ໃນເມື່ອຢູ່ປະເທດໃດຫນຶ່ງເກີດມີສະພາບທີ່ເຮັດໃຫ້ກຸ່ມຜູ້ລົງທຶນຂາດຄວາມເຊື່ອຫມັ້ນ ຫລື ເກີດມີຄວາມສ່ຽງຕໍ່ຜົນປະໂຫຍດຂອງເຂົາເຈົ້າ, **ເຂົາເຈົ້າຈະຖອນທຶນອອກໄປໃນທັນທີທັນໃດ**, ຊຶ່ງປະເທດບ່ອນລົງທຶນຍ່ອມໄດ້ຮັບຜົນສະທ້ອນຢ່າງຮ້າຍແຮງ. ເຫດການເຊັ່ນນັ້ນ ອາດແຜ່ລາມຕໍ່ໆກັນໄປສູ່ປະເທດໃກ້ຄຽງຢ່າງໄວວາ ບໍ່ຕ່າງຫຍັງກັບການລົ້ມຂອງຫມາກ "ໂດມິໂນ", ເພາະວ່າຢູ່ປະເທດເຫລົ່ານັ້ນ ກໍ່ແມ່ນຜູ້ລົງທຶນກຸ່ມດຽວກັນດຳເນີນກິດຈະການຢູ່.

3. ຍ້ອນປະເທດບ່ອນລົງທຶນວາງນະໂຍບາຍທີ່ຄ້າຍຄືກັນ ເພື່ອດຶງດູດຜູ້ລົງທຶນ ຫລື ບໍລິສັດຂອງຕ່າງປະເທດ. ບາງຄັ້ງບໍ່ພຽງແຕ່ວາງຄ້າຍຄືກັນ, ແຕ່ຫາກຍັງແຂ່ງຂັນກັນໃຫ້ສິດທິ ແລະ ຜົນປະໂຫຍດແກ່ຜູ້ລົງທຶນຕື່ມອີກ. ຍ້ອນວ່າປະເທດພວມພັດທະນາຫລາຍປະເທດລ້ວນແຕ່ຕ້ອງການທຶນ, ຈຶ່ງເຮັດໃຫ້ຜູ້ລົງທຶນ ຫລື ບໍລິສັດຕ່າງປະເທດຍູ້ຖ່າງເລືອກວ່າ ໄປລົງທຶນຢູ່ບ່ອນໃດຈະດີກວ່າ ຫລື ມີຜົນປະໂຫຍດຫລາຍກວ່າ.

• ການແຂ່ງຂັນຂອງປະເທດບ່ອນລົງທຶນ ໄດ້ນຳໄປສູ່ການໄຂທາງໃຫ້ແກ່ຜູ້ທີ່ຈະລົງທຶນມີທາງເລືອກ ແລະ ສາມາດສະເຫນີເງື່ອນໄຂຕ່າງໆໄດ້ຫລາຍຂຶ້ນ, ເປັນຕົ້ນແມ່ນໃຫ້ປ່ຽນແປງນະໂຍບາຍຂອງລັດຖະບານ ໃນດ້ານການຄຸ້ມຄອງກະແສໄຫລເຂົ້າ-ໄຫລອອກຂອງທຶນໃຫ້ເສລີຫລາຍຂຶ້ນ.

ການເປີດເສລີທາງການເງິນ ຫລື ການເປີດປະຕູໃຫ້ທຶນໄຫລເຂົ້າ-ໄຫລອອກໄດ້ຢ່າງເສລີນີ້ເອງ ໄດ້ເປັນຊ່ອງຫວ່າງອັນສຳຄັນ ສຳລັບການແຊກເຂົ້າຂອງບັນດານັກສວຍໂອກາດເກງກຳໄລ, ນັກລົງທຶນຈອມປອມ, ນັກປັ່ນປ່ວນອັດຕາແລກປ່ຽນທັງຫລາຍ ເພື່ອກອບໂກຍເອົາຜົນປະໂຫຍດຈາກປະເທດບ່ອນລົງທຶນ.

♦ ທັງຫມົດທີ່ກ່າວມາ ລ້ວນແຕ່ເປັນບັນຫາ ແລະ ສິ່ງທ້າທາຍໃຫຍ່ສຳລັບຫລາຍໆປະເທດ. ໂດຍສະເພາະແມ່ນເຮັດແນວໃດຈຶ່ງຈະດຶງດູດໄດ້ຜູ້ສົນໃຈ ຫລື ບໍລິສັດໃຫຍ່ໆຂອງໂລກ ໃຫ້ມາລົງທຶນຢູ່ປະເທດຂອງຕົນ. ແຕ່ພ້ອມກັນນັ້ນ ກໍ່ເປັນຫ່ວງວ່າ ເຮັດແນວໃດຈຶ່ງຈະ

ຮັກສາສະຖຽນລະພາບ ແລະ ການເຕີບໂຕທາງດ້ານເສດຖະກິດໄວ້ໄດ້ຢ່າງໜັ້ນຄົງ ແລະ ຍືນຍົງ; ສຳຄັນໄປກວ່ານັ້ນ ແມ່ນເຮັດແນວໃດຈຶ່ງຈະໃຫ້ປະເທດຂອງຕົນ ໄດ້ຮັບຜົນປະໂຫຍດທີ່ເໝາະສົມຈາກນະໂຍບາຍດຶງດູດ ແລະ ສົ່ງເສີມການລົງທຶນຂອງຕ່າງປະເທດ, ຫາກບໍ່ແມ່ນມີແຕ່ເສຍ.

**<u>ສິ່ງທ້າທາຍອັນທີຫ້າ</u>: ການໃຊ້ກຳລັງ ແລະ ຖານະບົດບາດທີ່ເໜືອກວ່າ ເພື່ອປົກປ້ອງ ແລະ ສະແຫວງຫາຜົນປະໂຫຍດທາງເສດຖະກິດ.**

ໃນສະໄໝກ່ອນ ການໃຊ້ກຳລັງອາວຸດ ແລະ ກຳລັງທະຫານແມ່ນເພື່ອປາບປາມ, ຍຶດຄອງ ແລະ ປຸ້ນສະດົມເອົາຊັບພະຍາກອນ ແລະ ສິ່ງທີ່ມີຄ່າ; ຈາກນັ້ນ ກໍ່ເຂົ້າໄປປົກຄອງໂດຍກົງ.

ໃນສະໄໝໂລກາພິວັດ, ມີປະເທດຈຳນວນໜຶ່ງໄດ້ເສີມສ້າງກຳລັງທາງທະຫານ ແມ່ນເພື່ອເປັນປັດໄຈເສີມສ້າງຄວາມເຂັ້ມແຂງທາງການເມືອງ-ການທູດ, ລວມທັງເພື່ອປົກປ້ອງ ແລະ ສະແຫວງຫາຜົນປະໂຫຍດທາງເສດຖະກິດ. ສະນັ້ນຈຶ່ງບໍ່ແມ່ນເລື່ອງແປກ ທີ່ຫລາຍໆປະເທດໃນໂລກໄດ້ໃຊ້ເງິນຢ່າງຫລວງຫລາຍ ເພື່ອຈຸດປະສົງທາງດ້ານການທະຫານ ຊຶ່ງລວມແລ້ວໃນປີໜຶ່ງ ມີຈຳນວນກວ່າ 800 ຕື້ໂດລາສະຫະລັດ.

• ການໃຊ້ກຳລັງທະຫານ ແລະ ອາວຸດຍຸດໂທປະກອນທີ່ທັນສະໄໝສາມາດເກີດຂຶ້ນຢູ່ບໍລິເວນໃດກໍ່ໄດ້ ແລະ ຍາມໃດກໍ່ໄດ້ ຖ້າ

ຫາກວ່າຢູ່ບ່ອນນັ້ນເກີດມີ ໄພຂົ່ມຂູ່ ຫລື ໄພຄຸກຄາມຕໍ່ຜົນປະໂຫຍດ ຕົ້ນຕໍ ຫລື ຜົນປະໂຫຍດເປັນຕາຍ.

ເພື່ອປົກປ້ອງຜົນປະໂຫຍດເປັນຕາຍ, ການໃຊ້ຍຸດທະວິທີທາງການທູດ ປະສົມປະສານໄປກັບການໃຊ້ກຳລັງທາງທະຫານ ກໍ່ເປັນເລື່ອງປົກກະຕິ. ໂດຍທົ່ວໄປ ການທູດຈະນຳໜ້າການທະຫານ, ແຕ່ແມ່ນການທູດແບບເຈົ້າອຳນາດທີ່ໃຊ້ການນາບຂູ່ ຫລື ການກົດໜີບຕ່າງໆນາໆໄປກ່ອນ.

ໃນຍຸກໂລກາພິວັດທາງເສດຖະກິດ, ຂໍ້ສະເໜີຂອງຜູ້ທີ່ເຂັ້ມແຂງກວ່າ, ຜູ້ທີ່ຮັ່ງມີກວ່າມັກຈະຖືກຍອມຮັບໃນການເຈລະຈາລະຫວ່າງປະເທດ; ສ່ວນເຫດຜົນຂອງຜູ້ອ່ອນນ້ອຍ ແລະ ຄວາມເປັນທຳນັ້ນສ່ວນຫລາຍຈະຖືກ "ຖົມ" ໄປດ້ວຍການປົກປ້ອງຜົນປະໂຫຍດຂອງຜູ້ທີ່ເຂັ້ມແຂງກວ່າ.

♦ ການໃຊ້ອິດທິພົນຄອບງຳອົງການສຳຄັນໆລະຫວ່າງຊາດ **ເພື່ອສະແຫວງຫາຜົນປະໂຫຍດກໍ່ເປັນສິ່ງທ້າທາຍອັນສຳຄັນ.**

- ເປັນທີ່ຮູ້ກັນດີວ່າ, ເມື່ອການພົວພັນຮ່ວມມືລະຫວ່າງປະເທດນັບມື້ນັບເປີດກວ້າງອອກ ໄດ້ກໍ່ໃຫ້ເກີດອົງການສຳຄັນຫລາຍອົງການຢູ່ໃລະດັບພາກພື້ນ ແລະ ໃນໂລກເຊັ່ນ: ທະນາຄານໂລກ, ກອງທຶນການເງິນລະຫວ່າງປະເທດ (IMF), ອົງການການຄ້າໂລກ (WTO), ທະນາຄານພັດທະນາແຫ່ງອາຊີ (ADB) ແລະ ອື່ນໆອີກ.

ຄວາມຈິງ ການຕັ້ງອົງການເຫລົ່ານີ້ຂຶ້ນມາແມ່ນຄວາມຈຳເປັນ. ຕົວຢ່າງ: ການຕັ້ງທະນາຄານໂລກກໍ່ມີຈຸດປະສົງເພື່ອຊ່ວຍເຫລືອຟື້ນຟູ

ບູລະນະ ແລະ ພັດທະນາບັນດາປະເທດສະມາຊິກ ດ້ວຍການສະໜອງທຶນໃຫ້ ເພື່ອດຳເນີນໂຄງການດ້ານການຜະລິດ-ຂະຫຍາຍເສດຖະກິດ ພາຍຫລັງສົງຄາມໂລກຄັ້ງທີ 2. ພ້ອມນັ້ນ ກໍ່ສົ່ງເສີມການຄ້າລະຫວ່າງປະເທດ ໃຫ້ຂະຫຍາຍຕົວຢ່າງເປັນລະບົບໃນໄລຍະຍາວທັງຮັບປະກັນດູນຊຳລະ ລະຫວ່າງປະເທດເປັນໄປຢ່າງມີສະຖຽນລະພາບ. ຍ້ອນແນວນັ້ນ, ເວລາກໍ່ຕັ້ງເພິ່ນຈຶ່ງເອີ້ນວ່າທະນາຄານເພື່ອການບູລະນະ ແລະ ການພັດທະນາ.

ອັນນັ້ນແມ່ນວັດຖຸປະສົງ. ແຕ່ໃນການເຄື່ອນໄຫວຕົວຈິງ ທຸກຢ່າງບໍ່ແມ່ນຈະເປັນໄປຕາມວັດຖຸປະສົງທີ່ວາງໄວ້ທັງຫມົດ. ບໍ່ແມ່ນແຕ່ທະນາຄານໂລກເທົ່ານັ້ນ, ອົງການອື່ນໆກໍ່ບໍ່ສາມາດເຄື່ອນໄຫວ ຕາມວັດຖຸປະສົງຂອງຕົນໄດ້ທັງຫມົດເຊັ່ນດຽວກັນ, ຍ້ອນວ່າລະບົບການບໍລິຫານ ແລະ ກົນໄກການຕົກລົງບັນຫາຍັງຢູ່ພາຍໃຕ້ການຄອບງຳຫລື ພາຍໃຕ້ອິດທິພົນຂອງປະເທດສະມາຊິກຜູ້ທີ່ຖືຫຸ້ນຫລາຍກວ່າຫມູ່. ຫມາຍຄວາມວ່າ, ປະເທດໃດໄດ້ອອກທຶນປະກອບຫຸ້ນຫລາຍທໍ່ໃດ, ປະເທດນັ້ນກໍ່ມີບົດບາດຄອບງຳທີ່ມີລັກສະນະຕັດສິນ.

ເມື່ອເປັນເຊັ່ນນັ້ນ, ການຈະໃຫ້ທຶນແກ່ໂຄງການໃດກໍ່ຕາມຂອງປະເທດສະມາຊິກ, ຖ້າຫາກບໍ່ໄດ້ຮັບ "ໄຟຂຽວ" ຈາກປະເທດທີ່ມີຫຸ້ນຄອບງຳແລ້ວ ມັນກໍ່ເປັນໄປບໍ່ໄດ້. ການ "ໃຫ້" ຫລື "ບໍ່ໃຫ້" ໃນທີ່ນີ້ມັນຂຶ້ນກັບ "ຜົນປະໂຫຍດ" ນັ້ນເອງ, ຊຶ່ງໃນນັ້ນລວມທັງຜົນປະໂຫຍດທາງເສດຖະກິດ, ການເມືອງ ແລະ ການທະຫານ.

ຈາກບ່ອນນີ້, ນັກເສດຖະສາດ, ນັກຄົ້ນຄວ້າຈຳນວນໜຶ່ງຈຶ່ງໃຫ້ຂໍ້ສະຫລຸບວ່າ: ການໃຊ້ອິດທິພົນ, ບົດບາດເຂົ້າຄອບງຳ-ບັນຊາອົງການການເງິນ ແລະ ເສດຖະກິດຂອງໂລກເຊັ່ນ: ທະນາຄານໂລກ, ກອງທຶນການເງິນລະຫວ່າງປະເທດ, ອົງການການຄ້າໂລກ ແລະ ອື່ນໆ ແມ່ນລັກສະນະພິເສດຢ່າງໜຶ່ງຂອງລັດທິຈັກກະພັດທາງເສດຖະກິດແຫ່ງຍຸກໂລກາພິວັດ.

ເມື່ອຄວາມຈິງໄດ້ສະແດງອອກຄືແນວນັ້ນ, ການພັດທະນາໄປສູ່ຈຸດໝາຍແຫ່ງຄວາມເປັນເອກະລາດ ແລະ ເປັນເຈົ້າຕົນເອງ ຂອງບັນດາປະເທດພວມພັດທະນາ-ດ້ອຍພັດທະນາ ຈຶ່ງພົບກັບສິ່ງທ້າທາຍທີ່ໜັກໜ່ວງ.

<u>ສິ່ງທ້າທາຍອັນທີ່ໜຶ່ງ</u>: **ການເຊື່ອມຕົວເຂົ້າມາຂອງວັດທະນະທຳ ແລະ ຄ່ານິຍົມຈາກພາຍນອກ ແລ້ວເຮັດໃຫ້ສູນເສຍຄວາມເປັນເອກະລັກຂອງວັດທະນະທຳແຫ່ງຊາດ ແລະ ສູນເສຍອັນທີ່ເປັນມູນເຊື້ອຂອງຊາດ.**

✷ ຫລາຍປີມາແລ້ວ ທີ່ໂລກຂອງພວກເຮົາໄດ້ຖືກຂະໜານນາມໃຫ້ເປັນໂລກແຫ່ງທຸລະກິດ. ໝາຍຄວາມວ່າທຸລະກິດໄດ້ເຂົ້າສູ່ສັງຄົມ ແລະ ກາຍເປັນສ່ວນປະກອບທີ່ຂາດບໍ່ໄດ້ແຫ່ງການດຳລົງຊີວິດຂອງຄົນຈຳນວນຫລວງຫລາຍ ໃນປະເທດຕ່າງໆ.

- ໃນເມື່ອກ່ອນ ບັນດາປະເທດເຈົ້າເມືອງຂຶ້ນໄດ້ນຳເອົາວັດທະນະທຳ ແລະ ແບບດຳລົງຊີວິດຂອງຕົນເຂົ້າໄປແຜ່ຜ່າຍໃນປະເທດທີ່ເປັນເມືອງຂຶ້ນ ດ້ວຍການຕັ້ງໂຮງຮຽນຂຶ້ນ ແລ້ວເອົາຄົນຈຳນວນ

ໜຶ່ງມາຮຽນພາສາ, ວັນນະຄະດີ ແລະ ວັດທະນະທຳຄວບຄູ່ໄປກັບການຮຽນວິຊາອື່ນໆ. ພ້ອມນັ້ນ ກໍໃຊ້ລະບົບການບໍລິຫານ, ການປົກຄອງ ແລະ ລະບຽບພິທີການຕ່າງໆເພື່ອໃຫ້ຄົນໃນປະເທດທົ່ວເມືອງຂຶ້ນໄດ້ຮຽນຮູ້ ແລະ ຮັບເອົາແບບດຳລົງຊີວິດ, ຄ່ານິຍົມຂອງຕົນ. ເວົ້າລວມແລ້ວ, ການແຜ່ຜາຍໃນສະໄໝນັ້ນ ແມ່ນເຮັດແບບທາງກົງເປັນຕົ້ນຕໍ, ສ່ວນການໃຊ້ວິທີແບບທາງອ້ອມທີ່ຕິດພັນກັບການທຸລະກິດຍັງມີໜ້ອຍ.

- ໃນສະໄໝໂລກາພິວັດທາງເສດຖະກິດນີ້, ການໃຊ້ວິທີແບບທາງກົງມີບົດບາດໜ້ອຍລົງ ແຕ່ການໃຊ້ວິທີທາງອ້ອມພັດເພີ່ມຂຶ້ນ. ປັດໄຈສຳຄັນທີ່ພາໃຫ້ການແຜ່ຜາຍວັດທະນະທຳ, ແບບດຳລົງຊີວິດ ແລະ ຄ່ານິຍົມດຳເນີນໄປໄດ້ຢ່າງກວ້າງຂວາງໂດຍທາງອ້ອມແມ່ນການທຸລະກິດ, ການໂຄສະນາທາງສື່ມວນຊົນ, ການແລກປ່ຽນຂໍ້ມູນຂ່າວສານ, ການທ່ອງທ່ຽວ...

ປັດໄຈຕ່າງໆເຫລົ່ານີ້ເຄື່ອນໄຫວຢ່າງເປັນລະບົບ ຕິດພັນກັນ ແລະ ຊ່ວຍຊູກັນ. **ຕົວຢ່າງ**: ວົງການທຸລະກິດເຄື່ອງດື່ມ ແລະ ອາຫານຍີ່ຫໍ້ດັງໆ ຂອງຕ່າງປະເທດລ້ວນແຕ່ຕິດພັນກັບການໂຄສະນາຢ່າງກວ້າງຂວາງ, ດ້ວຍເນື້ອໃນ ແລະ ສີສັນທີ່ຫລາກຫລາຍຜ່ານສື່ຕ່າງໆຢ່າງເປັນປະຈຳ. ການໂຄສະນາຜ່ານສື່ຕ່າງໆ ເປັນປັດໄຈກະຕຸ້ນຄວາມຕ້ອງການຂອງຄົນ, ທັນປ່ຽນຄວາມມັກ ຄວາມນິຍົມຂອງຄົນໄປເທື່ອລະເລັກ-ເທື່ອລະນ້ອຍຈົນກາຍເປັນຄວາມເຄີຍຊິນ ແລະ ແບບດຳລົງຊີວິດໃນທີ່ສຸດ.

ສະນັ້ນຈຶ່ງອາດເວົ້າໄດ້ວ່າ ໃນຍຸກໂລກາພິວັດນີ້ ສິນຄ້າ, ການທຸລະກິດທີ່ຕິດພັນກັບການໂຄສະນາຢ່າງມີສີສັນ ແລະ ປະດິດສ້າງໄດ້ກາຍເປັນສ່ວນປະກອບອັນສຳຄັນ ຂອງການແຜ່ຜາຍພາສາ, ວັດທະນະທຳ, ແບບດຳລົງຊີວິດ ແລະ ຄ່ານິຍົມຂອງປະເທດໜຶ່ງໄປສູ່ປະເທດອື່ນໆ.

ການແຜ່ຜາຍດັ່ງກ່າວນັ້ນ ສາມາດເຮັດໃຫ້ຫລາຍປະເທດຕ້ອງສູນເສຍຄວາມເປັນເອກະລັກຂອງຊາດ ທາງດ້ານວັດທະນະທຳ ແລະ ມູນເຊື້ອອັນດີງາມຂອງຕົນໄປເທື່ອລະເລັກ, ເທື່ອລະນ້ອຍ; ຈົນໃນທີ່ສຸດແລ້ວ ກໍ່ກາຍເປັນ "ສາກົນ"!

- ຈາກນີ້ຈຶ່ງເຫັນໄດ້ຈະແຈ້ງວ່າ ການເຊື່ອມເສດຖະກິດເຂົ້າກັບບັນດາປະເທດໃນພາກພື້ນ ແລະ ໃນໂລກນັ້ນ ຍ່ອມພາໃຫ້ເກີດມີການແລກປ່ຽນຮຽນຮູ້ ກ່ຽວກັບວັດທະນະທຳ ແລະ ແບບດຳລົງຊີວິດຂອງກັນແລະກັນ. ການຮັກສາຄວາມເປັນເອກະລັກທາງດ້ານວັດທະນະທຳ ແລະ ສິ່ງທີ່ເປັນມູນເຊື້ອຂອງຊາດບໍ່ໃຫ້ເສື່ອມສູນ ແມ່ນບັນຫາໃຫຍ່ທີ່ມີລັກສະນະທ້າທາຍສຳລັບຊາດຕ່າງໆ.

<u>ສິ່ງທ້າທາຍອັນທີເຈັດ</u>: ການສ້າງຄວາມເຊື່ອມໂຊມແກ່ສະພາບແວດລ້ອມ ແລະ ການກາຍເປັນບ່ອນຖິ້ມ "ຂີ້ເຫຍື້ອເຕັກໂນໂລຢີ".

ການພັດທະນາຢູ່ປະເທດຕ່າງໆໃນຊຸມທົດສະວັດຫລັງມານີ້ ໄດ້ສ້າງຄວາມຈະເລີນກ້າວໜ້າ ແລະ ຄວາມຢູ່ດີກິນດີທີ່ໜ້າພາກ

ພູມໃຈ. ແຕ່ຄຽງຄູ່ກັນນັ້ນ ກໍ່ໄດ້ສ້າງບັນຫາຫລາຍຢ່າງທີ່ໜ້າເປັນຫ່ວງ ສຳລັບບັນດາປະຊາຊາດ.

- ການພັດທະນາໃນດ້ານໜຶ່ງ ແມ່ນການປະດິດຄິດຄົ້ນ ແລະ ສ້າງສິ່ງໃໝ່ໆຂຶ້ນ ເພື່ອສະໜອງຕອບຄວາມຕ້ອງການຂອງຄົນເຮົາ. ສ່ວນໃນດ້ານອື່ນອີກ ການພັດທະນາຊໍ້າພັດແມ່ນການຂຸດຄົ້ນ-ນຳໃຊ້ແຫລ່ງຊັບພະຍາກອນຢ່າງຫລວງຫລາຍ, ເຮັດໃຫ້ແຫລ່ງຊັບພະຍາກອນທີ່ມີໃນທຳມະຊາດນັບມື້ບົກແຫ້ງ ແລະ ໝົດໄປ.

- ໃນຍຸກໂລກາພິວັດ ຊຶ່ງມີການແຂ່ງຂັນເສດຖະກິດເປັນເອກະລັກທີ່ພົ້ນເດັ່ນນັ້ນ ໄດ້ຍູ້ໃຫ້ບັນດາປະເທດ ແລະ ບໍລິສັດຂ້າມຊາດຕ້ອງສະແຫວງຫາແຫລ່ງວັດຖຸດິບ (ຊັບພະຍາກອນ) ທີ່ມີລາຄາຖືກ ແລະ ຊອກຫາບ່ອນທີ່ຕ້ອງໃຊ້ຈ່າຍ ຫລື ເສຍຄ່າຮັກສາສະພາບແວດລ້ອມໜ້ອຍ ເປັນຖານການຜະລິດ-ທຸລະກິດຂອງຕົນ. ອັນນີ້ແມ່ນສິ່ງທີ່ເປັນໄປຕາມກົດເກນ!

ໃນຂະນະທີ່ປະຊາຊົນ ຂອງບັນດາປະເທດທີ່ພັດທະນາແລ້ວດຳເນີນການຕໍ່ສູ້ຢ່າງຂະຫຍັນຂັນແຂງ ແລະ ເປັນຂະບວນອັນກວ້າງຂວາງ ເພື່ອໃຫ້ລັດຖະບານຕ້ອງອອກກົດໝາຍ ແລະ ໃຊ້ມາດຕະການທີ່ເຂັ້ມງວດໃນການຮັກສາທຳມະຊາດ ແລະ ສິ່ງແວດລ້ອມນັ້ນ ບັນດາບໍລິສັດຂ້າມຊາດ ຈຳເປັນຕ້ອງຄົ້ນຄວ້າສ້າງເຄື່ອງຈັກຊະນິດໃໝ່ ແລະ ໃຊ້ວິທະຍາການໃໝ່ເຂົ້າໃນການຜະລິດ ເພື່ອຫລຸດຜ່ອນການໃຊ້ຈ່າຍຕ່າງໆລົງ; ເພື່ອຍົກສະມັດຖະພາບ, ຄຸນນະພາບ ແລະ ປະ

ສິດທິຜົນຂອງການຜະລິດ-ທຸລະກິດໃຫ້ສູງຂຶ້ນ; ພ້ອມກັນນັ້ນ ກໍ່ເພື່ອຈຳກັດການສ້າງຄວາມເສຍຫາຍຕໍ່ສະພາບແວດລ້ອມນຳອີກ.

ເມື່ອມີເຄື່ອງຈັກ, ມີເຕັກໂນໂລຢີໃຫມ່ແລ້ວ ອັນເກົ່າຈະເອົາໄປໃສ?

ໃນເວລາທີ່ບໍລິສັດຕ່າງໆ ພວມຄິດກ່ຽວກັບວ່າຈະເອົາອັນເກົ່າໄປໃຊ້ຢູ່ໃສ ແລະ ໃຊ້ແນວໃດນັ້ນ ບັນດາປະເທດພວມພັດທະນາຫລາຍໆປະເທດ ພັດມີນະໂຍບາຍສົ່ງເສີມ ແລະ ດຶງດູດການລົງທຶນຈາກຕ່າງປະເທດ. ອັນນີ້ແມ່ນ "ໂອກາດ" ຂອງທັງສອງຝ່າຍທີ່ມາຈອບເຫມາະກັນພໍດີ:

• ຝ່າຍຫນຶ່ງຢາກ "ປ່ຽນຖ່າຍ" ອີກຝ່າຍຫນຶ່ງຢາກ "ຮັບເອົາ".

• ໃນຂະບວນການ "ປ່ຽນຖ່າຍ" ແລະ "ຮັບເອົາ" ລ້ວນແຕ່ມີຜົນປະໂຫຍດຕິດພັນກັບຜູ້ຢາກ "ປ່ຽນຖ່າຍ" ແລະ ຜູ້ "ຮັບເອົາ, ຕ່າງແຕ່ວ່າມີຜູ້ໄດ້ຫນ້ອຍ ແລະ ມີຜູ້ໄດ້ຫລາຍລື່ນກັນ. ການໄດ້ທໍ່ກັນຄືງເປັນກໍລະນີທີ່ຫາຍາກ.

• ຄວາມຈິງບໍ່ມີລັດຖະບານປະເທດໃດດອກທີ່ຈະອະນຸຍາດໃຫ້ບໍລິສັດຂອງຕົນນຳເອົາເຄື່ອງຈັກເຄື່ອງລານ ແລະ ວິທະຍາການອັນລ້ຳຍຸກ, ຫລ້າສຸດໄປລົງທຶນຢູ່ປະເທດອື່ນ, ໂດຍທີ່ປະເທດຂອງຕົນ ບໍ່ທັນໄດ້ນຳໃຊ້ຈົນໄດ້ຮັບຜົນປະໂຫຍດອັນສົມຄວນສາກ່ອນ. ເພາະວ່າການໄດ້ມາຊຶ່ງສິ່ງໃຫມ່ໆທີ່ລ້ຳຍຸກນັ້ນ ຍ່ອມມີການໃຊ້ຈ່າຍພໍສົມຄວນ.

ເມື່ອເປັນເຊັ່ນນັ້ນ ປະເທດພວມພັດທະນາ-ດ້ອຍພັດທະນາທັງຫລາຍ ຈຶ່ງພົບ "ທາງຕັນ" ທີ່ຈະໄປເຖິງ ຫລື ຍາກທີ່ຈະໄດ້ຮັບສິ່ງທີ່ໃຫມ່ອ່ຽມ-ລ້ຳຫນ້າທັນສະໄຫມຂອງໂລກ. ໃນທາງກົງກັນຂ້າມ, ອາດບໍ່ຍາກທີ່ຈະໄດ້ຮັບເຄື່ອງ "ມືສອງ" ຫລື "ເຄື່ອງຍ້ອມແມວ" ທີ່ຫລ້າຫລັງ-ພົ້ນສະໄຫມ ຊຶ່ງຫລາຍໆປະເທດບໍ່ຢາກນຳໃຊ້ແລ້ວ.

• ການມີຄວາມຮູ້ ແລະ ມີຄວາມສາມາດທີ່ຈະຫລີກຈາກກໍລະນີດັ່ງກ່າວ ແມ່ນບັນຫາທ້າທາຍໃຫຍ່ອັນຫນຶ່ງສຳລັບບັນດາປະເທດພວມພັດທະນາ - ດ້ອຍພັດທະນາໃນໂລກປັດຈຸບັນ.

ເພາະວ່າ, ມີແຕ່ຮູ້ທັນ, ກ້າວທັນກັບຄວາມກ້າວຫນ້າທາງດ້ານວິທະຍາສາດ ແລະ ເຕັກໂນໂລຢີ ຈຶ່ງຈະຊ່ວຍໃຫ້ປະເທດເຫລົ່ານັ້ນຫລຸດພົ້ນຈາກການກາຍເປັນບ່ອນຖອກ "ຂີ້ເຫຍື້ອ" ເຕັກໂນໂລຢີ, ທັງມີເງື່ອນໄຂເຂົ້າເຖິງເຕັກໂນໂລຢີທີ່ອ່າວດີ ແລະ ອ່າວທັນສະໄຫມແດ່.

ການຮູ້ທັນ ແລະ ກ້າວທັນຈະສ້າງໂອກາດໃຫ້ແກ່ປະເທດພວມພັດທະນາ ສາມາດນຳໃຊ້ຊັບພະຍາກອນ ແລະ ທ່າແຮງບຽບຫຽບຂອງຕົນໄດ້ຢ່າງສົມເຫດສົມຜົນ ແລະ ມີປະສິດທິຜົນສູງຂຶ້ນ, ເພີ່ມຄວາມສາມາດແຂ່ງຂັນ ຂອງເສດຖະກິດຂຶ້ນຕື່ມໃນລະດັບໃດຫນຶ່ງ, ທັງສາມາດຮັກສາຊັບພະຍາກອນທຳມະຊາດ ແລະ ສະພາບແວດລ້ອມຂອງປະເທດໄວ້ໃນລະດັບອັນຈຳເປັນ, ເຮັດໃຫ້ການພັດທະນາກ້າວສູ່ແບບຍືນຍົງເປັນກ້າວໆ.

★ ການສະເໜີກ່ຽວກັບບັນຫາ ແລະ ສິ່ງທ້າທາຍທັງສິບຂໍ້ຢ່າງເປັນລະບົບຄືແນວນີ້ ບໍ່ແມ່ນເພື່ອໃຫ້ "ຢ້ານ" ກະແສໂລກາພິວັດ. ກົງກັນຂ້າມ ແມ່ນເພື່ອໃຫ້ມີຄວາມກ້າຫານ ແລະ ມີຄວາມເປັນເຈົ້າການໃນການແກ້ໄຂບັນຫາ ແລະ ຜ່ານຜ່າສິ່ງທ້າທາຍຕ່າງໆເຫລົ່ານັ້ນ.

ຂະບວນໂລກາພິວັດທາງເສດຖະກິດ ຈະສືບຕໍ່ດຳເນີນໄປຕາມກົດເກນພາວະວິໄສຂອງມັນ ໂດຍບໍ່ຂຶ້ນກັບຈິດສຳນຶກ ແລະ ຄວາມຕ້ອງການອັດຕະວິໄສຂອງພວກເຮົາ.

ໜ້າທີ່ສຳຄັນຂອງພວກເຮົາ ແມ່ນການຊອກຮູ້ ເພື່ອກຳແໜ້ນກາລະໂອກາດ ແລະ ເງື່ອນໄຂສະດວກທີ່ເຊື່ອງຊ້ອນຢູ່ໃນກະແສໂລກາພິວັດນັ້ນ, ພ້ອມກັນນັ້ນ ພວກເຮົາຕ້ອງຢູ່ໃນທ່າເປັນເຈົ້າການ ແລະ ກ້າຫານນຳໃຊ້ມັນໃຫ້ເປັນປະໂຫຍດສຳລັບການສ້າງສາພັດທະນາປະເທດຊາດຂອງຕົນ.

# ກາລະໂອກາດແຫ່ງການພັດທະນາ ໃນຍຸກໂລກາພິວັດທາງເສດຖະກິດ

◆ ມີຜູ້ໃຫ້ຄະຕິເຕືອນໃຈວ່າ: "ໃຕ້ທ້ອງຟ້າອັນມືດມົວ ຍ່ອມມີແສງສະຫວ່າງຂອງດວງດາວ".

ສ່ວນໃນທິດສະດີມາກ-ເລນິນ, ເປັນຕົ້ນແມ່ນປັດຊະຍາສັດຈະວິພາກໄດ້ເນັ້ນວ່າທຸກສິ່ງ ແລະ ທຸກປະກົດການໃນໂລກລ້ວນແຕ່ເປັນເອກະພາບ ແລະ ມີດ້ານກົງກັນຂ້າມກັນ.

ອີງຕາມຄະຕິເຕືອນໃຈ ແລະ ຫລັກມູນທິດສະດີດັ່ງກ່າວນັ້ນ ສາມາດເວົ້າໄດ້ວ່າ ໃນກະແສໂລກາພິວັດທາງເສດຖະກິດ ເຖິງວ່າຈະມີບັນຫາ ແລະ ສິ່ງທ້າທາຍຫລາຍຢ່າງກໍ່ຈິງ ແຕ່ໃນນັ້ນກໍ່ຍັງມີກາລະໂອກາດ ແລະ ເງື່ອນໄຂສະດວກແຝງຊ້ອນຢູ່ບໍ່ໜ້ອຍ.

• ກາລະໂອກາດຕ່າງໆນັ້ນເກີດຂຶ້ນຍ້ອນປັດໄຈຫລາຍຢ່າງ, ຊຶ່ງໃນນັ້ນອັນພື້ນຖານມີຄື:

**ກາລະໂອກາດທີ່ໜຶ່ງ: ການຮ່ວມມື ແລະ ການເພິ່ງພາອາໄສກັນນັບມື້ເພີ່ມທະວີ.**

◆ ໃນຍຸກໂລກາພິວັດທາງເສດຖະກິດ ວິທະຍາສາດ ແລະ ເຕັກໂນໂລຢີໄດ້ຮັບການພັດທະນາຢ່າງໄວວາ ແລະ ມີການປ່ຽນແປງແບບປະຕິວັດ. ອັນນີ້ເປັນສາເຫດສຳຄັນແຫ່ງການຍົກສະມັດຖະພາບການຜະລິດ ແລະ ຄຸນນະພາບຂອງຜະລິດຕະພັນ, ເຮັດໃຫ້ຫລາຍປະ

ເທດກາຍເປັນປະເທດອຸດສາຫະກຳ-ທັນສະໄໝ ແລະ ຮັ່ງມີຂຶ້ນໄດ້ໃນຂອບເຂດເວລາບໍ່ພໍເທົ່າໃດທົດສະວັດ.

ຄວາມເປັນໄປໄດ້ຄືແນວນັ້ນ ເກີດຂຶ້ນຍ້ອນການຮ່ວມມືກັນ ແລະ ການເພິ່ງພາອາໄສກັນລະຫວ່າງປະເທດຕ່າງໆໄດ້ຂະຫຍາຍຕົວຢ່າງໄວວາ ໂດຍມີການແບ່ງງານຜະລິດ ແລະ ການຄ້າເປັນປັດໄຈສຳຄັນ. ຖ້າເວົ້າແບບຊາວບ້ານ ອັນນີ້ໝາຍເຖິງການແບ່ງຄວາມຮັບຜິດຊອບ ແບບມີຄວາມຜູກພັນຊຶ່ງກັນແລະກັນຄື: ເຈົ້າຜະລິດອັນນີ້ຂາຍໃຫ້ຂ້ອຍ, ຂ້ອຍຜະລິດອັນນັ້ນຂາຍໃຫ້ເຈົ້າ; ເຈົ້າເປີດຕະຫລາດໃຫ້ຂ້ອຍ, ຂ້ອຍກໍ່ເປີດຕະຫລາດໃຫ້ເຈົ້າ, ເຈົ້າໄດ້ຮັບຜົນປະໂຫຍດ ແລະ ມີການພັດທະນາ, ຂ້ອຍກໍ່ມີຜົນປະໂຫຍດ ແລະ ໄດ້ຮັບການພັດທະນາ...

ໃນເມື່ອຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ ທີ່ເໝາະສົມການຮ່ວມມືຍິ່ງໄດ້ຮັບການສົ່ງເສີມ ແລະ ກໍ່ໃຫ້ເກີດມີການແລກປ່ຽນ-ຖ່າຍທອດເຕັກໂນໂລຢີໃຫ້ກັນແລະກັນ; ກໍ່ໃຫ້ເກີດລະບົບກົນໄກ ແລະ ກົດເກນການຮ່ວມມືແບບເພິ່ງພາອາໄສຊຶ່ງກັນ ແລະ ກັນລະຫວ່າງປະເທດ ເພື່ອການພັດທະນາ, ເພື່ອຄວາມຮັ່ງມີ ແລະ ຄວາມຢູ່ດີກິນດີຂອງບັນດາປະຊາຊາດ.

♦ ນັບຕັ້ງແຕ່ຊຸມປີ 1970 ມານີ້, ໂດຍສະເພາະແມ່ນພາຍຫລັງການສິ້ນສຸດສົງຄາມເຢັນ, ການຮ່ວມມື ແລະ ການເພິ່ງພາອາໄສກັນລະຫວ່າງປະເທດ ໄດ້ມີການຫັນປ່ຽນໃນດ້ານຈຸດປະສົງ ແລະ ຮູບ

ການ, ໂດຍຫັນມາໃຫ້ຄວາມສຳຄັນແກ່ທາງດ້ານເສດຖະກິດ ເພື່ອສ້າງຄວາມຮັ່ງມີເຂັ້ມແຂງ ແລະ ຄວາມຢູ່ດີກິນດີແກ່ປະຊາຊົນເປັນຕົ້ນຕໍ.

ອັນນີ້ ແຕກຕ່າງຢ່າງສິ້ນເຊີງກັບສະໄໝກ່ອນທີ່ໃຫ້ຄວາມສຳຄັນແກ່ການຮ່ວມມື ແລະ ການສ້າງພັນທະມິດທາງດ້ານການທະຫານ ແລະ ຄວາມໝັ້ນຄົງຫລາຍກວ່າການພັດທະນາເສດຖະກິດ ແລະ ສັງຄົມ.

ເພາະສະນັ້ນ ຈະແມ່ນປະເທດນ້ອຍຫລືໃຫຍ່, ດ້ອຍພັດທະນາ-ພວມພັດທະນາ ຫລື ພັດທະນາແລ້ວ ລ້ວນແຕ່ມີໂອກາດ, ມີເງື່ອນໄຂເຂົ້າຮ່ວມ ແລະ ໄດ້ຮັບຜົນປະໂຫຍດຈາກສິ່ງດັ່ງກ່າວ.

ການຮ່ວມມືກັນ ແລະ ການເພິ່ງພາອາໄສກັນເປັນປັດໄຈສຳຄັນອັນໜຶ່ງ ໃນການດຶງປະເທດຕ່າງໆໃຫ້ຫຍັບເຂົ້າຫາກັນ, ຫລຸດຜ່ອນຄວາມເປັນປໍລະປັກກັນ ຫລື ຢ່າງໜ້ອຍກໍ່ພະຍາຍາມຈຳກັດແກ້ໄຂບໍ່ໃຫ້ເກີດຂໍ້ຂັດແຍ້ງ ຈົນກາຍເປັນອຸປະສັກແກ່ການສະແຫວງຫາຜົນປະໂຫຍດຮ່ວມກັນ.

ການຮ່ວມມືກັນ ແລະ ການເພິ່ງພາອາໄສກັນ ແມ່ນຄູ່ມາດຕະເກນອັນໜຶ່ງໃນການພົວພັນລະຫວ່າງຊາດໃນໂລກປັດຈຸບັນ. ເພາະວ່າມີຫລາຍກໍລະນີທີ່ປະເທດຕ່າງໆໄດ້ມີທັດສະນະ ແລະ ຄວາມເຫັນທີ່ບໍ່ລົງລອຍ ຫລື ຜ່ອນສັ້ນຜ່ອນຍາວກັນບໍ່ໄດ້ໃນບາງດ້ານຂອງການພົວພັນຮ່ວມມືກັນ, ແຕ່ປະເທດເຫລົ່ານັ້ນຕ້ອງສືບຕໍ່ພະຍາຍາມຮ່ວມມືກັນ ເພື່ອຊອກຫາທາງອອກ ແລະ ວິທີແກ້ໄຂນຳກັນ; ທັງນີ້ກໍ່ຍ້ອນວ່າ

ປະເທດເຫລົ່ານັ້ນມີອັນທີ່ຕ້ອງເພິ່ງພາອາໄສກັນ, ມີຜົນປະໂຫຍດນຳກັນທັງໃນໄລຍະສະເພາະໜ້າ ແລະ ຍາວນານ.

ດ້ວຍເຫດນີ້ເອງ ລັດຖະບານຂອງປະເທດຕ່າງໆຈຶ່ງພະຍາຍາມສຶກສາຄົ້ນຄວ້າ ແລະ ຊອກຮູ້ໃຫ້ລະອຽດຊັດເຈນກ່ຽວກັບປະເທດອື່ນ, ເປັນຕົ້ນແມ່ນປະເທດທີ່ຕັ້ງຢູ່ໃກ້ກັນ, ເພາະວ່າ, ແຕ່ລະປະເທດຕ້ອງໄດ້ວາງຍຸດທະສາດ, ວາງນະໂຍບາຍການພັດທະນາໃຫ້ຖືກກັບສະພາບຈຸດພິເສດຂອງສະພາບແວດລ້ອມພາຍນອກ, ພັດທະນາປະເທດຕົນບົນພື້ນຖານການເຊື່ອມໂຍງກັບປະເທດອື່ນໆ.

ອັນນີ້ແມ່ນສິ່ງຈຳເປັນ, ເພາະວ່າການພັດທະນາແບບເຊື່ອມໂຍງເຂົ້າກັນ ຊ່ວຍໃຫ້ມີຄວາມສາມາດເສີມຂະຫຍາຍທ່າແຮງປຽບທຽບຂອງແຕ່ລະປະເທດ ໄດ້ຢ່າງມີປະສິດທິຜົນ. ເພາະວ່າບໍ່ມີປະເທດໃດຈະສາມາດພັດທະນາໃຫ້ຈະເລີນກ້າວໜ້າໄດ້ ໂດຍແຍກຕົວອອກຢູ່ໂດດດ່ຽວ ຫລື ແບບອັດປະຕູຢູ່ໂດຍລຳພັງ ປາສະຈາກການພົວພັນຮ່ວມມື ແລະ ການເພິ່ງພາອາໄສຊຶ່ງກັນແລະກັນກັບປະເທດອື່ນໆ.

ແນ່ນອນແລ້ວວ່າ ການຮ່ວມມື ແລະ ການເພິ່ງພາອາໄສກັນຕ້ອງນຳເອົາຜົນປະໂຫຍດມາໃຫ້ແຕ່ລະຝ່າຍ; ຖ້າຫາກວ່າມີແຕ່ຝ່າຍດຽວໄດ້ຮັບຜົນປະໂຫຍດ ການຮ່ວມມື ແລະ ການເພິ່ງພາອາໄສກັນຈະບໍ່ສາມາດຢືນຍົງຄົງຕົວຢູ່ໄດ້.

- ກາລະໂອກາດ ແລະ ເງື່ອນໄຂສະດວກທາງດ້ານການຮ່ວມມື ແລະ ການເພິ່ງພາອາໄສກັນທີ່ເກີດຂຶ້ນພາຍໃຕ້ກະແສໂລກາພິວັດທາງເສດຖະກິດ ບໍ່ໄດ້ຖືກສະຫງວນໄວ້ໃຫ້ປະເທດໃດ ຫລື ຊາດໃດ

ພຽງຫນຶ່ງດຽວ. ມັນແມ່ນກາລະໂອກາດ ແລະ ເງື່ອນໄຂສະດວກສໍາລັບທຸກໆຊາດ; ແຕ່ລະຊາດຍ່ອມມີສິດ ແລະ ມີຄວາມສາມາດທີ່ຈະໄດ້ຮັບຜົນປະໂຫຍດຈາກສິ່ງນັ້ນ.

ກ່ຽວກັບບັນຫານີ້ ພັກເຮົາໄດ້ມີທັດສະນະອັນຈະແຈ້ງທີ່ສຸດຄື: "... ຕ້ອງປັບປຸງວຽກງານສຶກສາຄົ້ນຄວ້າກ່ຽວກັບເສດຖະກິດຂອງໂລກ ແລະ ພາກພື້ນໃຫ້ເລິກເຊິ່ງ ເພື່ອກໍານົດທິດທາງນະໂຍບາຍການພົວພັນຮ່ວມມືໃຫ້ທັນການ, ແທດເຫມາະ ແລະ ມີປະສິດທິຜົນ"*

<u>ກາລະໂອກາດທີ່ສອງ</u>: ການຫັນປ່ຽນໄປສູ່ລະບົບຫລາຍຂົ້ວອໍານາດ ແລະ ການເພີ່ມທະວີບົດບາດຂອງກຸ່ມຮ່ວມມືທາງເສດຖະກິດໃນພາກພື້ນຕ່າງໆຂອງໂລກ.

- ພາຍຫລັງສະຫະພາບໂຊວຽດແຕກສະລາຍ ໂລກໄດ້ມີການປ່ຽນແປງຢ່າງເລິກເຊິ່ງ. ເນື້ອໃນອັນສໍາຄັນທີ່ສຸດຂອງການປ່ຽນແປງແມ່ນການຫັນປ່ຽນຈາກລະບົບສອງຂົ້ວອໍານາດ (ຂົ້ວຫນຶ່ງແມ່ນສະຫະລັດອາເມລິກາ ແລະ ອີກຂົ້ວຫນຶ່ງແມ່ນສະຫະພາບໂຊວຽດ) ໄປສູ່ການມີຫລາຍຂົ້ວອໍານາດ.

ຂົ້ວອໍານາດຕ່າງໆ ລ້ວນແຕ່ຕັ້ງຢູ່ບົນພື້ນຖານຂອງຄວາມແຂງແກ່ນທາງດ້ານເສດຖະກິດເປັນຕົ້ນຕໍ, ເຖິງວ່າສະມັດຖະພາບ ແລະ ຄວາມເຂັ້ມແຂງທາງດ້ານການທະຫານຍັງມີຄວາມສໍາຄັນຢູ່ກໍ່ຕາມ.

---

* ມະຕິກອງປະຊຸມໃຫຍ່ຄັ້ງທີ່ VII ຂອງພັກປະຊາຊົນປະຕິວັດລາວ ຫນ້າ 29.

ນັກສັງເກດການຫລາຍຄົນເຫັນວ່າ ສະພາບການພົວພັນລະຫວ່າງຊາດໃນຊຸມປີຕໍ່ໜ້ານີ້ ຈະຖືກກຳນົດດ້ວຍລັກສະນະ ແລະການປ່ຽນແປງ ຂອງການຂັ້ງຊາກຳລັງທາງເສດຖະກິດລະຫວ່າງປະເທດ ແລະ ກຸ່ມປະເທດທີ່ເປັນຂົ້ວອຳນາດ ຊຶ່ງກະຈາຍຢູ່ຕາມພາກພື້ນຕ່າງໆຂອງໂລກ.

ຂົ້ວອຳນາດເຫລົ່ານັ້ນໄດ້ແກ່ ສະຫະລັດອາເມລິກາ, ສະຫະພາບຢູລົບ, ຍີ່ປຸ່ນ, ສປ ຈີນ, ສະຫະພັນລັດເຊຍເປັນຕົ້ນ. ນອກນັ້ນກໍ່ມີກຸ່ມ ແລະ ປະເທດອື່ນໆທີ່ມີບົດບາດອິດທິພົນ ແລະ ມີຄວາມສຳຄັນເພີ່ມຂຶ້ນຢູ່ໃນເວທີປະຊາຄົມໂລກ.

♦ ການມີຫລາຍຂົ້ວອຳນາດ ໄດ້ສ້າງໂອກາດ ແລະ ເງື່ອນໄຂໃຫ້ບັນດາປະເທດໃນໂລກ ສາມາດສ້າງການພົວພັນຮ່ວມມືໄດ້ກວ້າງຂວາງກວ່າເກົ່າ, ສາມາດເລືອກຕົວແບບ ແລະ ເສັ້ນທາງການພັດທະນາໄດ້ຫລາກຫລາຍກວ່າເກົ່າ. ອັນນີ້ແຕກຕ່າງຢ່າງເລິກເຊິ່ງກັບສະໄໝສົງຄາມເຢັນ ທີ່ມີສອງຂົ້ວອຳນາດຕົ້ນຕໍ, ຊຶ່ງຫລາຍປະເທດຕ້ອງຢູ່ພາຍໃຕ້ຂອບເຂດອິດທິພົນຂອງຂົ້ວໃດຂົ້ວໜຶ່ງ.

ການມີຫລາຍຂົ້ວອຳນາດໃນຍຸກໂລກາພິວັດ ໄດ້ກໍ່ໃຫ້ເກີດແຮງຖ່ວງ ຫລື ດູນອຳນາດຂຶ້ນໃນໂລກ, ເຮັດໃຫ້ທ່າອ່ຽງລວມແຫ່ງສັນຕິພາບ ການຮ່ວມມື ແລະ ການພັດທະນາມີຄວາມແຈ່ມໃສ ແລະໝັ້ນຄົງຍືນຍົງຍິ່ງຂຶ້ນ.

ເມື່ອເປັນເຊັ່ນນັ້ນ ກາລະໂອກາດ ແລະ ເງື່ອນໄຂສະດວກແຫ່ງການພັດທະນາກໍ່ຍິ່ງເພີ່ມຂຶ້ນ ສຳລັບປະເທດຕ່າງໆ. ເພາະວ່າແຕ່

ລະປະເທດລ້ວນແຕ່ສາມາດເລືອກຄູ່ຮ່ວມມື, ເລືອກເປັນຫຸ້ນສ່ວນຍຸດທະສາດ, ເລືອກຜູ້ຮ່ວມລົງທຶນ, ເລືອກເອົາຂົງເຂດການຜະລິດຕາມການແບ່ງງານສາກົນ ແລະ ເລືອກຄູ່ຄ້າຂາຍ... ຕາມເງື່ອນໄຂສະເພາະຂອງຕົນ.

♦ ພ້ອມກັບການເກີດຂຶ້ນຂອງລະບົບຫລາຍຂົ້ວອຳນາດ, ບັນດາກຸ່ມຮ່ວມມືທາງເສດຖະກິດໃນພາກພື້ນຕ່າງໆຂອງໂລກ ກໍ່ມີບົດບາດພົ້ນເດັ່ນຂຶ້ນ. ອາດເປັນໄປໄດ້ວ່າ ກ້າວສູ່ສະຕະວັດທີ່ 21 ນີ້, ຈະເປັນຍຸກແຫ່ງການແຂ່ງຂັນກັນລະຫວ່າງກຸ່ມໃນແຕ່ລະພາກພື້ນ. ອັນນີ້ນັກຄົ້ນຄວ້າບາງຄົນກໍ່ເປັນຫ່ວງວ່າ ໂລກຈະຖືກແບ່ງອອກເປັນກຸ່ມທີ່ຂັດແຍ້ງ ແລະ ມີການກີດກັ້ນທາງການຄ້າ, ຊຶ່ງໃນທີ່ສຸດຈະເປັນສາເຫດແຫ່ງສົງຄາມການຄ້າລະຫວ່າງກຸ່ມທີ່ສຳຄັນໆໂດຍມີສູນກາງໃຫຍ່ຢູ່ 3 ຈຸດຄື: ຢູໂຣບ, ເອເຊຍ-ປາຊີຟິກ ແລະ ອາເມລິກາ.

ເຖິງຢ່າງໃດກໍ່ຕາມ, ການຕັ້ງກຸ່ມຮ່ວມມືທາງເສດຖະກິດໃນພາກພື້ນລ້ວນແຕ່ແນໃສ່ສ້າງກາລະໂອກາດ ແລະ ເງື່ອນໄຂສະດວກແກ່ການພັດທະນາ ດ້ວຍການລວມພະລັງ ແລະ ເສີມຂະຫຍາຍຄວາມອາດສາມາດ ຂອງບັນດາປະເທດສະມາຊິກ. ຕົວຢ່າງ: ການສ້າງຕັ້ງສະມາຄົມຂອງບັນດາປະຊາຊາດອາຊີຕາວັນອອກສ່ຽງໃຕ້ ຫລືອາຊຽນຂອງພວກເຮົາ (ASEAN) ກໍ່ມີວັດຖຸປະສົງອັນຈະແຈ້ງຄື:

+ ເລັ່ງລັດການພັດທະນາເສດຖະກິດ ແລະ ສັງຄົມ.

+ ສົ່ງເສີມສັນຕິພາບ ແລະ ສະຖຽນລະພາບ.

+ ສົ່ງເສີມການຮ່ວມມື ແລະ ການຊ່ວຍເຫລືອກັນໃນສິ່ງທີ່ຈະເປັນຜົນປະໂຫຍດຮ່ວມກັນ ທາງດ້ານເສດຖະກິດ ສັງຄົມ ວັດທະນະທຳ ເຕັກນິກ ວິທະຍາສາດ ແລະ ການບໍລິການ.

+ ຮ່ວມມືກັນທາງດ້ານກະສິກຳ ອຸດສາຫະກຳ ການຄ້າ ການຂົນສົ່ງ ແລະ ການຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ມີມາດຕະຖານດີຂຶ້ນ.

+ ສົ່ງເສີມການສຶກສາ.

+ ປະສານສົມທົບ ແລະ ໃຫ້ການຮ່ວມມືກັບອົງການລະຫວ່າງປະເທດ ທີ່ມີວັດຖຸປະສົງຄ້າຍຄືກັນ.

ເພື່ອປະຕິບັດວັດຖຸປະສົງດັ່ງກ່າວນັ້ນໃຫ້ເປັນຈິງ, ອາຊຽນຍັງໄດ້ຈັດໃຫ້ມີໂຄງການຮ່ວມມືເປັນຈຳນວນຫລວງຫລາຍ. ຕົວຢ່າງ: ໂຄງການໃຫ້ສິດທິພິເສດທາງການຄ້າ ລະຫວ່າງປະເທດສະມາຊິກເປັນຕົ້ນ. ຕາມໂຄງການນີ້, ປະເທດສະມາຊິກແຕ່ລະປະເທດ ຕ້ອງໄດ້ຕົກລົງມາດຕະການຮ່ວມກັນ ເພື່ອຊ່ວຍເຫລືອຊຶ່ງກັນແລະກັນ ໃນກໍລະນີເກີດບັນຫາຂາດເຂີນສິນຄ້າອັນຈຳເປັນເຊັ່ນເຂົ້າ, ນ້ຳມັນ ແລະ ອື່ນໆອີກ.

ຫລື ໂຄງການຮ່ວມມືລົງທຶນດ້ານອຸດສາຫະກຳ, ປະເທດສະມາຊິກກໍ່ມີສິດສະເຫນີໂຄງການລົງທຶນ ແລະ ໄປດຳເນີນການດ້ວຍຕົນເອງໄດ້ຕາມຄວາມສາມາດຂອງຕົນ. ໂຄງການນີ້ ຊ່ວຍໃຫ້ປະເທດສະມາຊິກສາມາດປະຕິບັດການແບ່ງງານຜະລິດໄດ້ຕາມທ່າແຮງ ແລະຄວາມສາມາດຂອງຕົນ, ແກ້ໄຂບັນຫາການຜະລິດຊ້ຳຊ້ອນກັນ ແລະສາມາດສົ່ງຜົນຜະລິດໄປຂາຍໃຫ້ປະເທດອື່ນໆໄດ້. ອັນນີ້ເປັນເຫດຜົນ

ສຳຄັນທີ່ພາໃຫ້ຜູ້ລົງທຶນເກີດຄວາມສົນໃຈ, ເພາະລົງທຶນໄປແລ້ວສາມາດສົ່ງຜະລິດຕະພັນອອກໄປຂາຍປະເທດຕ່າງໆ ທີ່ເປັນສະມາຊິກຂອງອາຊຽນໄດ້. ເຖິງວ່າຕະຫລາດພາຍໃນແຄບ ປະເທດທີ່ປະຕິບັດໂຄງການກໍ່ສາມາດເປີດກວ້າງຕະຫລາດອອກສູ່ປະເທດອື່ນໄດ້.

ອັນນີ້ ແມ່ນພຽງແຕ່ສ່ວນຫນຶ່ງຂອງກາລະໂອກາດ ແລະ ເງື່ອນໄຂສະດວກ ທີ່ໄດ້ຈາກການຮວມກັນເປັນກຸ່ມຮ່ວມມືທາງດ້ານເສດຖະກິດ ໃນພາກພື້ນອາຊີອາຄະເນຂອງພວກເຮົາ.

♦ ນອກຈາກໂຄງການຮ່ວມມືຕ່າງໆແລ້ວ, ອາຊຽນຍັງໄດ້ສ້າງເຂດການຄ້າເສລີ ຫລື ເອີ້ນວ່າ ອາຟຕາ (AFTA) ຂຶ້ນແຕ່ປີ 1992 ເປັນຕົ້ນມາ. ການສ້າງເຂດການຄ້າເສລີມີວັດຖຸປະສົງເພື່ອພ້ອມກັນຫລຸດອັດຕາພາສີສິນຄ້າຂາເຂົ້າລະຫວ່າງປະເທດສະມາຊິກລົງ ຊຶ່ງເປັນການຂະຫຍາຍບົດບາດ ແລະ ການຮ່ວມມືຂອງກຸ່ມອາຊຽນໄປໃນຕົວ.

ຫລາຍຄົນຢູ່ປະເທດລາວເຮົາ ຍັງຄຶດເປັນຫ່ວງວ່າ **ເມື່ອເຂົ້າຮ່ວມເຂດການຄ້າເສລີນີ້ແລ້ວ ຈະເຮັດໃຫ້ເສຍຕະຫລາດ ແລະ ການຜະລິດພາຍໃນປະເທດຈະໄດ້ຮັບຜົນກະທົບຢ່າງຮ້າຍແຮງ.** ເຂົ້າໃຈວ່າຄວາມເປັນຫ່ວງໃນລັກສະນະນີ້ເປັນເລື່ອງທຳມະດາ. ແຕ່ຄວາມຈິງເປັນແນວໃດ?

- ຄວາມຈິງປະເທດເຮົາຈະບໍ່ເສຍຕະຫລາດແຕ່ຢ່າງໃດ. ກົງກັນຂ້າມ, ເມື່ອເຂົ້າຮ່ວມເຂດການຄ້າເສລີອາຊຽນ ພວກເຮົາຈະມີຕະຫລາດອັນກວ້າງໃຫຍ່ ລື່ນຕະຫລາດເຮົາເອງບໍ່ຈັກວ່າທໍ່ໃດເທົ່າ. ສະນັ້ນ ບັນຫາທີ່ຕັ້ງຂຶ້ນຈຶ່ງບໍ່ແມ່ນການເສຍຕະຫລາດ, ແຕ່ຫາກແມ່ນ

ບັນຫາວ່າ ຈະເຂົ້າສູ່ຕະຫລາດນັ້ນແນວໃດ ຫລື ເວົ້າຢ່າງຫນຶ່ງແມ່ນປະເທດເຮົາຈະຜະລິດຫຍັງສິ່ງໄປຂາຍໃນຕະຫລາດນັ້ນ!

ປະຊາຊົນຈະໄດ້ຮັບຜົນປະໂຫຍດຫຍັງ?

**ຫນຶ່ງ**: ປະຊາຊົນຈະໄດ້ຊື້ສິນຄ້າລາຄາຖືກກວ່າ ແລະ ມີຄຸນນະພາບດີກວ່າ. ເພາະວ່າການຫລຸດ ແລະ ການລົບລ້າງອັດຕາພາສີຂາເຂົ້າ ຈະເຮັດໃຫ້ສິນຄ້າ "ໄຫລ" ໄປສູ່ຕະຫລາດຢ່າງໄວວາ ແລະ ເພີ່ມຄວາມອຸດົມສົມບູນຂອງຕະຫລາດ (ມີສິນຄ້າຫລາຍ); ເມື່ອມີສິນຄ້າຫລາຍ ປະຊາຊົນກໍ່ມີທາງເລືອກຫລາຍ. ສິນຄ້າຊະນິດໃດທີ່ມີຕົ້ນທຶນການຜະລິດຕໍ່າ, ລາຄາຖືກ, ມີຄຸນນະພາບດີ ແລະ ເຫມາະກັບຄວາມຕ້ອງການ ປະຊາຊົນກໍ່ຈະຊື້ຫລາຍ. ອັນນັ້ນແມ່ນຜົນປະໂຫຍດອັນຫນຶ່ງທີ່ປະຊາຊົນຈະໄດ້ຮັບ.

**ສອງ**: ອາຟຕາ ຈະເຮັດໃຫ້ການຜະລິດສິນຄ້າທີ່ຊ້ຳຊ້ອນກັນຫລຸດລົງ. ການຜະລິດທີ່ຊ້ຳຊ້ອນກັນຈະຫລຸດລົງ ກໍ່ເພາະວ່າກົນໄກການແຂ່ງຂັນມັນເຮັດວຽກ. ການຜະລິດສິນຄ້າອັນໃດທີ່ຄືກັນ ຫລື ຄ້າຍຄືກັນຈະຖືກ "ຮ່ອນ" ດ້ວຍເຊິ່ງດ້ານມາດຖານການສິ້ນເປືອງຕໍ່ຫົວຫນ່ວຍຜະລິດຕະພັນ ແລະ ຄຸນນະພາບ. ຖ້າຫາກສິນຄ້າຂອງຜູ້ໃດສິ້ນເປືອງຫລາຍກວ່າ, ລາຄາສູງກວ່າ ແຕ່ຄຸນນະພາບພັດບໍ່ສູງປານໃດ; ສິນຄ້າຂອງຜູ້ນັ້ນກໍ່ຈະຂາຍບໍ່ອອກ ແລະ ບໍ່ສາມາດແຂ່ງຂັນກັບຜູ້ອື່ນໄດ້; ເມື່ອສູ້ຜູ້ອື່ນບໍ່ໄດ້ ກໍ່ຕ້ອງໄດ້ເຊົາ.

ການເຊົານີ້ແຫລະ ພາໃຫ້ການຜະລິດທີ່ຊ້ຳຊ້ອນກັນຫລຸດລົງ, ຊຶ່ງອັນນີ້ ແມ່ນການຫລຸດລົງພາຍໃຕ້ຜົນກະທົບຂອງກົນໄກການແຂ່ງ

ຂັນ. ພ້ອມກັນນີ້ ການຜະລິດທີ່ຊ້ຳຊ້ອນຍັງຈະຫລຸດລົງ ຍ້ອນມີການດັດສົມການຜະລິດຢູ່ພາຍໃນກຸ່ມອາຊຽນເອງ, ຊຶ່ງໃນເນື້ອແທ້ ມັນກໍ່ແມ່ນການແບ່ງງານຜະລິດນັ້ນເອງ; ຫລື ເອີ້ນວ່າການຫລຸດລົງຍ້ອນການປະຕິບັດໂຄງການຮ່ວມມືລົງທຶນດ້ານອຸດສາຫະກຳ.

**ສາມ**: ອາຟຕ້າ ຈະເຮັດໃຫ້ການກີດກັ້ນທາງການຄ້າລະຫວ່າງປະເທດສະມາຊິກຫລຸດລົງ, ເຮັດໃຫ້ເສດຖະກິດການຄ້າ ແລະ ອຸດສາຫະກຳຂອງປະເທດສະມາຊິກອາຊຽນມີຄວາມກ້າວໜ້າ ສາມາດແຂ່ງຂັນໃນຕະຫລາດໂລກໄດ້. ໃນເມື່ອເສດຖະກິດ, ການຄ້າ ແລະ ການອຸດສາຫະກຳມີຄວາມກ້າວໜ້າ ມັນຈະຊ່ວຍໃຫ້ການພັດທະນາໃນປະເທດຕ່າງໆປະສົບຜົນສຳເລັດ ແລະ ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນຂຶ້ນສູ່ມາດຖານທີ່ດີກວ່າເກົ່າ.

ອັນນັ້ນ ແມ່ນພຽງແຕ່ສ່ວນໜຶ່ງຂອງຕົວຢ່າງແຫ່ງການໂຮມເປັນກຸ່ມຮ່ວມມືທາງເສດຖະກິດ ໃນພາກພື້ນອາຊີອາຄະເນ ທີ່ໄດ້ສ້າງກາລະໂອກາດ ແລະ ເງື່ອນໄຂສະດວກສຳລັດປະເທດສະມາຊິກ, ຊຶ່ງສະທ້ອນໃຫ້ເຫັນວ່າໃນຍຸກໂລກາພິວັດທາງເສດຖະກິດນີ້ ການມີຫລາຍຂົ້ວອຳນາດ ແລະ ມີກຸ່ມການຮ່ວມມືທາງດ້ານເສດຖະກິດໃນພາກພື້ນຕ່າງໆນັ້ນ ມີຜົນດີສຳລັບບັນດາປະຊາຊາດ.

**<u>ກາລະໂອກາດທີ່ສາມ</u>: ການຕໍ່ສູ້ເພື່ອສ້າງລະບຽບການພົວພັນຮ່ວມມືລະຫວ່າງຊາດທີ່ສະເໝີພາບ, ເປັນທຳ ແລະ ຕ່າງຝ່າຍຕ່າງມີຜົນປະໂຫຍດຍັງສືບຕໍ່ຢ່າງແຂງແຮງ ແລະ ກວ້າງຂວາງ.**

♦ ປະເທດທີ່ພວມພັດທະນາ ແມ່ນກຸ່ມປະເທດທີ່ມີສຽງຫລາຍກວ່າຫມູ່ໃນອົງການສະຫະປະຊາຊາດ, ພາຍຫລັງທີ່ໄດ້ຮວມກັນເຂົ້າເປັນກຸ່ມ 77 (ຫລືເອີ້ນວ່າກຸ່ມ G-77) ຕັ້ງແຕ່ປີ 1964 ເປັນຕົ້ນມາ. ເຖິງວ່າໃນປັດຈຸບັນໃນກຸ່ມນີ້ມີສະມາຊິກຫລາຍກວ່າ 120 ປະເທດ, ແຕ່ກໍ່ຍັງຮັກສາຊື່ເປັນກຸ່ມ G-77 ຢູ່ຄືເກົ່າ.

ຍ້ອນວ່າກຸ່ມ-77 ແມ່ນກຸ່ມທີ່ມີສຽງສ່ວນຫລາຍໃນສະມັດຊາຂອງອົງການສະຫະປະຊາຊາດ, ສະນັ້ນ ກຸ່ມນີ້ຈຶ່ງສາມາດຊຸກຍູ້ໃຫ້ກອງປະຊຸມ ຮັບຮອງເອົາມະຕິທີ່ເປັນຜົນດີໃຫ້ແກ່ກຸ່ມໄດ້.

ການສູ້ຍັນກັນລະຫວ່າງປະເທດເຫນືອ-ໃຕ້ ແມ່ນການຕໍ່ສູ້ລະຫວ່າງປະເທດທີ່ພັດທະນາແລ້ວ ເປັນຕົ້ນແມ່ນກຸ່ມ G-7 ກັບກຸ່ມປະເທດພວມພັດທະນາ ຫລື ກຸ່ມ-77 ນີ້ເອງ. ການສູ້ຍັນກັນນີ້ ບາງຄັ້ງມີລັກສະນະຮຸນແຮງ, ເພາະວ່າໃນການພົວພັນລະຫວ່າງເຫນືອ-ໃຕ້ນັ້ນຍັງມີຫລາຍບັນຫາ ທີ່ບໍ່ທັນໄດ້ຮັບການແກ້ໄຂໄປໃນທາງທີ່ເປັນຜົນດີໃຫ້ແກ່ບັນດາປະເທດພວມພັດທະນາ.

ການຕໍ່ສູ້ຂອງບັນດາປະເທດພວມພັດທະນາ ຕົ້ນຕໍແມ່ນດຳເນີນໄປໃນເວທີຂອງອົງການສະຫະປະຊາຊາດ, ເປັນຕົ້ນແມ່ນຊຸກຍູ້ໃຫ້ສະຫະປະຊາຊາດ ຈັດກອງປະຊຸມນາໆຊາດ ເພື່ອແກ້ໄຂບັນຫາສະເພາະທີ່ກ່ຽວພັນເຖິງຊີວິດ ຫລື ຄວາມເປັນຄວາມຕາຍຂອງຕົນເຊັ່ນ: ບັນຫາປະຊາກອນ, ບັນຫາອາຫານ ແລະ ກະສິກຳ, ການພັດທະນາຊົນນະບົດ, ບັນຫາສິ່ງແວດລ້ອມ ແລະ ອື່ນໆອີກ... ກອງປະຊຸມສາກົນກ່ຽວກັບບັນຫາສະເພາະຄືແນວນີ້ ມີສ່ວນຊ່ວຍໃຫ້ບັນດາປະ

ເທດພວມພັດທະນາໄດ້ຮັບການຊ່ວຍເຫລືອ ແລະ ມີເງື່ອນໄຂດີຂຶ້ນໃນການແກ້ໄຂບັນຫາຂອງຕົນ.

♦ ຄວາມພະຍາຍາມຂອງບັນດາປະເທດພວມພັດທະນາ ໃນການເຄື່ອນໄຫວຮ່ວມກັນນັ້ນ ແມ່ນເພື່ອບັນລຸເຖິງຄວາມເປັນເຈົ້າຕົນເອງທາງດ້ານການເມືອງ ແລະ ເສດຖະກິດ; ຕົ້ນຕໍແມ່ນທາງດ້ານເສດຖະກິດ, ເພື່ອພັດທະນາປະເທດໃຫ້ຈະເລີນກ້າວໜ້າທຽມທັນປະເທດອື່ນໆ.

• ເປັນທີ່ຮູ້ກັນດີແລ້ວວ່າ ປະເທດພວມພັດທະນາສ່ວນໃຫຍ່ແມ່ນເຄີຍຕົກເປັນທີວເມືອງຂຶ້ນຂອງປະເທດຈັກກະພັດ ແລະ ມາຮອດປັດຈຸບັນຫລາຍປະເທດໃນຈຳນວນນັ້ນ ກໍ່ຍັງຕົກເປັນທີວເມືອງຂຶ້ນແບບໃຫມ່ຢູ່. ສະນັ້ນ ບັນຫາທີ່ຕັ້ງຂຶ້ນແມ່ນ ເຮັດແນວໃດຈຶ່ງຈະຫລຸດພົ້ນຈາກການຄອບງຳ ຫລື ເຮັດແນວໃດ ຈຶ່ງຈະຫລຸດພົ້ນຈາກການຂຶ້ນກັບປະເທດທີ່ເຄີຍເປັນເຈົ້າເມືອງຂຶ້ນໃນເມື່ອກ່ອນ ຫລື ປະເທດເຈົ້າເມືອງຂຶ້ນແບບໃຫມ່.

ເນື່ອງຈາກການແກ້ບັນຫາທີ່ຕັ້ງຂຶ້ນນີ້ ບໍ່ສາມາດເຮັດໄດ້ໂດຍລຳພັງ ແລະ ຍ້ອນວ່າບັນຫາເຫລົ່ານັ້ນ ຝັງເລິກຢູ່ໃນລະບົບການພົວພັນລະຫວ່າງປະເທດທັງທາງດ້ານການເມືອງ, ເສດຖະກິດ, ການຄ້າ, ການເງິນ, ການລົງທຶນ... ສະນັ້ນ ປະເທດພວມພັດທະນາຈຶ່ງໂຮມກັນເປັນກຸ່ມ ເພື່ອຕໍ່ສູ້ໃຫ້**ສ້າງລະບຽບການພົວພັນທາງເສດຖະກິດລະຫວ່າງປະເທດແບບໃຫມ່ຂຶ້ນ**.

ຈຸດປະສົງຕົ້ນຕໍຂອງປະເທດພວມພັດທະນາ ໃນການສ້າງລະບຽບການພົວພັນເສດຖະກິດລະຫວ່າງປະເທດ ແບບໃຫມ່ນັ້ນມີຄື:

1/. ໃຫ້ຫລຸດຜ່ອນພາສີຂາເຂົ້າ ແລະ ເພີ່ມໂກຕ້າການນໍາເຂົ້າສິນຄ້າທີ່ຜະລິດໂດຍປະເທດພວມພັດທະນາໄປຍັງປະເທດທີ່ພັດທະນາແລ້ວ.

2/. ໃຫ້ປະເທດພວມພັດທະນາມີບົດບາດຫລາຍຂຶ້ນໃນອົງການເສດຖະກິດ, ການເງິນລະຫວ່າງປະເທດເຊັ່ນ: ທະນາຄານໂລກ, ອົງການການຄ້າໂລກ, ໂດຍສະເພາະແມ່ນບົດບາດໃນການຕົກລົງ ຫລື ປັ່ງນແປງຂໍ້ຕົກລົງຕ່າງໆຂອງອົງການ.

3/. ໃຫ້ຫລຸດຜ່ອນຄວາມເຂັ້ມງວດຕໍ່ປະເທດພວມພັດທະນາໃນເວລາສະເຫນີກູ້ຢືມ ຫລື ຂໍການຊ່ວຍເຫລືອລ້າ, ເປັນຕົ້ນແມ່ນຫລຸດຜ່ອນຄວາມເຂັ້ມງວດໃນການຈໍາໃຫ້ປະເທດພວມພັດທະນາ ຕ້ອງສະຫນອງຂໍ້ມູນທາງການເງິນ-ເສດຖະກິດ ແລະ ຕ້ອງຮັບເອົາເງື່ອນໄຂຕ່າງໆຢ່າງຫລວງຫລາຍ.

4/. ໃຫ້ປະເທດທີ່ພັດທະນາແລ້ວ (ຫລືປະເທດເຫນືອ) ເພີ່ມອັດຕາການຊ່ວຍເຫລືອ, ທາງດ້ານເສດຖະກິດແກ່ປະເທດພວມພັດທະນາ ຢ່າງຫນ້ອຍທີ່ສຸດໃຫ້ຢູ່ໃນລະດັບ 7% ຂອງລວມຍອດຜະລິດຕະພັນແຫ່ງຊາດ ຂອງປະເທດທີ່ພັດທະນາແລ້ວ.

ພ້ອມທັງໃຫ້ການຊ່ວຍເຫລືອ ທາງດ້ານເຕັກນິກແກ່ປະເທດພວມພັດທະນາ.

5/. ຄວນກະຈາຍສິນເຊື່ອ ຫລື ເງິນກູ້ໄປໃຫ້ປະເທດພວມພັດທະນາຫລາຍຂຶ້ນ ເພື່ອໃຫ້ປະເທດເຫລົ່ານັ້ນ ສາມາດສ້າງບາດກ້າວຂະຫຍາຍຕົວ ທາງດ້ານເສດຖະກິດທີ່ດີຂຶ້ນ, ເປັນຕົ້ນແມ່ນສິນເຊື່ອໄລຍະຍາວດ້ວຍດອກເບ້ຍຕ່ຳ.

ແນ່ນອນແລ້ວວ່າ ຈຸດປະສົງ ຫລື ຂໍ້ສະເຫນີຕ່າງໆເຫລົ່ານີ້ຍ່ອມເປັນໄປໄດ້ຍາກທີ່ປະເທດເຫນືອ ຫລື ປະເທດທີ່ພັດທະນາແລ້ວຈະຮັບເອົາໄດ້ທັງຫມົດ. ທັງນີ້ ກໍ່ຍ້ອນວ່າປະເທດທີ່ພັດທະນາແລ້ວ ຍ່ອມບໍ່ຢາກເສຍຜົນປະໂຫຍດທີ່ຕົນເຄີຍໄດ້ຮັບ; ທັງເມີນເສີຍຕໍ່ຂໍ້ສະເຫນີເຫລົ່ານັ້ນ ໂດຍຄິດພຽງແຕ່ວ່າມັນບໍ່ມີຄວາມເປັນໄປໄດ້ໃນທາງປະຕິບັດ.

ເຖິງຢ່າງໃດກໍ່ຕາມ ການເຈລະຈາຕໍ່ລອງ ແລະ ການສະເຫນີແລ້ວສະເຫນີອີກ ກໍ່ຍັງດຳເນີນຕໍ່ໄປ, ເພາະວ່າເຖິງບໍ່ໄດ້ຫມົດ ກໍ່ຍັງມີອັນໄດ້ຢູ່ຈຳນວນຫນຶ່ງ. ສິ່ງດັ່ງກ່າວກໍ່ມີສ່ວນທີ່ເປັນກາລະໂອກາດອັນອຳນວຍສຳລັບການພັດທະນາເຊັ່ນກັນ.

**<u>ກາລະໂອກາດທີ່ສີ່</u>: ນຳໃຊ້ການຊ່ວຍເຫລືອຂອງສາກົນຢ່າງເປັນເຈົ້າການ ສົມທົບກັບກຳລັງແຮງຢູ່ພາຍໃນ ຍັງເປັນກາລະໂອກາດສຳຄັນໃນການພັດທະນາປະເທດ.**

ແຕ່ລະປະເທດ ຈະແມ່ນປະເທດນ້ອຍ ຫລື ປະເທດໃຫຍ່; ຈະແມ່ນພວມພັດທະນາ ຫລື ພັດທະນາແລ້ວກໍ່ດີ ລ້ວນແຕ່ເປັນພາຄີແຫ່ງປະຊາຄົມໂລກ. ຜົນສຳເລັດ ຫລື ບັນຫາຫລາຍຢ່າງ ທີ່ເກີດຂຶ້ນຢູ່ໃນໂລກລ້ວນແຕ່ມີຜົນກະທົບເຖິງກັນແລະກັນຢ່າງໄວວາ. ສະນັ້ນ ປະ

ເທດຕ່າງໆຈຳຕ້ອງຊ່ວຍເຫລືອຊຶ່ງກັນແລະກັນ ຈຶ່ງມີກຳລັງແຮງໃນການແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນນັ້ນໄດ້.

ການຮ່ວມມື ແລະ ການຊ່ວຍເຫລືອກັນ ມີຄວາມຫມາຍກວມເອົາຫລາຍບັນຫາ, ຊຶ່ງໃນນັ້ນ ລວມມີການຊ່ວຍເຫລືອລ້າ, ການໃຫ້ເງິນກູ້, ການຊ່ວຍເຫລືອດ້ານເຕັກນິກ-ວິຊາການ, ການລົງທຶນ, ການສະຫນັບສະຫນູນສົ່ງເສີມໃນດ້ານຕ່າງໆ ແລະ ອື່ນໆອີກ.

* ການຊ່ວຍເຫລືອຂອງປະເທດຫນຶ່ງໃຫ້ແກ່ອີກປະເທດຫນຶ່ງໃນເນື້ອແທ້ແມ່ນການໂອນສິນຄ້າ (ສິນຄ້າເປັນສິ່ງຂອງ, ສິນຄ້າບໍລິການ, ສິນຄ້າທາງດ້ານເຕັກນິກວິຊາການ...), ແມ່ນການໂອນເງິນເພື່ອການລົງທຶນຈາກປະເທດນີ້ໄປໃຫ້ປະເທດນັ້ນ ຊຶ່ງອາດມີການຄິດຄ່າ ຫລື ບໍ່ຄິດຄ່າກໍ່ໄດ້ ໂດຍຂຶ້ນກັບການຕົກລົງເຫັນດີນຳກັນ ລະຫວ່າງຝ່າຍທີ່ກ່ຽວຂ້ອງ ເພື່ອສະແດງໃຫ້ເຫັນເຈຕະນາທີ່ຈະຮ່ວມມືກັນ ແລະ ເພື່ອສະແຫວງຫາຜົນປະໂຫຍດຮ່ວມກັນ.

ໃນການໃຫ້ການຊ່ວຍເຫລືອ, ປະເທດທີ່ໃຫ້ການຊ່ວຍເຫລືອສາມາດໃຫ້ໂດຍກົງ ຫລື ໃຫ້ໂດຍຜ່ານອົງການຕ່າງໆກໍ່ໄດ້ເຊັ່ນ: ອົງການສະຫະປະຊາຊາດ ແລະ ລະບົບເຄືອຂ່າຍ, ທະນາຄານໂລກ, ທະນາຄານພັດທະນາອາຊີ... ການເລືອກໃຫ້ຄືແນວໃດແມ່ນສິດຂອງປະເທດຜູ້ໃຫ້, ແຕ່ໂດຍສ່ວນໃຫຍ່ແລ້ວ ມັກຈະໃຫ້ການຊ່ວຍເຫລືອໂດຍກົງ. ເພາະວ່າໃຫ້ການຊ່ວຍເຫລືອໂດຍກົງນັ້ນ ປະເທດທີ່ໃຫ້ການຊ່ວຍເຫລືອມີເງື່ອນໄຂ ແລະ ມີຄວາມສາມາດທີ່ຈະຕິດຕາມຄວບຄຸມການໃຫ້ການຊ່ວຍເຫລືອໄດ້ດ້ວຍຕົນເອງ. ສຳຄັນກວ່ານັ້ນ ແມ່ນສາ

ມາດເລັ່ງຫວງເອົາຜົນປະໂຫຍດຕອບແທນໄດ້ດີກວ່າ, ເປັນຕົ້ນແມ່ນໃຫ້ປະເທດທີ່ໄດ້ຮັບການຊ່ວຍເຫລືອຕ້ອງສັ່ງຊື້ສິນຄ້າຈາກປະເທດທີ່ໃຫ້ການຊ່ວຍເຫລືອ.

✱ ການຊ່ວຍເຫລືອແມ່ນສ່ວນໜຶ່ງທີ່ສຳຄັນຂອງການຮ່ວມມືລະຫວ່າງປະເທດ. ເມື່ອມັນແມ່ນສ່ວນໜຶ່ງຂອງການຮ່ວມມື ແນ່ນອນມັນຕ້ອງນຳເອົາຜົນປະໂຫຍດມາໃຫ້ແກ່ທັງສອງຝ່າຍ ຄືຝ່າຍໃຫ້ ແລະຝ່າຍຮັບ.

ບັນຫາທີ່ຕັ້ງຂຶ້ນແມ່ນຝ່າຍຮັບຕ້ອງເປັນເຈົ້າການ. ເປັນເຈົ້າການຕັ້ງແຕ່ຂອດຄົ້ນຄວ້າຂຶ້ນແຜນການ ແລະ ຂຶ້ນໂຄງການ, ເຮັດບົດວິພາກ ແລະ ອະທິບາຍກ່ຽວກັບໂຄງການ, ນຳສະເໜີຂໍການຊ່ວຍເຫລືອ ຈົນເຖິງເປັນເຈົ້າການໃນການດຳເນີນໂຄງການໃຫ້ເກີດດອກອອກຜົນຕົວຈິງ. ໂຄງການຊ່ວຍເຫລືອມີປະສິດທິຜົນ ຜູ້ໃຫ້ຈຶ່ງດີໃຈ, ຜູ້ຮັບຈຶ່ງໄດ້ຜົນປະໂຫຍດ. ຈາກນັ້ນ ຜູ້ໃຫ້ກໍ່ຢາກໃຫ້ຕື່ມ ແລະ ຜູ້ຮັບກໍ່ຈະໄດ້ຕື່ມ. ເມື່ອໃດຜູ້ຮັບຫາກຂາດຄວາມເປັນເຈົ້າການ, ຂາດຄວາມຮັບຜິດຊອບ ແລະ ໂຄງການຊ່ວຍເຫລືອບໍ່ເກີດຜົນທີ່ເປັນຮູບປະທຳ ເມື່ອນັ້ນຜູ້ໃຫ້ຈະບໍ່ພໍໃຈ ແລະ ອາດຈະບໍ່ໃຫ້ການຊ່ວຍເຫລືອຕໍ່ໄປອີກ.

ຄວາມເປັນເຈົ້າການຂອງຜູ້ຮັບ ຍັງເປັນປັດໄຈສຳຄັນສຳລັບສະກັດກັ້ນການນຳໃຊ້ການຊ່ວຍເຫລືອ ເພື່ອເປັນເຄື່ອງມືສະແຫວງຫາຜົນປະໂຫຍດທາງການເມືອງອີກດ້ວຍ.

ຄວາມເປັນເຈົ້າການຂອງປະເທດຜູ້ຮັບ ຍັງຕ້ອງສະແດງອອກໃນການຊອກຮູ້ກ່ຽວກັບອົງການ ແລະ ກົນໄກການຊ່ວຍເຫລືອຂອງຕ່າງປະເທດຢ່າງເລິກເຊິ່ງ, ເພື່ອສາມາດຍາດແຍ້ງເອົາການຊ່ວຍເຫລືອຂອງຕ່າງປະເທດໄດ້ຢ່າງມີປະສິດທິພາບ.

♦ ຢູ່ປະເທດຍີ່ປຸ່ນ ມີຫລາຍອົງການທີ່ໃຫ້ການຊ່ວຍເຫລືອຮ່ວມມືກັບຕ່າງປະເທດ ແລະ ປະເທດຍີ່ປຸ່ນໄດ້ປະກອບສ່ວນໃຫ້ການຊ່ວຍເຫລືອແກ່ປະເທດຕ່າງໆໃນໂລກ ທັງທາງກົງ ແລະ ຜ່ານອົງການສາກົນຕ່າງໆຫລາຍກວ່າປະເທດໃດໆ. ສະນັ້ນ ຫລາຍປະເທດຈຶ່ງເອົາໃຈໃສ່ຄົ້ນຄວ້າ ແລະ ຍາດແຍ່ງເອົາການຊ່ວຍເຫລືອຈາກປະເທດຍີ່ປຸ່ນ. ໃນນັ້ນ, ນອກຈາກການຊ່ວຍເຫລືອລ້າແລ້ວ, ຫລາຍປະເທດຍັງພະຍາຍາມຍາດແຍ້ງໃຫ້ໄດ້ ການຊ່ວຍເຫລືອແບບເປັນເງິນກູ້ດອກເບ້ຍຕ່ຳ, ໄລຍະຍາວ ໂດຍຜ່ານ**ກອງທຶນເພື່ອການຮ່ວມມືທາງເສດຖະກິດພົ້ນທະເລຂອງຍີ່ປຸ່ນ** (Oversea Economic Cooperation Fund ຫລື OECF).

ກອງທຶນນີ້ ໄດ້ຮັບການສ້າງຕັ້ງຂຶ້ນໂດຍລັດຖະບານຍີ່ປຸ່ນໃນປີ 1960 ເພື່ອຈຸດປະສົງສົ່ງເສີມການຮ່ວມມືທາງເສດຖະກິດລະຫວ່າງປະເທດ, ໂດຍສະເພາະປະເທດພວມພັດທະນາ; ສົ່ງເສີມການລົງທຶນທັງພາກລັດ ແລະ ພາກເອກະຊົນເຂົ້າໃນໂຄງການຕ່າງໆ ທີ່ມີສ່ວນໃນການຊຸກຍູ້ການພັດທະນາເສດຖະກິດ ບົນພື້ນຖານການສະໜັບສະໜູນດ້ານການເງິນ, ດ້ານເຕັກນິກ ແລະ ວິຊາການ... ເປັນຕົ້ນແມ່ນລົງທຶນເຂົ້າໃນໂຄງການທີ່ຈຳເປັນ ຕົ້ນຕໍເຊັ່ນ: ການກະສິກຳ, ອຸດສາ

ທະກຳ. ບໍ່ແຮ່, ການສື່ສານໂທລະຄົມ ແລະ ລະບົບສາທາລະນຸປະໂພກ.

ໃນຫລາຍປີຜ່ານມາ ກອງທຶນນີ້ໄດ້ໃຫ້ທັງເງິນກູ້ແກ່ລັດຖະບານ ແລະ ໃຫ້ທັງເງິນທຶນ ເພື່ອຮ່ວມລົງທຶນກັບເອກະຊົນ ໃນປະເທດຜູ້ຮັບການຊ່ວຍເຫລືອເປັນຈຳນວນຫລວງຫລາຍ. ການໃຫ້ ແລະ ການຮ່ວມລົງທຶນ ມີລັກສະນະເປັນການໃຫ້ການຊ່ວຍເຫລືອຫລາຍກວ່າເພາະມີເງື່ອນໄຂຜ່ອນຜັນທີ່ສຸດ ຖ້າທຽບກັບເງິນກູ້ຈາກແຫລ່ງອື່ນໆເປັນຕົ້ນແມ່ນດອກເບ້ຍຕ່ຳຫລາຍ ແລະ ໄລຍະການແທນຄືນກໍ່ຍາວເປັນພິເສດ.

ການໃຫ້ກູ້ ແລະ ການຮ່ວມລົງທຶນຈາກກອງທຶນນີ້ ສ່ວນໃຫຍ່ແມ່ນຢູ່ໃນຂົງເຂດຄົມມະນາຄົມ, ໄຟຟ້າ ແລະ ການຄ້າລະຫວ່າງປະເທດ ເພື່ອນຳເຂົ້າວັດຖຸດິບທີ່ຈະໃຊ້ໃນການຜະລິດອຸດສາຫະກຳຕໍ່. ນອກຈາກນັ້ນແລ້ວ, ກອງທຶນນີ້ ຍັງໃຫ້ການຊ່ວຍເຫລືອ ທີ່ເປັນປະໂຫຍດໃນດ້ານອື່ນແກ່ປະເທດພວມພັດທະນາເຊັ່ນ: ການຊ່ວຍເຫລືອດ້ານການວິໄຈເສດຖະກິດ, ການຈັດປະຊຸມສຳມະນາທາງວິຊາການ, ການໃຫ້ຄຳປຶກສາໃນການດຳເນີນໂຄງການຕ່າງໆ.

ພິຈາລະນາເບິ່ງແລ້ວ ເຫັນວ່າກອງທຶນເພື່ອການຮ່ວມມືທາງເສດຖະກິດພົ້ນທະເລຂອງຍີ່ປຸ່ນ ກໍ່ແມ່ນແຫລ່ງທຶນຊ່ວຍເຫລືອຢ່າງໜຶ່ງທີ່ໜ້າສົນໃຈ ແລະ ເປັນແຫລ່ງທຶນຊ່ວຍເຫລືອ ທີ່ມີວັດຖຸປະສົງສອດຄ່ອງກັບທິດທາງການພັດທະນາປະເທດ ຂອງພວກເຮົາ. ສະນັ້ນ ການເສີມຂະຫຍາຍຄວາມເປັນເຈົ້າການ ແລະ ຄວາມສາມາດ

ຊອກຮູ້ ແລະ ຍາດແຍ່ງເອົາການຊ່ວຍເຫລືອກູ້ຢືມຈາກກອງທຶນດັ່ງກ່າວ ຍ່ອມຈະເປັນຜົນດີສຳລັບການພັດທະນາ.

• ໃນຖານະທີ່ເປັນສ່ວນປະກອບ ຫລື ຮູບການໜຶ່ງແຫ່ງການຮ່ວມມືລະຫວ່າງປະເທດ, ການຊ່ວຍເຫລືອຍັງມີບົດບາດສຳຄັນບໍ່ພຽງແຕ່ດ້ານເປັນກຳລັງແຮງ ແຫ່ງການພັດທະນາເສດຖະກິດ-ສັງຄົມຂອງປະເທດຜູ້ຮັບທໍ່ນັ້ນ, ແຕ່ຍັງມີບົດບາດສຳຄັນໃນການເສີມສ້າງຄວາມເຂົ້າອົກເຂົ້າໃຈ, ຄວາມໄວ້ເນື້ອເຊື່ອໃຈ ແລະ ຄວາມມີໄມຕີຈິດມິດຕະພາບລະຫວ່າງລັດຖະບານ ແລະ ປະຊາຊົນຂອງປະເທດຜູ້ໃຫ້ກັບລັດຖະບານ ແລະ ປະຊາຊົນຂອງປະເທດຜູ້ຮັບອີກດ້ວຍ. ສະນັ້ນຈຶ່ງຖືການຊ່ວຍເຫລືອ ເປັນກາລະໂອກາດຢ່າງໜຶ່ງແຫ່ງການພັດທະນາ.

<u>ກາລະໂອກາດທີ່ຫ້າ</u>: **ການກູ້ຢືມທຶນຈາກແຫລ່ງທີ່ເຫມາະສົມສຳລັບການພັດທະນາຍັງມີຄວາມເປັນໄປໄດ້.**

ຄວາມຈິງມີຢູ່ວ່າ, ໃນຍຸກປັດຈຸບັນ ປະເທດພວມພັດທະນາຫລາຍປະເທດ ພວມປະສົບບັນຫາໜັກໜ່ວງທາງດ້ານໜີ້ສິນຕໍ່ຕ່າງປະເທດ. ສະນັ້ນ ຈຶ່ງຄວນຄົ້ນຄວ້າສ້າງຄວາມເຂົ້າໃຈບັນຫານີ້ໃຫ້ເລິກເຊິ່ງ ເພື່ອບໍ່ໃຫ້ຕົກເຂົ້າສູ່ສະພາບ "ຢ້ານໜີ້" ເກີນກວ່າເຫດ.

ມີບັນຫາໜັກໜ່ວງທາງດ້ານໜີ້ສິນ ໝາຍເຖິງການມີບັນຫາໃນດ້ານການທົດແທນເງິນທຶນທີ່ຢືມມາ ແລະ ມີບັນຫາດ້ານການໃຊ້ຄ່າດອກເບ້ຍ. ສາເຫດສຳຄັນຂອງບັນຫານີ້ສິນມາຈາກການນຳໃຊ້ທຶນບໍ່ມີປະສິດທິຜົນ. ຈາກນັ້ນ ຈຶ່ງບໍ່ສາມາດໃຊ້ແທນຄືນທັງຕົ້ນທຶນ,

ດອກເບ້ຍ ແລະ ຄ່າບໍລິການໄດ້ຕາມສັນຍາ ແລະ ເວລາທີ່ກຳນົດໄວ້. ເມື່ອບໍ່ສາມາດໃຊ້ແທນທັງຕົ້ນທຶນ ແລະ ດອກເບ້ຍ, ໜີ້ກໍ່ນັບມື້ນັບເພີ່ມຫລາຍຂຶ້ນ, ໃນຂະນະດຽວກັນນັ້ນ ຄວາມສາມາດໃຊ້ຄືນຍິ່ງຫລຸດລົງ. ຈາກນັ້ນຈຶ່ງພາໃຫ້ເກີດບັນຫາໜັກໜ່ວງທາງດ້ານໜີ້ສິນ.

ການມີໜີ້ບໍ່ແມ່ນສິ່ງແປກປະຫລາດ ແລະ ບໍ່ແມ່ນສິ່ງເປັນຕາຢ້ານຈົນເກີນໄປ. ເວົ້າແທ້, ປະເທດໃດກໍ່ມີໜີ້, ໃນນັ້ນລວມທັງປະເທດມະຫາອຳນາດທາງເສດຖະກິດ.

ສຳລັບປະເທດພວມພັດທະນາ, ປະເທດໃດກໍ່ມີໜີ້, ແຕ່ອັນນັ້ນ ບໍ່ໝາຍຄວາມວ່າທຸກປະເທດລ້ວນແຕ່ມີບັນຫາດ້ານໜີ້ສິນ. ປະເທດພວມພັດທະນາຫລາຍປະເທດບໍ່ມີບັນຫາດ້ານໜີ້ສິນ, ທັງນີ້ກໍ່ຍ້ອນວ່າຈຳນວນໜີ້ທີ່ເຂົາເຈົ້າມີນັ້ນ ບໍ່ໄດ້ເກີນກວ່າລະດັບຄວາມອາດສາມາດແທນຄືນ ໃນແຕ່ລະໄລຍະ.

+ ຄວາມສາມາດແທນຄືນນີ້, ເພິ່ນກຳນົດ ຫລື ຕີລາຄາໂດຍອີງໃສ່ອັດຕາສ່ວນຂອງມູນຄ່າສິນຄ້າ ແລະ ການບໍລິການທີ່ສົ່ງອອກໄປຂາຍຕ່າງປະເທດ ຕໍ່ລວມຍອດມູນຄ່າຂອງຜະລິດຕະພັນແຫ່ງຊາດ. ເພາະວ່າການສົ່ງອອກສິນຄ້າ ແລະ ການບໍລິການເປັນແຫລ່ງທີ່ມາຂອງເງິນຕາຕ່າງປະເທດ (ເປັນຕົ້ນແມ່ນເງິນໂດລາສະຫະລັດ) ທີ່ສາມາດໃຊ້ແທນໜີ້ໄດ້ເປັນໄລຍະໆ. ພ້ອມນັ້ນ ກໍ່ອີງໃສ່ປະລິມານເງິນຕາຕ່າງປະເທດຢູ່ໃນຄັງສຳຮອງຂອງປະເທດນັ້ນໆ.

ປະເທດ ຫລື ສະຖາບັນການເງິນທີ່ໃຫ້ກູ້ຢືມ ຍາມໃດເຂົາເຈົ້າກໍ່ເບິ່ງວ່າ ປະເທດທີ່ຈະກູ້ເງິນມີຄວາມສາມາດແທນຄືນຫລືບໍ່; ຊຶ່ງໃນ

ນັ້ນຈະເບິ່ງການສົ່ງອອກສິນຄ້າ, ເບິ່ງຄັງສຳຮອງເງິນຕາຕ່າງປະເທດ, ເບິ່ງຄວາມໜ້າເຊື່ອຖືຂອງລັດຖະບານ, ເບິ່ງຕົວເລກໜີ້ສິນ ລວມທັງລະບົບກົນໄກ ແລະ ວິໄນທາງການເງິນຂອງປະເທດທີ່ຢາກກູ້ນຳອີກ.

ຢາກຢືມເງິນນຳຕ່າງປະເທດ ຫລື ສະຖາບັນການເງິນຕ່າງໆບໍ່ແມ່ນເລື່ອງງ່າຍປານໃດ! ແຕ່ກໍ່ບໍ່ແມ່ນສິ່ງທີ່ເປັນໄປບໍ່ໄດ້. ປະເທດພວມພັດທະນາ, ດ້ອຍພັດທະນາ ມີເງື່ອນໄຂ ແລະ ມີຄວາມສາມາດທີ່ຈະເຂົ້າເຖິງແຫລ່ງເງິນກູ້ຕ່າງໆໄດ້. ສິ່ງສຳຄັນ ແມ່ນປະເທດນັ້ນຕ້ອງມີເຈດຈຳນົງອັນຈະແຈ້ງເປັນຮູບປະທຳ; ເປັນຫຍັງຈຶ່ງຢາກຢືມ ຢືມໄປເຮັດຫຍັງ ແລະ ການໃຊ້ຈະມີປະສິດທິຜົນຄືແນວໃດ.

ຫມາຍຄວາມວ່າ ປະເທດທີ່ຕ້ອງການກູ້ຢືມຕ້ອງສ້າງຄວາມໄວ້ເນື້ອເຊື່ອໃຈ ຫລື ຄວາມໜ້າເຊື່ອຖືແກ່ປະເທດ ຫລື ສະຖາບັນການເງິນທີ່ຕົນຈະຂໍກູ້ຢືມນັ້ນສາກ່ອນ. ພ້ອມນັ້ນ ກໍ່ຕ້ອງມີຄວາມເປັນເຈົ້າກີ້ເຈົ້າການ ວິ້ງເຕັ້ນນຳສະເໜີ ແລະ ເຈລະຈາປຶກສາຫາລືຫລາຍເທື່ອຫລາຍທີ. ຫາກຂາດຄວາມເປັນເຈົ້າການກໍ່ອາດຖືໄດ້ວ່າຂາດຄວາມຕ້ອງການ. ການເຊີດຊູຄວາມເປັນເຈົ້າການເປັນເລື່ອງສຳຄັນ, ໂດຍສະເພາະ ແມ່ນຄວາມເປັນເຈົ້າການນຳໃຊ້ທຶນໃຫ້ມີປະສິດທິຜົນສູງ ແລະ ຄວາມເປັນເຈົ້າການສົ່ງທຶນ ແລະ ດອກເບ້ຍຄືນໃຫ້ຖືກຕາມກຳນົດເວລາ ແລະ ຄົບຖ້ວນ.

ບາງປະເທດ ໄດ້ພະຍາຍາມຍົກອັດຕາສ່ວນການຊຳລະໜີ້ຕ່າງປະເທດ ຂອງລັດຖະບານໃຫ້ສູງຂຶ້ນຕາມລະດັບການຂະຫຍາຍຕົວຂອງເສດຖະກິດ. ຕົວຢ່າງໃນປີ 1980 ເຄີຍຊຳລະໃນອັດຕາ 5%, ແຕ່

ໃນປີ 1990 ພັດສະເໜີຂໍເພີ່ມອັດຕາການຊຳລະຂຶ້ນເປັນ 10%. ການເພີ່ມອັດຕາການຊຳລະໜີ້ຂຶ້ນຄືແນວນີ້ ຕົ້ນຕໍແມ່ນເພື່ອສະແດງໃຫ້ປະເທດ ແລະ ສະຖາບັນການເງິນທີ່ໃຫ້ຢືມເຫັນວ່າ ປະເທດນັ້ນມີຄວາມສາມາດສູງຂຶ້ນໃນການຊຳລະໜີ້. ແຕ່ຕ້ອງເຂົ້າໃຈວ່າ ການສະເໜີເພີ່ມອັດຕາການຊຳລະໜີ້ນັ້ນ ແມ່ນເຮັດໄດ້ບົນພື້ນຖານຂອງຄວາມສາມາດຮອງຮັບທາງດ້ານເສດຖະກິດ - ການເງິນທີ່ແທ້ຈິງຂອງປະເທດຕົນ; ແຕ່ບໍ່ແມ່ນເພີ່ມອັດຕາການຊຳລະໜີ້ ເພື່ອຈຸດປະສົງທາງການເມືອງ ຫລືວ່າເພີ່ມຍ້ອນການຢືມເພີ່ມ ເພື່ອມາຊຳລະໜີ້ຕໍ່.

ການເພີ່ມອັດຕາສ່ວນການແທນໜີ້ ບົນພື້ນຖານຂອງຄວາມສາມາດທີ່ແທ້ຈິງນັ້ນ ຍ່ອມສະແດງວ່າປະເທດທີ່ໄດ້ຮັບເງິນກູ້ໄປນັ້ນຮູ້ໃຊ້ ຫລື ໃຊ້ເງິນກູ້ຢືມມີປະສິດທິຜົນ, ຊ່ວຍສ້າງຄວາມຈະເລີນເຕີບໂຕທາງເສດຖະກິດໃນປະເທດນັ້ນແທ້. ໃນກໍລະນີນີ້ ປະເທດທີ່ໃຫ້ກູ້ຢືມ ຫລື ສະຖາບັນການເງິນຕ່າງໆຂອງສາກົນກໍ່ພໍໃຈ, ມີຄວາມເຊື່ອໝັ້ນ ແລະ ແນ່ນອນຈະຕ້ອງພິຈາລະນາອະນຸມັດເງິນກູ້ໃຫ້ປະເທດນັ້ນງ່າຍຂຶ້ນ ແລະ ຫລາຍກວ່າເກົ່າ.

ການໃຫ້ເງິນກູ້ໃດໆ ຍ່ອມມີເງື່ອນໄຂ, ສ່ວນວ່າເງື່ອນໄຂຈະມີໜ້ອຍຫລາຍຄືແນວໃດນັ້ນ ແລ້ວແຕ່ຜູ້ໃຫ້ ແລະ ຜູ້ຮັບຈະຕົກລົງກັນ. ໂດຍທົ່ວໄປ ຜູ້ໃຫ້ກູ້ຈະເປັນຜູ້ວາງເງື່ອນໄຂ; ສ່ວນຜູ້ຢາກກູ້ (ຂໍກູ້) ມີໜ້າທີ່ເຈລະຈາຕໍ່ລອງ ແລະ ອະທິບາຍຊີ້ແຈ້ງໃຫ້ຜູ້ທີ່ຈະໃຫ້ກູ້ເຂົ້າໃຈ ແລະ ເຫັນໃຈ.

ບົດຮຽນຈາກພຶດຕິກຳຂອງຫລາຍປະເທດຊີ້ໃຫ້ເຫັນວ່າ ຈະຫລີກຈາກເງື່ອນໄຂ ແມ່ນເປັນໄປບໍ່ໄດ້. ສິ່ງສຳຄັນມີແຕ່ວ່າເງື່ອນໄຂໃດທີ່ຮັບເອົາແລ້ວ ຕ້ອງປະຕິບັດຢ່າງເຂັ້ມງວດ. ຫາກປະຕິບັດບໍ່ເຂັ້ມງວດ, ເຖິງວ່າຈະມີເຫດຜົນມາອ້າງແນວນັ້ນແນວນີ້ກໍ່ຕາມ ຜູ້ໃຫ້ກູ້ຈະຖືວ່າຜູ້ກູ້ບໍ່ຈິງໃຈປະຕິບັດຄຳໝັ້ນສັນຍາ ຫລືບໍ່ກໍ່ຕີລາຄາວ່າ ຜູ້ກູ້ນັ້ນຂາດຄວາມສາມາດໃນການນຳໃຊ້ທຶນກູ້ຢືມຢ່າງມີປະສິດທິຜົນ. ຈາກຈຸດນີ້ຄວາມໜ້າເຊື່ອຖືຂອງຜູ້ກູ້ຈະຖືກຫລຸດຜ່ອນລົງ. ສະນັ້ນ ທາງເລືອກທີ່ເໝາະສົມຄື: ຖ້າເງື່ອນໄຂໃດເຫັນວ່າບໍ່ເໝາະສົມກັບຄວາມສາມາດປະຕິບັດ ຫລື/ແລະ ບໍ່ເປັນຜົນດີກໍ່ຄວນປະຕິເສດບໍ່ຮັບເອົາ ຫລືຢ່າງໜ້ອຍກໍ່ຕ້ອງເຈລະຈາຕໍ່ລອງໃຫ້ມີການຜ່ອນຜັນລົງ. ຖ້າອັນໃດເຫັນວ່າເໝາະ ແລະ ຈະເປັນຜົນດີ ເມື່ອໄດ້ຮັບຮອງເອົາແລ້ວ ຕ້ອງປະຕິບັດຢ່າງຈິງຈັງ.

ແນວໃດກໍ່ຕາມ ການກູ້ຢືມຍັງມີຄວາມຈຳເປັນສຳລັບປະເທດພວມພັດທະນາ-ດ້ອຍພັດທະນາທັງຫລາຍ. ເງິນກູ້ຢືມຈາກຕ່າງປະເທດ ແລະ ອົງການການເງິນ ຫລື ສະຖາບັນການເງິນລະຫວ່າງຊາດຍັງເປັນປັດໄຈສຳຄັນອັນໜຶ່ງທີ່ສາມາດນຳໃຊ້ ເພື່ອສົມທົບ ແລະ ເສີມຂະຫຍາຍທ່າແຮງບົ່ມຊ້ອນທີ່ມີຢູ່ໃນແຕ່ລະປະເທດພວມພັດທະນາ.

• ເພື່ອເຂົ້າເຖິງແຫລ່ງເງິນກູ້ທີ່ຫລາກຫລາຍ, ບັນດາປະເທດພວມພັດທະນາ ທີ່ນຳໃຊ້ກົນໄກເສດຖະກິດຕະຫລາດ ແລະ ໃຊ້ຫລາຍພາກສ່ວນເສດຖະກິດ ໄດ້ພະຍາຍາມຕິດຕໍ່ພົວພັນກັບ**ບໍລິສັດການເງິນລະຫວ່າງປະເທດ** (International Finance Corporation

ຫລື IFC) ຊຶ່ງເປັນສະຖາບັນການເງິນໃນເຄືອຂ່າຍຂອງທະນາຄານໂລກ.

ປະເທດເຫລົ່ານັ້ນ ໄດ້ພະຍາຍາມພົວພັນຍາດແຍ່ງທຶນຈາກບໍລິສັດນີ້ກໍ່ເພາະວ່າ, ບໍລິສັດມີຈຸດປະສົງ ແລະ ສົ່ງເສີມການລົງທຶນໃນພາກເອກະຊົນ ແລະ ສະໜັບສະໜູນທຸລະກິດ ໃນພາກເອກະຊົນທີ່ມີສ່ວນປະກອບອັນສຳຄັນ ໃນການພັດທະນາເສດຖະກິດຂອງປະເທດພວມພັດທະນາ.

ການສົ່ງເສີມ ແລະ ສະໜັບສະໜູນຈະຖືກປະຕິບັດ ໂດຍຜ່ານການໃຫ້ການຊ່ວຍເຫລືອດ້ານການເງິນ ເຕັກນິກ ແລະ ດ້ານການບໍລິຫານຈັດການທີ່ຈຳເປັນ ເພື່ອຂະຫຍາຍໂອກາດໃນດ້ານການລົງທຶນໃນປະເທດພວມພັດທະນາ. ໃນນີ້ ບໍລິສັດການເງິນລະຫວ່າງປະເທດຈະປະຕິບັດໜ້າທີ່ໃຫ້ເງິນກູ້ໂດຍກົງພຽງຜູ້ດຽວ ຫລື ໃຫ້ກູ້ຮ່ວມກັບທະນາຄານທຸລະກິດ, ຫລື ບາງກໍລະນີກໍ່ຈະເຂົ້າຖືຫຸ້ນນຳບໍລິສັດເອກະຊົນ ໂດຍບໍ່ຈຳເປັນຕ້ອງມີລັດຖະບານເປັນຜູ້ຄ້ຳປະກັນໃຫ້ແຕ່ຢ່າງໃດ.

- ມາຮອດປັດຈຸບັນ ການໃຫ້ກູ້ ແລະ ການຮ່ວມທຶນຂອງບໍລິສັດການເງິນລະຫວ່າງປະເທດ ມີມູນຄ່າຫລາຍກວ່າ 2000 ລ້ານໂດລາສະຫະລັດ, ໂດຍໃຫ້ກູ້ ແລະ ຮ່ວມທຶນກັບບໍລິສັດເອກະຊົນ ໃນປະເທດກຳລັງພັດທະນາຫລາຍກວ່າ 70 ປະເທດ; ໃນນັ້ນ ສ່ວນໃຫຍ່ແມ່ນໃຫ້ກູ້ ແລະ ຮ່ວມທຶນໃນຂົງເຂດອຸດສາຫະກຳຊີມັງ ແລະ ວັດສະດຸກໍ່ສ້າງ, ທຸລະກິດດ້ານການກະສິກຳ ແລະ ການບໍລິການເຊັ່ນ: ໂຮງແຮມ, ທ່ອງທ່ຽວ, ຮ້ານອາຫານພັດຕະຄານ...

ການສະໜັບສະໜູນທາງການເງິນ ຂອງບໍລິສັດການເງິນລະຫວ່າງປະເທດ ສ່ວນໃຫຍ່ຈະໃຫ້ກູ້ໄລຍະຍາວ ໂດຍຂຶ້ນກັບຈຸດພິເສດຂອງແຕ່ລະໂຄງການ, ແຕ່ໂດຍທົ່ວໄປ ຈະມີກຳນົດເວລາ 7-12 ປີ, ໄລຍະປອດໜີ້ໂດຍສະເລ່ຍ 3 ປີ; ສ່ວນອັດຕາດອກເບ້ຍນັ້ນ ແມ່ນຂຶ້ນກັບອັດຕາດອກເບ້ຍຕະຫລາດ.

ມາໃນຊຸມປີຫລັງມານີ້ ບໍລິສັດຍັງໄດ້ໃຫ້ການຊ່ວຍເຫລືອໃນດ້ານຕ່າງໆ ແກ່ປະເທດພວມພັດທະນາຫລາຍຂຶ້ນ ເປັນຕົ້ນແມ່ນການຊ່ວຍສະຖາບັນ ແລະ ໜ່ວຍງານຕ່າງໆ ເພື່ອສ້າງເງື່ອນໄຂ ແລະ ສ້າງໂອກາດ ໃຫ້ເຂົ້າເຖິງຕະຫລາດເງິນລະຫວ່າງປະເທດໄດ້ສະດວກຂຶ້ນ.

ພ້ອມດຽວກັນນັ້ນ ບໍລິສັດໄດ້ເນັ້ນໜັກການໃຫ້ທຶນ ແລະ ການຮ່ວມທຶນກັບບໍລິສັດເອກະຊົນໃນປະເທດພວມພັດທະນາ ໃນຂົງເຂດອຸດສາຫະກຳພະລັງງານ, ອຸດສາຫະກຳປຸງແຕ່ງກະສິກຳ ເປັນຕົ້ນແມ່ນການຜະລິດອາຫານ ແລະ ການກະສິກຳ...

ໃນເງື່ອນໄຂທີ່ປະເທດເຮົາ ດຳເນີນນະໂຍບາຍສົ່ງເສີມບັນດາພາກສ່ວນເສດຖະກິດ ເປັນຕົ້ນແມ່ນເອກະຊົນພາຍໃນປະເທດໃຫ້ມີບົດບາດ ແລະ ມີກຳລັງແຮງຫລາຍຂຶ້ນໃນການປະກອບສ່ວນພັດທະນາປະເທດນັ້ນ, ການເຂົ້າເຖິງແຫລ່ງເງິນກູ້ຈາກສະຖາບັນການເງິນລະຫວ່າງປະເທດ ກໍ່ອາດເປັນໂອກາດທີ່ດີອັນໜຶ່ງ, ເພາະເບິ່ງແລ້ວເຫັນວ່າຈຸດປະສົງ ແລະ ໜ້າທີ່ໃນການສະໜັບສະໜູນດ້ານເງິນທຶນ ແລະ ການຮ່ວມທຶນຂອງບໍລິສັດດັ່ງກ່າວ ແມ່ນນອນຢູ່ໃນຂອບເຂດ

ແຫ່ງການສົ່ງເສີມດ້ວຍນະໂຍບາຍຂອງລັດ ແລະ ຖືກກັບແນວທາງຂອງພັກເຮົາ.

★ ການກູ້ຢືມຍ່ອມພາໃຫ້ມີຫນີ້. "ເປັນຫນີ້" ບໍ່ຫມາຍຄວາມວ່າມີບັນຫາດ້ານຫນີ້ສິນ.

ການກູ້ຢືມທຶນຈາກແຫ່ງຕ່າງໆ, ເຖິງຈະແມ່ນລັດຖະບານ ຫລືພາກສ່ວນເສດຖະກິດອື່ນກູ້ກໍ່ຕາມ ຖ້າຫາກນໍາໃຊ້ມີປະສິດທິຜົນສາມາດທົດແທນທຶນ ແລະ ດອກເບ້ຍພ້ອມຄ່າບໍລິການໄດ້ຕາມສັນຍາ, ອັນນັ້ນ ຍ່ອມຖືໄດ້ວ່າເປັນກາລະໂອກາດຢ່າງຫນຶ່ງແຫ່ງການສ້າງສາພັດທະນາ.

**<u>ກາລະໂອກາດທີ່ທັກ</u>: ການລົງທຶນໂດຍກົງຂອງຕ່າງປະເທດຍັງສືບຕໍ່ຂະຫຍາຍຕົວ ແລະ ເປັນແຮງຫນຶ່ງທີ່ສໍາຄັນ ໃນການຍູ້ການເຕີບໂຕຂອງເສດຖະກິດ.**

★ ດັ່ງໄດ້ສະເຫນີແລ້ວວ່າ ການສົ່ງທຶນຂ້າມຊາດ ແມ່ນປັດໄຈສໍາຄັນອັນຫນຶ່ງ ແຫ່ງໂລກາພິວັດທາງເສດຖະກິດ. ການໄຫລວຽນຂອງທຶນ ນັບມື້ນັບເປັນກະແສອັນກວ້າງຂວາງ, ມີຄວາມສະລັບສັບຊ້ອນ ແລະ ມີຜົນກະທົບອັນຕັ້ງຫນ້າຕໍ່ສະພາວະເສດຖະກິດຂອງໂລກ. ອັນນີ້ ບໍ່ຕ່າງຫຍັງກັບການໄຫລວຽນຂອງເລືອດໃນຮ່າງກາຍຂອງຄົນເຮົາ. ຖ້າຫາກເລືອດໄຫລໄປຫລໍ່ລ້ຽງສ່ວນຕ່າງໆຂອງຮ່າງກາຍເປັນລະບົບ ສະຫມໍ່າສະເຫມີ ແລະ ພຽງພໍ, ປາສະຈາກສິ່ງແຊກຊ້ອນທີ່ເປັນພິດເປັນໄພ ຄົນເຮົາຈະມີສຸຂະພາບດີ.

ກະແສໄຫລວຽນຂອງທຶນເຊັ່ນດຽວກັນ ຖ້າຫາກມັນເປັນໄປຢ່າງປົກກະຕິ, ສະຫມ່ຳສະເຫມີ ແລະ ມີໃນລະດັບອັນພຽງພໍ ມັນສາມາດເຮັດໃຫ້ສະພາວະເສດຖະກິດຂອງປະເທດຕ່າງໆດີຂຶ້ນ; ເຮັດໃຫ້ການພັດທະນາ ແລະ ການເຕີບໂຕເປັນໄປຢ່າງຕໍ່ເນື່ອງ.

★ ການເວົ້າເຖິງທຶນ ແລະ ການໄຫລວຽນຂອງທຶນໃນທີ່ນີ້ ມີຄວາມຫມາຍເຈາະຈິງ ເຖິງການລົງທຶນໂດຍກົງຂອງຕ່າງປະເທດ (Foreign Direct Investment ຫລື FDI). ເຫດຜົນທີ່ເຈາະຈິງ ກໍ່ເພາະວ່າການລົງທຶນໂດຍກົງຂອງຕ່າງປະເທດ ມີລັກສະນະຕັ້ງຫນ້າໃນການຍູ້ຂະແຫນງເສດຖະກິດຈິງ (Real Economic) ໃຫ້ຂະຫຍາຍຕົວ ຫລື ຍູ້ການເຕີບໂຕທາງເສດຖະກິດທີ່ແທ້ຈິງ.

ຂະແຫນງເສດຖະກິດຈິງແມ່ນຂະແຫນງການຜະລິດ ແລະ ບໍລິການທີ່ສ້າງຄຸນຄ່າໃຫມ່, ສ້າງຜະລິດຕະພັນໃຫມ່ ເພື່ອຕອບສະຫນອງຄວາມຕ້ອງການຂອງຄົນ.

★ ໃນບົດລາຍງານຂອງທະນາຄານໂລກປີ 2001 ຊີ້ໃຫ້ເຫັນວ່າ ບໍລິມາດທຶນທີ່ໄຫລວຽນໃນຕະຫລາດຫຸ້ນ-ຕະຫລາດທຶນໃນປີ 1997 ໄດ້ຫລຸດລົງຈາກ 85% ເປັນ 78,8% ໃນປີ 2000, ສ່ວນບໍລິມາດຂອງທຶນທີ່ໃຊ້ໃນການລົງທຶນໂດຍກົງໄດ້ເພີ່ມຈາກ 13,7% ເປັນ 20,4% ໃນໄລຍະດຽວກັນ (ໃນບໍລິມາດທຶນລວມກວ່າ 5000 ຕື້ໂດລາສະຫະລັດ).

ຈາກຕົວເລກດັ່ງກ່າວສາມາດອະທິບາຍໄດ້ວ່າ ການລົງທຶນແບບທາງອ້ອມໂດຍຜ່ານຕະຫລາດທຶນ, ຕະຫລາດຫຸ້ນ ເຖິງວ່າຈະມີ

ປະລິມານຫລາຍ ແລະ ກວມສ່ວນໃຫຍ່ໃນຍອດທຶນທີ່ໄຫລວຽນຢູ່ໃນໂລກກໍ່ຈິງ, ແຕ່ປະລິມານການລົງທຶນໂດຍກົງກໍ່ຍັງສືບຕໍ່ໄຫລວຽນໄປຍັງປະເທດ ແລະ ເຂດແຄວ້ນຕ່າງໆຂອງໂລກຕາມທ່າອ່ຽງທີ່ເພີ່ມຂຶ້ນ ຊ່ວຍຍູ້ການເຕີບໂຕທາງເສດຖະກິດ ແລະ ການພັດທະນາສັງຄົມໃນປະເທດ ແລະ ເຂດແຄວ້ນນັ້ນໆໃຫ້ມີບາດກ້າວໃຫມ່.

✶ ຢູ່ສາທາລະນະລັດ ປະຊາຊົນຈີນ ມີຜົນສຳເລັດທີ່ຫນ້າພາກພູມໃຈໃນການດຶງດູດ ແລະ ນຳໃຊ້ການລົງທຶນຂອງຕ່າງປະເທດ. ໃນປີ 1985 ມູນຄ່າການລົງທຶນຕາມສັນຍາມີ 9,87 ຕື້ໂດລາສະຫະລັດ, ໃນນັ້ນ ສາມາດປະຕິບັດ ແລະ ນຳໃຊ້ຕົວຈິງໄດ້ 4,65 ຕື້ໂດລາ. ໃນປີ 1995 ມູນຄ່າການລົງທຶນຕາມສັນຍາໄດ້ເພີ່ມສູງເປັນປະຫວັດການ ເຖິງ 103,21 ຕື້ໂດລາສະຫະລັດ, ໃນນັ້ນ ສາມາດປະຕິບັດ ຫລື ນຳໃຊ້ຕົງຈິງພຽງແຕ່ 48,13 ຕື້. ສ່ວນໃນປີ 2000 ເຖິງວ່າມູນຄ່າການລົງທຶນຕາມສັນຍາໄດ້ຫລຸດລົງຢູ່ທີ່ 62,4 ຕື້, ແຕ່ການປະຕິບັດ ແລະ ນຳໃຊ້ໄດ້ບັນລຸເຖິງ 59,36 ຕື້ໂດລາ. ຫມາຍຄວາມວ່າ ປະຕິບັດໄດ້ເກືອບຄົບຕາມສັນຍາ, ຊຶ່ງແຕກຕ່າງຢ່າງເລິກເຊິ່ງກັບປີ 1995*.

ການທີ່ ສປ ຈີນ ຍາດໄດ້ຜົນສຳເລັດອັນໃຫຍ່ຫລວງໃນການສົ່ງເສີມການລົງທຶນຂອງຕ່າງປະເທດໃນປີ 2000 ນັ້ນ, ອາດແມ່ນຍ້ອນ

---

* CHINA: FACTS & FUGURES, 2001, ຫນ້າ 135. NEW STAR PUBLISHERS

ວ່າໃນປີ 1999 ລັດຖະບານ ສປ ຈີນ ໄດ້ດຳເນີນນະໂຍບາຍໃໝ່ ແລະ ປະຕິບັດມາດຕະການສຳຄັນຫລາຍຢ່າງ ເພື່ອດຶງດູດການລົງທຶນຂອງຕ່າງປະເທດ. ມາດຕະການຕ່າງໆເຫລົ່ານັ້ນ ມີຄື:

1/. ເພີ່ມຄວາມແຈ້ງໄສໃນນະໂຍບາຍ, ກົດຫມາຍ ແລະ ລະບຽບການຕ່າງໆຂອງລັດຖະບານ ທີ່ພົວພັນເຖິງການລົງທຶນຂອງຕ່າງປະເທດ.

2/. ເປີດຕະຫລາດພາຍໃນຂອງ ສປ ຈີນ ແລະ ປັບປຸງຕະຫລາດເອກະພາບໃຫ້ຫນັກແຫນ້ນ ບົນພື້ນຖານການແຂ່ງຂັນແບບສ້າງສັນ.

ຫມາຍຄວາມວ່າ ໃຫ້ວິສາຫະກິດລົງທຶນຂອງຕ່າງປະເທດສາມາດເຂົ້າແຂ່ງຂັນໃນຕະຫລາດພາຍໃນຂອງ ສປ ຈີນໄດ້, ໂດຍສ້າງເງື່ອນໄຂທີ່ຄືກັນລະຫວ່າງວິສາຫະກິດລົງທຶນຂອງຕ່າງປະເທດ ກັບວິສາຫະກິດພາຍໃນ (ມີບາງດ້ານກໍ່ລື່ນວິສາຫະກິດພາຍໃນ).

3/. ສ້າງກົດຫມາຍຕ່າງໆອັນຈຳເປັນເພີ່ມ ເພື່ອສະຫນອງຕອບ ຕໍ່ການເປີດກວ້າງການພົວພັນຮ່ວມມືກັບຕ່າງປະເທດ ເປັນຕົ້ນແມ່ນການເຂົ້າເປັນສະມາຊິກອົງການການຄ້າໂລກ (WTO) ຂອງ ສປ ຈີນ.

4/. ເພີ່ມຄວາມເຂັ້ມງວດ ໃນການປົກປ້ອງລິຂະສິດ ຕໍ່ຊັບສິນທາງປັນຍາ.

5/. ປົກປ້ອງການເຄື່ອນໄຫວຜະລິດທຸລະກິດ ແລະ ຄວາມເປັນເຈົ້າຕົນເອງ ໃນການຄຸ້ມຄອງບໍລິຫານຂອງບໍລິສັດ ຫລື ວິສາຫະ

ກິດຕ່າງປະເທດ; ລວມທັງສິດທິ ແລະ ຜົນປະໂຫຍດທີ່ຊອບດ້ວຍກົດໝາຍຂອງຜູ້ລົງທຶນ, ກໍ່ຄືສິດທິ ແລະ ຜົນປະໂຫຍດຂອງຜູ້ອອກແຮງງານ.

ວາງກົນໄກ ແລະ ລະບຽບການເພື່ອໄກ່ເກ່ຍແກ້ໄຂບັນຫາຂັດແຍ້ງຕ່າງໆໃຫ້ສະດວກ ແລະ ຮັບປະກັນຄວາມຖືກຕ້ອງເປັນທຳ.

6/. ເພີ່ມປະສິດທິພາບຂອງການບໍລິການລົງທຶນ, ຕັດຂອດບໍລິຫານທີ່ສ້າງຄວາມອືດອາດຊັກຊ້າ, ເຮັດໃຫ້ລະບົບວຽກງານ ແລະ ກົນໄກຕ່າງໆຂອງກົງຈັກລັດເຄື່ອນໄຫວຢ່າງເອົາການເອົາງານ ແລະ ແຈ້ງໄສ.

7/. ເພີ່ມທະວີການກວດກາ ແລະ ຄຸ້ມຄອງໃຫ້ສອດຄ່ອງກັບກົດໝາຍ.

8/. ສະກັດກັ້ນບໍ່ໃຫ້ວິສາຫະກິດລົງທຶນຕ່າງປະເທດຖືກກວດກາ, ຖືກເກັບຄ່າທຳນຽມ, ການແຜ່ການບໍລິຈາກ, ການສະແຫວງຫາຜົນປະໂຫຍດ ຫລື ການປັບໄໝທີ່ບໍ່ຖືກຕ້ອງຕາມກົດໝາຍ.

ມາດຕະການຕ່າງໆເຫລົ່ານີ້ ອາດເປັນສິ່ງສ້າງຄວາມເຊື່ອໝັ້ນ ແລະ ຄວາມພໍໃຈເພີ່ມຂຶ້ນ ສຳລັບນັກລົງທຶນຕ່າງປະເທດ. ຈາກນັ້ນ ຈຶ່ງເຮັດໃຫ້ມູນຄ່າການລົງທຶນຕາມສັນຍາເພີ່ມຂຶ້ນ ແລະ ການປະຕິບັດຕົວຈິງກໍ່ມີປະສິດທິຜົນສູງ.

ການລົງທຶນຂອງຕ່າງປະເທດ ໂດຍສະເພາະແມ່ນການປະຕິບັດໂຄງການລົງທຶນຕາມສັນຍາ ທີ່ປະກົດຜົນເປັນຈິງເປັນສ່ວນໃຫຍ່ນັ້ນໄດ້ປະກອບສ່ວນຢ່າງສຳຄັນ ໃນການເພີ່ມມູນຄ່າຂອງລວມຍອດຜະລິດ

ຕະພັນພາຍໃນ ແລະ ການຮັກສາຈັງຫວະການເຕີບໂຕທາງເສດຖະກິດຂອງ ສປ ຈີນ ໃຫ້ດຳເນີນໄປຢ່າງຕໍ່ເນື່ອງໃນລະດັບສູງ. ໄລຍະແຕ່ປີ 1989-2002 ມູນຄ່າຂອງລວມຍອດຜະລິດຕະພັນພາຍໃນເພີ່ມຂຶ້ນ 9,3% ໂດຍສະເລ່ຍໃນແຕ່ລະປີ; ໃນປີ 2001 ມູນຄ່າຂອງລວມຍອດຜະລິດຕະພັນພາຍໃນຂອງ ສປ ຈີນ ທັງຫມົດມີເຖິງ 9593,3 ຕື້ຢວນ (ເງິນຈີນ), ຫລາຍກວ່າປີ 1989 ເຖິງ 3 ເທົ່າ*.

★ ການເຮັດໃຫ້ການລົງທຶນໂດຍກົງຂອງຕ່າງປະເທດກາຍເປັນກາລະໂອກາດ ຫລື ເງື່ອນໄຂແຫ່ງການພັດທະນາໄດ້ນັ້ນ ຍ່ອມຂຶ້ນກັບຄວາມມີໄຫວພິບໃນການວາງນະໂຍບາຍ, ກົດຫມາຍ ແລະ ລະບຽບການຕ່າງໆ, ກໍ່ຄືການບໍລິການທີ່ສະດວກວ່ອງໄວ ແລະ ແຈ້ງໄສ, ລວມທັງການປົກປ້ອງ, ການຄຸ້ມຄອງ - ກວດກາ ທີ່ເປັນລະບົບຢ່າງຖືກຕ້ອງຕາມລະບຽບກົດຫມາຍ ໂດຍພາກສ່ວນຕ່າງໆທີ່ກ່ຽວຂ້ອງຂອງລັດ. ແນ່ນອນສະພາບແວດລ້ອມພາຍນອກ ແລະ ປັດໄຈອື່ນກໍ່ອາດມີຜົນກະທົບໄດ້ເຊັ່ນກັນ.

ຍ້ອນວ່າມີຫລາຍປະເທດ ປະຕິບັດນະໂຍບາຍສົ່ງເສີມ ແລະ ດຶງດູດການລົງທຶນ ຕາມສະພາບຈຸດພິເສດ ແລະ ເງື່ອນໄຂສະເພາະຂອງໃຜລາວ, ສະນັ້ນ ບໍລິສັດ ແລະ ນັກລົງທຶນຕ່າງປະເທດ ຈຶ່ງມີຄວາມສາມາດເລືອກບ່ອນລົງທຶນໄດ້ຫລາຍຂຶ້ນ, ເຮັດໃຫ້ການໄຫລ

---

* ລາຍງານການເມືອງຕໍ່ກອງປະຊຸມຜູ້ແທນທົ່ວປະເທດຄັ້ງທີ່ XVI ຂອງພັກກອມມູນິດຈີນ 11/2002.

ວຽນຂອງທຶນກະຈາຍອອກໄປສູ່ປະເທດ ແລະ ເຂດແຄວັ້ນຕ່າງໆຂອງໂລກແບບບໍ່ສະຫມ່ຳສະເຫມີກັນ, ມີບ່ອນໄດ້ຮັບຫລາຍ, ມີບ່ອນໄດ້ຮັບຫນ້ອຍ ຫລື ມີບ່ອນເກືອບບໍ່ມີຜູ້ສົນໃຈໄປລົງທຶນເລີຍ.

ການໄຫລວຽນຂອງທຶນໄປຍັງປະເທດ ແລະ ເຂດແຄວັ້ນຕ່າງໆໃນໂລກ ໄດ້ສະທ້ອນໃຫ້ເຫັນສະພາບຄວາມເປັນຈິງບາງປະການດັ່ງນີ້:

\+ ການລົງທຶນລະຫວ່າງປະເທດທີ່ພັດທະນາແລ້ວດ້ວຍກັນຍັງມີບໍລິມາດຫລວງຫລາຍ ແລະ ກວມສ່ວນໃຫຍ່ຂອງຍອດມູນຄ່າການລົງທຶນໃນໂລກ.

\+ ໃນລະບົບເສດຖະກິດທີ່ເປັນແບບທົ່ວໂລກ, ຜູ້ລົງທຶນຈະແມ່ນຄົນຊາດໃດ ຫລື ກຸ່ມໃດກໍ່ຕາມ ລ້ວນແຕ່ເລັງເປົ້າໄປຍັງປະເທດທີ່ເຂົາເຈົ້າຈະສາມາດໄດ້ກຳໄລຫລາຍທີ່ສຸດ.

\+ ລັດຖະບານຂອງຫລາຍປະເທດບໍ່ໄດ້ຈຳແນກກ່ຽວກັບປະເພດທຶນວ່າ ອັນນີ້ແມ່ນທຶນພາຍໃນປະເທດ, ອັນນັ້ນແມ່ນທຶນຕ່າງປະເທດ ເພາະເຂົ້າໃຈວ່າ ການລົງທຶນທຸກປະເພດ ລ້ວນແຕ່ແມ່ນການເພີ່ມພະລັງເສດຖະກິດໃຫ້ມີຊີວິດຊີວາ; ຊ່ວຍຍົກລະດັບປະສິດທິພາບການຜະລິດໃຫ້ສູງຂຶ້ນ ແລະ ຂະຫຍາຍຂະຫນາດເສດຖະກິດໃຫ້ກວ້າງອອກ.

ເຖິງຢ່າງໃດກໍ່ດີ, ນັກເສດຖະສາດ, ນັກຄົ້ນຄວ້ານະໂຍບາຍໄດ້ໃຫ້ທັດສະນະ ຫລື ຂໍ້ແນະນຳບາງປະການກ່ຽວກັບການດຶງດູດການລົງທຶນຂອງຕ່າງປະເທດໄວ້ດັ່ງນີ້:

<u>ໜຶ່ງ</u>: ຕ້ອງສ້າງໃຫ້ໄດ້ປັດໄຈສຳຄັນ 3 ຢ່າງຄື:

**ປັດໄຈທີ** 1: • ສ້າງສະຖຽນລະພາບທາງດ້ານການເງິນ ແລະ ເງິນຕາ.

• ຮັກສາລະດັບເງິນເຟີ້ໄວ້ໃຫ້ຕໍ່າ. ເພາະວ່າເງິນເຟີ້ຕໍ່າ ຫມາຍເຖິງອັດຕາດອກເບ້ຍທະນາຄານຕ້ອງຕໍ່າ; ດອກເບ້ຍທະນາຄານຕໍ່າຍ່ອມເປັນການສ້າງສະພາບແວດລ້ອມທີ່ອຳນວຍ ໃຫ້ແກ່ການອຸດສາຫະກຳ ກໍ່ຄືການກະສິກຳ ແລະ ການບໍລິການ.

ສຳລັບນັກລົງທຶນ ເຂົາເຈົ້າຖືວ່າເງິນເຟີ້ຕໍ່າ ແມ່ນເງື່ອນໄຂທີ່ດີສຳລັບການດຳເນີນທຸລະກິດຕາມກົນໄກຕະຫລາດ.

• ເງິນເຟີ້ຕໍ່າ ຈະເຮັດໃຫ້ການຂາດດູນງົບປະມານຕໍ່າລົງ, ເມື່ອການຂາດດູນງົບປະມານຕໍ່າລົງ ແນ່ນອນຈະສົ່ງຜົນດີໃຫ້ແກ່ສະຖຽນລະພາບທາງດ້ານການເງິນ-ເງິນຕາ.

• ເງິນເຟີ້ຕໍ່າ ຍ່ອມເປັນສິ່ງຢືນຢັນວ່າ ຄ່າເງິນ ຫລື ອັດຕາແລກປ່ຽນມີຄວາມຫມັ້ນທ່ຽງ.ຄ່າເງິນຂອງຊາດມີຄວາມຫມັ້ນທ່ຽງ ຍ່ອມເຮັດໃຫ້ຄວາມເຊື່ອຫມັ້ນຕໍ່ສະຖຽນລະພາບດ້ານເງິນຕາ ກໍ່ຄືຕໍ່ເສດຖະກິດສູງຂຶ້ນ.

**ປັດໄຈທີ** 2: ມີນະໂຍບາຍເສດຖະກິດມະຫາພາກທີ່ຫມັ້ນທ່ຽງຈະແຈ້ງ ແລະ ຮັດກຸມ, ພ້ອມນັ້ນ ກໍ່ມີລະບອບລະບຽບການຕອບສະຫນອງຂໍ້ມູນ, ຂ່າວສານ, ຕົວເລກສະຖິຕິໃນດ້ານຕ່າງໆທີ່ຈຳເປັນ ແລະ ເປັນປະໂຫຍດສຳລັບການຄົ້ນຄວ້າ ແລະ ຕັດສິນໃຈໃນການດຳເນີນທຸລະກິດ.

• ຈະແມ່ນຢູ່ໃນປະເທດໃດກໍ່ຕາມ, ຖ້າຕະຫລາດມີການເຄື່ອນໄຫວຢ່າງເຕັມສ່ວນ ແລະ ມີການແຂ່ງຂັນຢ່າງຕັ້ງໜ້າ ຜູ້ປະກອບການຜະລິດ-ທຸລະກິດທັງພາຍໃນ ແລະ ຕ່າງປະເທດ ເຂົາເຈົ້າຖືວ່າບັນດານະໂຍບາຍອັນລະອຽດ ແລະ ຕົວເລກເສດຖະກິດແມ່ນສິ່ງທີ່ຂາດບໍ່ໄດ້; ເຂົາເຈົ້າຈະຄົ້ນຄວ້າຢ່າງລະອຽດເລິກເຊິ່ງທີ່ສຸດບັນດານະໂຍບາຍ ແລະ ຕົວເລກເຫລົ່ານັ້ນ.

**ປັດໄຈທີ** 3: ມີຄວາມສະດວກໃນການໂອນເງິນ (ກຳໄລ) ກັບຄືນປະເທດ.

• ກຳໄລ ແມ່ນວັດຖຸປະສົງສຸດທ້າຍຂອງການລົງທຶນ. ເມື່ອລົງທຶນໄດ້ກຳໄລ, ຜູ້ລົງທຶນ ຍ່ອມມີສິດທີ່ຈະໄດ້ຮັບເງື່ອນໄຂສະດວກຕາມກົດໝາຍໃນການໂອນກຳໄລນັ້ນກັບຄືນປະເທດ ຫລື ໂອນໄປບ່ອນໃດກໍ່ໄດ້ຕາມທີ່ເຂົາເຈົ້າມີຄວາມປະສົງ. ການສະກັດກັ້ນ ຫລື ຈຳກັດຂັດຂວາງໃດໆກໍ່ຕາມ ແນ່ນອນຈະເຮັດໃຫ້ຜູ້ລົງທຶນເກີດຄວາມບໍ່ພໍໃຈ ແລະ ເກີດຄວາມບໍ່ເຊື່ອໝັ້ນ.

ສະນັ້ນ ຫລາຍປະເທດຈຶ່ງມີນະໂຍບາຍອັນລະອຽດ, ຈະແຈ້ງ ແລະ ຮັດກຸມທີ່ສຸດໃນດ້ານນີ້; ພ້ອມນັ້ນ ກໍ່ມີລະບຽບການຄຸ້ມຄອງທີ່ຄ່ອງຕົວ ແລະ ເປັນລະບົບທີ່ແຈ້ງໄສ.

• ມີຫລາຍປະເທດໄດ້ດຳເນີນມາດຕະການ "ຈຳກັດ" ການສົ່ງກຳໄລກັບຄືນປະເທດ ດ້ວຍການປັບປຸງນະໂຍບາຍສົ່ງເສີມການລົງທຶນຕ່າງປະເທດໃຫ້ປະທັບໃຈຕື່ມອີກ ເພື່ອໃຫ້ຜູ້ລົງທຶນທີ່ເຄື່ອນໄຫວດີ, ມີຜົນກຳໄລແລ້ວນັ້ນ ນຳເອົາກຳໄລທີ່ເຂົາເຈົ້າໄດ້ຮັບແລ້ວນັ້ນ ມາລົງ

ທຶນຕໍ່. ອັນນີ້ເອີ້ນວ່ານະໂຍບາຍ "ດຶງເອົາກຳໄລກັບຄືນ" ທີ່ສາມາດເອີ້ນໄດ້ວ່າເປັນການຈຳກັດທີ່ສະຫລາດ.

**ສອງ**: ສ້າງສະພາບແວດລ້ອມທາງດ້ານການຄ້າທີ່ດີ.

• ການສ້າງສະພາບແວດລ້ອມທາງດ້ານການຄ້າທີ່ດີ ແມ່ນສ່ວນສຳຄັນ ໃນໂຄງປະກອບຂອງນະໂຍບາຍສົ່ງເສີມການລົງທຶນຂອງຕ່າງປະເທດ.

• ຢາກສ້າງສະພາບແວດລ້ອມທາງດ້ານການຄ້າທີ່ດີໄດ້ ກ່ອນອື່ນຕ້ອງເຮັດໃຫ້ຕະຫລາດແຫ່ງຊາດມີຄວາມເປັນເອກະພາບ ແລະ ມີຊີວິດຊີວາ ທັງເຊື່ອມຈອດຕິດກັບຕະຫລາດພາກພື້ນ ແລະ ຕະຫລາດໂລກ. ເວົ້າລວມແມ່ນເຮັດໃຫ້ຕະຫລາດພາຍໃນປະເທດ ເຊື່ອມຕິດກັບຕະຫລາດພາຍນອກ.

• ສິ່ງສຳຄັນອັນໜຶ່ງອີກໃນການສ້າງສະພາບແວດລ້ອມການຄ້າທີ່ດີ ແມ່ນການອຳນວຍຄວາມສະດວກ ແລະ ຮັບປະກັນຄວາມປອດໄພໃນການຊຳລະສະສາງ. ອັນນີ້ຮຽກຮ້ອງໃຫ້ມີລະບຽບການ, ກົນໄກ ແລະ ປະເພນີປະຕິບັດທີ່ເປັນມາດຕະຖານສາກົນ. ຄວາມເປັນມາດຕະຖານນີ້ ຕ້ອງເລີ່ມຈາກລະບົບການບັນຊີ, ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ລະບຽບການຊຳລະຕ່າງໆ; ການຄວບຄຸມການນຳເຂົ້າສິນຄ້າ ແລະ ການອຸດໜູນສິນຄ້າສົ່ງອອກ ຫລື ເວົ້າລວມແລ້ວແມ່ນນະໂຍບາຍດ້ານການຂາອອກ ແລະ ຂາເຂົ້າ...

• ຢູ່ບາງປະເທດ ໃນເວລາຈະເຂົ້າເປັນສະມາຊິກຂອງອົງການການຄ້າໂລກ ເພິ່ນໄດ້ດຳເນີນການດັດແກ້ກົດໝາຍ, ປັບປຸງນະ

ໂຍບາຍ, ປັບປຸງແປງ-ປັບປຸງພາລະບົດບາດຂອງຫນ່ວຍງານລັດ, ດັດແກ້ກົນໄກ ແລະ ລະບຽບການຕ່າງໆ, ລວມທັງສັບຊ້ອນບຸກຄະລາກອນໃຫ້ເຫມາະສົມກັບຄວາມຮຽກຮ້ອງຕ້ອງການຂອງວຽກງານ ທັງນີ້ກໍ່ເພື່ອໃຫ້ການເຊື່ອມເຂົ້າກັນທາງດ້ານເສດຖະກິດ - ການຄ້າກັບສາກົນມີປະສິດທິຜົນ.

• **ນອກຈາກນັ້ນ, ເພີ່ນຍັງດັດປັບລາຄາຂອງບາງປະເພດສິນຄ້າ ແລະ ຄ່າບໍລິການຕ່າງໆໃຫ້ເປັນໄປຕາມມາດຕະຖານ ເພື່ອໃຫ້ເປັນແຮງດຶງດູດຄວາມສົນໃຈຂອງນັກລົງທຶນ, ເຊັ່ນລາຄາຫົວຫນ່ວຍພະລັງງານ (ຖ່ານຫີນ, ໄຟຟ້າ, ນ້ຳມັນ...) ຫລື ຄ່າບໍລິການຂອງທະນາຄານ, ຄ່າບໍລິການດ້ານການອອກເອກະສານຕ່າງໆ, ຄ່າແຮງງານ, ເງິນເດືອນ...

• ໃນການສ້າງສະພາບແວດລ້ອມດ້ານການຄ້າອັນອຳນວຍຍັງມີສິ່ງຫນຶ່ງທີ່ບໍ່ຄວນເບິ່ງກາຍ, ນັ້ນແມ່ນການ**ສ້າງບັນຍາກາດດ້ານການຄ້າຂາຍຢູ່ພາຍໃນປະເທດທີ່ປະທັບໃຈ**.

ຫາກບັນຍາກາດການຄ້າຂາຍພາຍໃນປະເທດ ງຽບເຫງົາ-ບໍ່ຟົດຟື້ນ ຈະເຮັດໃຫ້ການຕິດຕໍ່ທຳການຄ້າຂາຍກັບພາຍນອກເປັນໄປໄດ້ຍາກ. ສະນັ້ນ, ການສ້າງກຳລັງ, ສ້າງຄວາມມີຊີວິດຊີວາຢູ່ພາຍໃນ ຈຶ່ງເປັນພາລະຫນ້າທີ່ອັນສຳຄັນ ໃນການສ້າງສະພາບແວດລ້ອມດ້ານການຄ້າທີ່ດີ.

ກຳລັງ ແລະ ຄວາມມີຊີວິດຊີວາຢູ່ພາຍໃນປະເທດຈະເກີດຂຶ້ນໄດ້ ກໍ່ຕໍ່ເມື່ອມີເງື່ອນໄຂ, ມີປັດໃຈອຳນວຍໃຫ້ມັນເກີດຂຶ້ນ, ເປັນຕົ້ນ

ແມ່ນກົດໝາຍ, ນະໂຍບາຍ ແລະ ການອຳນວຍຄວບຄຸມຂອງລັດຖະບານໃນປະເທດນັ້ນ.

ການສົ່ງເສີມບັນດາບໍລິສັດ, ຜູ້ປະກອບການຜະລິດ-ທຸລະກິດຢູ່ພາຍໃນ ໃຫ້ສາມາດເຄື່ອນໄຫວຢ່າງມີຊີວິດຊີວາ ເຕີບໃຫຍ່ຂະຫຍາຍຕົວ, ຈະເຮັດໃຫ້ບໍລິສັດຕ່າງປະເທດມີຄວາມສົນໃຈສ້າງການພົວພັນເປັນຄູ່ຄ້າຂາຍຮ່ວມມື, ຊຶ່ງແນ່ນອນ ຈະເປັນຜົນດີໃຫ້ແກ່ການດຶງດູດທຶນເຂົ້າປະເທດ. ສະນັ້ນການສ້າງ, ການປັບປຸງ ແລະ ການຊຸກຍູ້ສົ່ງເສີມບັນດາບໍລິສັດແຫ່ງຊາດ ທີ່ລວມມີບໍລິສັດຂອງລັດ, ຂອງຫຸ້ນສ່ວນ ແລະ ຂອງເອກະຊົນໃຫ້ມີຊີວິດຊີວາເຕີບໃຫຍ່ເຂັ້ມແຂງ ແລະ ມີຄວາມສາມາດເຂົ້າສູ່ແວດວົງທຸລະກິດສາກົນ ຈຶ່ງເປັນໜ້າທີ່ທີ່ລັດຖະບານຂອງປະເທດຕ່າງໆເອົາໃຈໃສ່.

ອັນນີ້ ທັງສອດຄ່ອງກັບທິດທາງໜ້າທີ່ທີ່ກຳນົດໄວ້ໃນມະຕິກອງປະຊຸມໃຫຍ່ຄັ້ງທີ VII ຂອງພັກເຮົາທີ່ວ່າ: "ພວກເຮົາຕ້ອງມີນະໂຍບາຍຄຸ້ມຄອງ-ສົ່ງເສີມ ແລະ ຍົກລະດັບບັນດາບໍລິສັດຂອງປະເທດເຮົາ ໃຫ້ມີຄວາມສາມາດເຂົ້າສູ່ແວດວົງທຸລະກິດສາກົນ, ເຄື່ອນໄຫວຢ່າງຄ່ອງຕົວ ແລະ ສາມາດແຂ່ງຂັນ ຫລື ຮ່ວມສຳພັນກັບບໍລິສັດຕ່າງປະເທດໄດ້ຢ່າງເປັນເຈົ້າການ"*

---

* ມະຕິກອງປະຊຸມໃຫຍ່ຄັ້ງທີ VII ຂອງພັກປະຊາຊົນປະຕິວັດລາວ, ໜ້າ 29.

<u>ສາມ</u>: ສ້າງສະຖຽນລະພາບ ແລະ ຄວາມສັກສິດໃນການຄຸ້ມຄອງບໍລິຫານຂອງລັດ.

ສະຖຽນລະພາບ ແມ່ນພື້ນຖານແຫ່ງຄວາມສຳເລັດໃນການດຳເນີນນະໂຍບາຍດຶງດູດ ແລະ ສົ່ງເສີມການລົງທຶນຂອງຕ່າງປະເທດ.

ສະຖຽນລະພາບໃນທີ່ນີ້ ມີຄວາມໝາຍກວ້າງ, ຊຶ່ງກວມເອົາສະຖຽນລະພາບທາງດ້ານການເມືອງຄື: ມີລັດຖະບານທີ່ໝັ້ນຄົງ ບໍ່ມີການປະຕິວັດ-ລັດຖະປະຫານ, ບໍ່ຍຸບສະພາປ່ຽນລັດຖະບານເລື້ອຍ; ບໍ່ມີຄວາມວຸ້ນວາຍທາງການເມືອງເຊັ່ນການແຫ່ຂະບວນປະທ້ວງ ຫລືຄັດຄ້ານລັດຖະບານ...

• ມີສະຖຽນລະພາບທາງດ້ານກົດໝາຍ ແລະ ນະໂຍບາຍໝາຍເຖິງວ່າ ເມື່ອໄດ້ອອກກົດໝາຍ ແລະ ວາງນະໂຍບາຍອອກແລ້ວ ຕ້ອງຢຶດໝັ້ນປະຕິບັດຢ່າງສະເໝີຕົ້ນສະເໝີປາຍ. ບໍ່ຄວນປັບປ່ຽນແບບຟ້າວຟັ່ງດ້ວຍເຫດຜົນທີ່ບໍ່ສົມຄວນ ແລະ ຄວນຈຳກັດບໍ່ໃຫ້ເກີດການກະທຳທີ່ຂັດກັບກົດໝາຍ ແລະ ນະໂຍບາຍທີ່ວາງອອກ, ຊຶ່ງຈະກໍ່ໃຫ້ເກີດຄວາມບໍ່ເຊື່ອໝັ້ນຕໍ່ກົດໝາຍ ແລະ ນະໂຍບາຍນັ້ນໆ.

• ມີສະຖຽນລະພາບທາງສັງຄົມ: ສັງຄົມມີຄວາມສະຫງົບປອດໄພ, ບໍ່ມີຄວາມຂັດແຍ້ງປໍລະປັກທີ່ຮຸນແຮງ, ບໍ່ມີການລັກພາຕົວຮຽກຄ່າໄຖ່, ບໍ່ມີການປຸ້ນຈີ້ຊີ້ລັກ ຫລື ການໂຈລະກຳໃນຮູບແບບຕ່າງໆ.

• ມີສະຖຽນລະພາບດ້ານເສດຖະກິດ: ເງິນເຟີ້ຕ່ຳ, ຄ່າເງິນຫມັ້ນທ່ຽງ, ລາຄາສິນຄ້າ ແລະ ຄ່າແຮງງານພໍດ້າມພໍດີ...

ພ້ອມກັບການຮັບປະກັນ ໃຫ້ມີສະຖຽນລະພາບໃນດ້ານຕ່າງໆດັ່ງທີ່ກ່າວມານັ້ນ ຍັງມີຄວາມຈຳເປັນ ເຮັດໃຫ້ການຄຸ້ມຄອງບໍລິຫານຂອງລັດຖະບານມີຄວາມສັກສິດ. ຫມາຍຄວາມວ່າ ກົດຫມາຍ ຫລື ນະໂຍບາຍທີ່ລັດຖະບານໄດ້ວາງອອກ ໄດ້ປະກາດໃຊ້ໄປແລ້ວ ຕ້ອງປະຕິບັດຢ່າງຈິງຈັງໃຫ້ເປັນຮູບປະທຳ...

ອັນທີ່ຄວນຈຳກັດໃຫ້ໄດ້ ແມ່ນການປະຕິບັດທີ່ບໍ່ຖືກກັບນະໂຍບາຍ ແລະ ກົດຫມາຍທີ່ວາງອອກ ຫລື ໃຫ້ຄຳຫມັ້ນສັນຍາ ແຕ່ບໍ່ປະຕິບັດ; ຢູ່ໃນຄະນະລັດຖະບານດຽວແຕ່ເວົ້າບໍ່ຄືກັນກ່ຽວກັບນະໂຍບາຍດຽວກັນ, ຂັ້ນເທິງສັ່ງການແຕ່ຂັ້ນລຸ່ມບໍ່ປະຕິບັດ ຫລື ປະຕິບັດໄປໃນທາງກົງກັນຂ້າມ...

ໃນການເພີ່ມທະວີຄວາມສັກສິດນີ້, ລັດຖະບານຂອງຫລາຍປະເທດ ຍັງເພີ່ມຄວາມເອົາໃຈໃສ່ຕໍ່ການສະຫນອງຂໍ້ມູນຂ່າວສານທີ່ຊັດເຈນເປັນລະບົບ, ຍົກຄຸນນະພາບຂອງຂໍ້ມູນໃຫ້ສູງຂຶ້ນ ແລະ ໃກ້ກັບຄວາມເປັນຈິງທີ່ສຸດ. ພ້ອມກັນນັ້ນ ກໍ່ກຳຈັດການສວຍໂອກາດ ສໍ້ລາດບັງຫລວງໃນຮູບການຕ່າງໆຢ່າງແຂງແຮງ; ສ້າງຄວາມແຈ້ງໄສໃນລະບົບລັດຖະການ ໄປຄຽງຄູ່ກັບການບໍລິການທີ່ວ່ອງໄວ ແລະ ປະທັບໃຈ.

<u>**ສີ່**</u>: ສ້າງພູມຕ້ານທານຕໍ່ການເກີດບັນຫາທີ່ຮ້າຍແຮງໃນລະບົບທະນາຄານ.

ການລົງທຶນ ແມ່ນການສະແຫວງຫາກຳໄລ ບົນພື້ນຖານຄວາມສ່ຽງ. ສະນັ້ນ ນັກລົງທຶນຜູ້ໃດ ກໍ່ພະຍາຍາມຫລຸດຜ່ອນຄວາມສ່ຽງລົງໃຫ້ຫນ້ອຍທີ່ສຸດເທົ່າທີ່ຈະຫນ້ອຍໄດ້.

ຄວາມສ່ຽງທີ່ນັກລົງທຶນຢ້ານຫລາຍກວ່າຫມູ່ ແມ່ນການລົ້ມລະລາຍຂອງລະບົບທະນາຄານ, ເພາະວ່າທະນາຄານປຽບເຫມືອນຫມາກຫົວໃຈຂອງລະບົບການເງິນ. ສະນັ້ນ ຢູ່ຫລາຍປະເທດ ເພິ່ນຈຶ່ງດຳເນີນມາດຕະການຢ່າງຈິງຈັງເພື່ອ:

+ ຮັບປະກັນໃຫ້ທະນາຄານມີສະພາບຄ່ອງຢ່າງພຽງພໍ;

+ ປັບປຸງການຄຸ້ມຄອງລະບົບທະນາຄານໃຫ້ມີຄວາມຄ່ອງຕົວ ແລະ ຮັບປະກັນບໍ່ໃຫ້ເກີດມີບັນຫາທີ່ຈະນຳໄປສູ່ການຂາດຄວາມເຊື່ອຫມັ້ນ ຫລື ຄວາມສ່ຽງ.

+ ແກ້ໄຂຢ່າງເດັດຂາດ ແລະ ລຶບລ້າງເງິນກູ້ ຫລື ສິນເຊື່ອທີ່ຂາດຄຸນນະພາບ, ສິນເຊື່ອທີ່ບໍ່ສ້າງລາຍໄດ້ຄືນໃຫ້ແກ່ທະນາຄານ.

+ ປະກາດການລົ້ມລະລາຍ ຫລື ຍຸບເລີກທະນາຄານທີ່ບໍ່ມີຄວາມເຂັ້ມແຂງ.

ຂໍ້ແນະນຳທັງຫມົດສີ່ຂໍ້ ທີ່ຜູ້ຊ່ຽວຊານດ້ານເສດຖະກິດຂອງຫລາຍປະເທດສະເຫນີມານັ້ນ ອາດຈະບໍ່ເຫມາະກັບສະພາບຈຸດພິເສດຂອງແຕ່ລະປະເທດ. ເຖິງຢ່າງໃດກໍ່ຕາມ ການສຶກສາຄົ້ນຄວ້າທີ່ເລິກເຊິ່ງ ເພື່ອນຳໄປຫມູນໃຊ້ຢ່າງປະດິດສ້າງ ກໍ່ອາດຈະເກີດປະໂຫຍດອັນສົມຄວນໄດ້ເຊັ່ນກັນ.

24/VII
ຫ້າມຈຳໜ່າຍ

• ການລົງທຶນໂດຍກົງຂອງຕ່າງປະເທດ ຍັງຈະສືບຕໍ່ດຳເນີນໄປຢ່າງກວ້າງຂວາງ ຕາບໃດທີ່ຄວາມຕ້ອງການກິນ, ຢູ່, ໃຊ້ສອຍຂອງປະຊາກອນໂລກຍັງສືບຕໍ່ເພີ່ມຂຶ້ນຢ່າງບໍ່ຢຸດຢັ້ງ ແລະ ຕາບໃດທີ່ໂລກຍັງມີສັນຕິພາບ ແລະ ປະເທດຕ່າງໆຍັງມີການພົວພັນຮ່ວມມືກັນ, ມີຄວາມໄວ້ເນື້ອເຊື່ອໃຈກັນ ແລະ ມີຜົນປະໂຫຍດຮ່ວມກັນ. ສະນັ້ນ ການລົງທຶນໂດຍກົງຂອງຕ່າງປະເທດ ຈຶ່ງເປັນກາລະໂອກາດອັນຍາວນານທີ່ຄວນກຳແໜ້ນ ແລະ ກ້າຫານນຳໃຊ້ຕໍ່ໄປ.

**<u>ກາລະໂອກາດທີ່ເຈັດ</u>: ການນຳໃຊ້ຜົນສຳເລັດແຫ່ງການຄົ້ນຄວ້າທາງດ້ານວິທະຍາສາດ ແລະ ຄວາມກ້າວໜ້າດ້ານເຕັກໂນໂລຢີສາມາດຊ່ວຍໃຫ້ການພັດທະນາມີບາດກ້າວເລັ່ງລັດໄວຂຶ້ນ.**

ໂລກແຫ່ງຍຸກໂລກາພິວັດທາງດ້ານເສດຖະກິດ ໄດ້ຖືກຂະໜານນາມເປັນໂລກແຫ່ງຂໍ້ມູນຂ່າວສານ, ໂລກແຫ່ງຄວາມກ້າວໜ້າທາງດ້ານວິທະຍາສາດ ແລະ ການພັດທະນາເຕັກໂນໂລຢີຢ່າງບໍ່ຢຸດຢັ້ງ. ດັ່ງນັ້ນ ຄວາມຮູ້ ແລະ ສະຕິປັນຍາຈຶ່ງເປັນສິ່ງທີ່ໄດ້ຮັບການເຊີດຊູ ແລະ ມີຄ່າສູງກວ່າຍຸກໃດໆທີ່ຜ່ານມາ.

ໃນເມື່ອວິທະຍາສາດ ແລະ ເຕັກໂນໂລຢີໄດ້ກາຍເປັນກຳລັງການຜະລິດໂດຍກົງ ການພັດທະນາຍິ່ງບໍ່ມີຂອບເຂດຈຳກັດ. ຈະແມ່ນປະເທດໃຫຍ່ ຫລື ນ້ອຍ, ພັດທະນາແລ້ວ ຫລື ພວມພັດທະນາລ້ວນແຕ່ມີໂອກາດ ທີ່ຈະພັດທະນາຕົນເອງໃຫ້ມີຄວາມຈະເລີນກ້າວໜ້າຍິ່ງໆຂຶ້ນໄດ້ ດ້ວຍການນຳໃຊ້ຜົນສຳເລັດ ແຫ່ງການຄົ້ນຄວ້າທາງດ້ານວິທະຍາສາດ ແລະ ຄວາມກ້າວໜ້າທາງດ້ານເຕັກໂນໂລຢີ. ໃນນີ້ ປະ

ເທດພວມພັດທະນາ ມີເງື່ອນໄຂທີ່ຈະເລັ່ງລັດຕັດຕອນການພັດທະນາ ໄດ້ ແລະ ສາມາດບັນລຸຈຸດໝາຍໄດ້ໃນໄລຍະເວລາທີ່ບໍ່ຍາວນານຄື ແຕ່ກ່ອນ.

• ຄວາມກ້າວໜ້າທາງດ້ານວິທະຍາສາດ ແລະ ເຕັກໂນໂລ ຢີ ຍັງຊ່ວຍໃຫ້ການພັດທະນາເປັນໄປໄດ້ໃນເງື່ອນໄຂທີ່ມີແຫລ່ງຊັບພະ ຍາກອນທຳມະຊາດຈຳກັດ. ບາງປະເທດເຖິງວ່າມີເນື້ອທີ່ບໍ່ກວ້າງຂວາງ, ແຫລ່ງຊັບພະຍາກອນມີໜ້ອຍ ແຕ່ສາມາດບັນລຸຜົນສຳເລັດທີ່ໜ້າ ຊື່ນຊົມໄດ້ ກໍ່ຍ້ອນເຂົາເຈົ້າກ້າວທັນກັບກະແສ ແຫ່ງການນຳໃຊ້ຜົນສຳ ເລັດທາງດ້ານວິທະຍາສາດ ແລະ ເຕັກໂນໂລຢີເຂົ້າໃນການຜະລິດ ແລະ ການບໍລິການ ກໍ່ຄືໃນການພັດທະນານັ້ນເອງ.

ການນຳໃຊ້ຜົນສຳເລັດທາງດ້ານວິທະຍາສາດ ແລະ ເຕັກໂນ ໂລຢີທີ່ທັນສະໄໝ ຊ່ວຍໃຫ້ການໃຊ້ວັດຖຸດິບໃນການຜະລິດໜ້ອຍລົງ ເລື້ອຍໆ (ໃຊ້ບໍ່ຫລາຍຄືແຕ່ກ່ອນ), ເຊັ່ນວ່າມີການໃຊ້ຢາງປລາສະຕິກ ແທນເຫລັກຫລາຍຂຶ້ນ; ພ້ອມນັ້ນ ຂະໜາດຂອງຜະລິດຕະພັນທີ່ນ້ອຍ ລົງ ກໍ່ຊ່ວຍໃຫ້ປະຢັດວັດຖຸດິບໃນຕົວ.

ຍ້ອນສາມາດປະຢັດ ແລະ ໃຊ້ວັດຖຸດິບໜ້ອຍລົງໆ ຈຶ່ງສັງ ເກດເຫັນວ່າລາຄາວັດຖຸດິບໃນຕະຫລາດໂລກ ນັບແຕ່ທົດສະວັດສຸດ ທ້າຍຂອງສະຕະວັດທີ່ 20 ໄດ້ຫລຸດຕ່ຳລົງຫລາຍ ເມື່ອທຽບກັບລາຄາ ຜະລິດຕະພັນສຳເລັດຮູບ ແລະ ການບໍລິການ. ຈາກນີ້ ຈຶ່ງເຫັນໄດ້ຈະ ແຈ້ງວ່າ ປະເທດທີ່ໃຊ້ວິທະຍາສາດ ແລະ ເຕັກໂນໂລຢີເຂົ້າໃນການ

ຜະລິດ ແລະ ການບໍລິການໄດ້ຢ່າງມີປະສິດທິພາບ ແມ່ນຢູ່ໃນທ່າໄດ້ປຽບກວ່າປະເທດທີ່ມີວັດຖຸດິບ.

♦ ວິທະຍາສາດ ແລະ ເຕັກໂນໂລຢີທີ່ກ້າວໜ້າ ຍັງຊ່ວຍໃຫ້ໂລກເຮົາສາມາດຜະລິດອາຫານການກິນໄດ້ຫລາຍຂຶ້ນ ທັງໆທີ່ມີເນື້ອທີ່ຈຳກັດ. ແຕ່ກ່ອນຫລາຍປະເທດໄດ້ເຮັດການປະຕິວັດຂຽວ ດ້ວຍການນຳໃຊ້ຄວາມກ້າວໜ້າທາງດ້ານເຕັກນິກ ເພື່ອສ້າງລະບົບຊົນລະປະທານ ແລະ ໃຊ້ຝຸ່ນວິທະຍາສາດ. ມາດຽວນີ້ຫລາຍປະເທດພວມເລີ່ມເຮັດການປະຕິວັດຂຽວຄັ້ງໃໝ່ ດ້ວຍການໃຊ້ເຕັກໂນໂລຢີຊີວະພາບຊຶ່ງແນ່ນອນ ຈະຊ່ວຍໃຫ້ການຜະລິດອາຫານການກິນໄດ້ຫລາຍກວ່າແຕ່ກ່ອນຫລາຍເທົ່າ.

ການໃຊ້ເຕັກໂນໂລຢີຊີວະພາບ ເຂົ້າໃນການຜະລິດອາຫານການກິນ ເພື່ອລ້ຽງປະຊາກອນໂລກທີ່ເພີ່ມຂຶ້ນ ແມ່ນສິ່ງຈຳເປັນພາວະວິໄສ ເພາະວ່າລຳພັງແຕ່ໃຊ້ວິທີການປູກ-ການລ້ຽງ ແລະ ລະບົບຊົນລະປະທານຕາມແບບເດີມທີ່ເຄີຍໃຊ້ນັ້ນ ອາດຈະບໍ່ຮັບປະກັນໄດ້ຢ່າງໜັກແໜ້ນ.

★ ແມ່ນແລ້ວວ່າ ເນື້ອທີ່ກະສິກຳທີ່ມີລະບົບຊົນລະປະທານຊ່ວຍໃຫ້ສາມາດປູກພືດໄດ້ 2-3 ຮອບ ແລະ ແຕ່ລະເທື່ອກໍ່ໄດ້ຜົນຜະລິດຫລາຍກວ່າ. ຢູ່ປະເທດ ສປ ຈີນ, ອິນເດຍ, ອິນໂດເນເຊຍ, ອີຢີບ, ໄດ້ຮັບຜົນຜະລິດກະສິກຳຈາກເນື້ອທີ່ຊົນລະປະທານຫລາຍກວ່າເຄິ່ງໜຶ່ງ ຂອງເນື້ອທີ່ກະສິກຳທັງໝົດຂອງປະເທດ. ອາຫານການກິນ

ຂອງໂລກເຖິງ 40% ແມ່ນຜະລິດຈາກເນື້ອທີ່ກະສິກຳຊົນລະປະທານພຽງແຕ່ 17% ຂອງໂລກ.

• ແຕ່ເຖິງຢ່າງນັ້ນກໍ່ຕາມ, ການນຳໃຊ້ຜົນສຳເລັດທາງດ້ານວິທະຍາສາດ ແລະ ຄວາມກ້າວໜ້າທາງດ້ານເຕັກໂນໂລຢີຊີວິພາບເຂົ້າໃນການຜະລິດກະສິກຳ ຍັງແມ່ນທ່າອຽງລວມທີ່ພວມເປັນໄປຢ່າງກວ້າງຂວາງຢູ່ໃນໂລກ.

♦ ການນຳໃຊ້ວິທະຍາສາດ ແລະ ເຕັກໂນໂລຢີທີ່ທັນສະໄໝ ຍິ່ງມີລັກສະນະແຜ່ຫລາຍຢູ່ໃນຂົງເຂດອຸດສາຫະກຳ ແລະ ການບໍລິການ, ຊຶ່ງໄດ້ເປັນປັດໄຈສຳຄັນພື້ນຖານແຫ່ງການເພີ່ມສະມັດຖະພາບການຜະລິດ ແລະ ຄຸນນະພາບຂອງຜະລິດຕະພັນ.

ສິ່ງດັ່ງກ່າວ ໄດ້ສ້າງໂອກາດໃຫ້ແກ່ຜູ້ປະກອບການຜະລິດ-ທຸລະກິດ ທີ່ເປັນບໍລິສັດຂະໜາດໃຫຍ່, ຂະໜາດກາງ ຫລື ຂະໜາດນ້ອຍສາມາດຢູ່ໄດ້ ແລະ ຂະຫຍາຍຕົວດ້ວຍຄວາມສາມາດປະດິດສ້າງຂອງຕົນ.

ແຕ່ກ່ອນ ມີຫລາຍຄົນເຂົ້າໃຈວ່າ ການຜະລິດອຸດສາຫະກຳເພື່ອສົ່ງອອກຕ່າງປະເທດ ຈະຕ້ອງແມ່ນການຜະລິດດ້ວຍໂຮງງານ ຫລືດ້ວຍບໍລິສັດຂະໜາດໃຫຍ່ ຫລືບໍ່ກໍ່ຕ້ອງຂະໜາດກາງ ແລະ ຕ້ອງມີການລົງທຶນຫລາຍພໍສົມຄວນ. ມາດຽວນີ້ ມີບາງສິ່ງບາງຢ່າງໄດ້ພິສູດໃຫ້ເຫັນແຈ້ງແລ້ວວ່າ ໃນຍຸກໂລກາພິວັດທາງດ້ານເສດຖະກິດ ຫລືຍຸກທີ່ເສດຖະກິດເປັນແບບທົ່ວໂລກນີ້ ບໍລິສັດຂະໜາດນ້ອຍທີ່ມີຄົນເຮັດວຽກພຽງແຕ່ 9 ຄົນ - 10 ຄົນ, ຫລື ແມ່ນແຕ່ຫົວໜ່ວຍເສດຖະ

ກິດຄອບຄົວເອກະເທດທີ່ມີພຽງແຕ່ 3-4 ຄົນ ກໍສາມາດຜະລິດເພື່ອສົ່ງອອກໄປຕ່າງປະເທດ ແລະ ສາມາດສ້າງລາຍໄດ້ເປັນເງິນຕາຕ່າງປະເທດເຂົ້າປະເທດ ແລະ ເຂົ້າຖົງຂອງຜູ້ປະກອບການເອງໄດ້ຫລາຍພໍສົມຄວນ.

ຜູ້ປະກອບການເອງ ເປັນຜູ້ຄົ້ນຄວ້ານຳໃຊ້ພາຫານະ, ອຸປະກອນທີ່ທັນສະໄຫມ ແລະ ໃຊ້ເຕັກໂນໂລຢີທີ່ກ້າວຫນ້າ ແລະ ມີຄວາມເຫມາະສົມ; ເຮັດວຽກດ້ວຍຄວາມຈິງຈັງ ແລະ ຮູ້ຄວາມຕ້ອງການຂອງຕະຫລາດ.ສ່ວນລັດຖະບານເປັນຜູ້ສ້າງເງື່ອນໄຂສະດວກ ແລະ ສະພາບແວດລ້ອມອັນອຳນວຍ ໃຫ້ຜູ້ປະກອບການສາມາດອອກສູ່ແວດວົງທຸລະກິດສາກົນ ກໍ່ຄືຕະຫລາດໂລກໄດ້.

✸ ສິ່ງທີ່ກ່າວມານັ້ນ ແມ່ນພຽງຕົວຢ່າງບາງອັນທີ່ພິສູດໃຫ້ເຫັນວ່າ, ພາຍໃຕ້ກະແສໂລກາພິວັດທາງເສດຖະກິດ ຫລາຍປະເທດໄດ້ມີບົດຮຽນທີ່ດີ ກ່ຽວກັບການນຳໃຊ້ຄວາມກ້າວຫນ້າທາງດ້ານວິທະຍາສາດ ແລະ ເຕັກໂນໂລຢີໃຫ້ກາຍເປັນກາລະໂອກາດ ແລະ ເປັນເງື່ອນໄຂແຫ່ງການພັດທະນາ.

ບົດຮຽນທີ່ສະເຫນີມາ ສະທ້ອນໃຫ້ເຫັນການໃຫ້ຄວາມສຳຄັນຢ່າງແທ້ຈິງ ແລະ ການສະຫນັບສະຫນູນສົ່ງເສີມຢ່າງຈິງຈັງຕໍ່ວຽກງານຄົ້ນຄວ້າວິທະຍາສາດ, ຕໍ່ການປະດິດຄິດຄົ້ນ ແລະ ການນຳໃຊ້ເຕັກໂນໂລຢີໃຫມ່ທີ່ກ້າວຫນ້າເຂົ້າໃນການຜະລິດ ແລະ ການບໍລິການ.

ປະເທດຕ່າງໆ ລ້ວນແຕ່ເອົາໃຈໃສ່ຢ່າງເຫມາະສົມຕໍ່ການສຶກສາ, ການກໍ່ສ້າງ ແລະ ບຳລຸງຍົກລະດັບບຸກຄະລະກອນຂອງຊາດຕົນ

ໃນດ້ານນີ້; ພ້ອມທັງປະຕິບັດນະໂຍບາຍຊຸກຍູ້ສົ່ງເສີມທາງດ້ານວັດຖຸ ແລະ ຈິດໃຈຢ່າງເຫມາະສົມຕໍ່ນັກວິທະຍາສາດ, ນັກຄົ້ນຄວ້າ ຫລື ເວົ້າລວມຕໍ່ຜູ້ທີ່ເກັ່ງ ແລະ ມີພອນສະຫວັນພິເສດ.

✱ ຈາກບົດຮຽນດັ່ງກ່າວນັ້ນ, ສາມາດຢືນຢັນໄດ້ວ່າ ປະເທດພວກເຮົາມີເງື່ອນໄຂອັນອຳນວຍ ແລະ ມີຄວາມເປັນໄປໄດ້ ທີ່ຈະນຳໃຊ້ຜົນສຳເລັດຈາກການຄົ້ນຄວ້າທາງດ້ານວິທະຍາສາດ ແລະ ຄວາມກ້າວຫນ້າທາງດ້ານເຕັກໂນໂລຢີເຂົ້າໃນການຜະລິດ, ການບໍລິການ ກໍ່ຄືການພັດທະນາ ເພື່ອສ້າງຖ່ວງທ່າ ແລະ ຈັງຫວະການເຕີບໂຕທີ່ຫມັ້ນຄົງ ແລະ ວ່ອງໄວໄດ້. ອັນນັ້ນ ແມ່ນກາລະໂອກາດທີ່ພວກເຮົາຄວນກຳແຫນ້ນ ແລະ ນຳໃຊ້ດ້ວຍຄວາມກ້າຫານເປັນເຈົ້າການ ເພື່ອກ້າວທັນກັບຍຸກສະໄຫມ, ຊຶ່ງພັກເຮົາກໍ່ໄດ້ກຳນົດໄວ້ໃນແນວທາງຢ່າງຈະແຈ້ງວ່າ: "ໃນຊຸມປີຕໍ່ຫນ້ານີ້ ພວກເຮົາຕ້ອງເຊີດຊູຄວາມເປັນເຈົ້າການ ໃນການຄົ້ນຄວ້າວິໄຈທາງດ້ານວິທະຍາສາດດ້ວຍຕົນເອງ, ທັງມີຄວາມປະດິດສ້າງ ໃນການນຳໃຊ້ຜົນສຳເລັດຂອງຄວາມກ້າວຫນ້າທາງດ້ານວິທະຍາສາດ ແລະ ເຕັກໂນໂລຢີໃຫມ່ເຂົ້າໃນການພັດທະນາເສດຖະກິດ-ສັງຄົມ, ປັບປຸງຄຸນນະພາບຊີວິດຂອງປະຊາຊົນ, ປະສົມປະສານລະຫວ່າງເຕັກໂນໂລຢີອັນທີ່ເປັນມູນເຊື້ອຂອງຊາດ ກັບອັນສະໄຫມໃຫມ່"✱

---

✱ ມະຕິກອງປະຊຸມໃຫຍ່ຄັ້ງທີ່ VII ຂອງພັກປະຊາຊົນປະຕິວັດລາວ, ຫນ້າ 31.

## ສ້າງພື້ນຖານສຳລັບການພັດທະນາທີ່ໝັ້ນຄົງ ເພື່ອປະເທດລາວວັດທະນາຖາວອນ

ໂລກາພິວັດທາງເສດຖະກິດ ມີດ້ານທີ່ເປັນສິ່ງທ້າທາຍ ແລະ ດ້ານທີ່ເປັນກາລະໂອກາດຫລາຍຢ່າງ. ການສ້າງປະເທດລາວສູ່ຄວາມວັດທະນາຖາວອນ ຈະຕ້ອງປະສົບພົບພໍ້ກັບສິ່ງທ້າທາຍເຫລົ່ານັ້ນຢ່າງຫລີກລ່ຽງບໍ່ໄດ້. ເຖິງຢ່າງນັ້ນກໍ່ຕາມ ຖ້າຫາກຮູ້ ແລະ ສາມາດຫມູນໃຊ້ກາລະໂອກາດຢ່າງມີໄຫວພິບ ແລະ ໄດ້ຜົນ ຄວາມເປັນໄປໄດ້ທີ່ຈະບັນລຸເປົ້າໝາຍແຫ່ງຄວາມວັດທະນາຖາວອນກໍ່ມີສູງ.

ການສ້າງພື້ນຖານ ໃຫ້ແກ່ການພັດທະນາທີ່ໝັ້ນຄົງ ແມ່ນສິ່ງຈຳເປັນສຳລັບການບັນລຸຈຸດໝາຍດັ່ງກ່າວນັ້ນ.

ພື້ນຖານຂອງການພັດທະນາທີ່ໝັ້ນຄົງ ແລະ ມີຜົນສຳເລັດປະກອບດ້ວຍຫລາຍປັດໃຈ, ແຕ່ອັນສຳຄັນໃນນັ້ນລວມມີ:

+ ການມີຍຸດທະສາດ ຫລື ມີວິໄສທັດອັນເປັນທິດລວມທີ່ຈະແຈ້ງ.

+ ການມີນະໂຍບາຍ, ກົດໝາຍທີ່ເປັນລະບົບຄົບຊຸດ ທັງມີເນື້ອໃນທີ່ລະອຽດ ແລະ ຮັດກຸມ.

+ ການມີກົນໄກຄຸ້ມຄອງ ຕິດຕາມກວດກາການຈັດຕັ້ງປະຕິບັດຍຸດທະສາດ, ນະໂຍບາຍ ແລະ ລະບຽບກົດໝາຍທີ່ວາງອອກໃຫ້ປະກົດຜົນເປັນຈິງ.

* ລັດຖະທຳມະນູນແຫ່ງ ສປປ ລາວ ໄດ້ລະບຸຈຸດໝາຍແຫ່ງການສ້າງສາພັດທະນາປະເທດເຮົາໄວ້ວ່າ: ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ.

ອັນນີ້ ແມ່ນຈຸດໝາຍຍຸດທະສາດທີ່ແນໃສ່ສະໜອງຕອບຕໍ່ຄວາມມຸ້ງມາດປາຖະໜາຂອງປະຊາຊົນລາວທຸກເຜົ່າ ທຸກຊັ້ນຄົນທຸກເພດໄວ ແລະ ທຸກສາສະໜາໃນທົ່ວປະເທດ; ທີ່ສອດຄ່ອງກັບທ່າອ່ຽງລວມ ແຫ່ງການພັດທະນາໃນໂລກປັດຈຸບັນ.

• ໃນຊຸມປີທຳອິດແຫ່ງການດຳເນີນພາລະກິດປ່ຽນແປງໃໝ່ ແລະ ເປີດກວ້າງການພົວພັນຮ່ວມມືກັບຕ່າງປະເທດ ປະທານ ໄກສອນ ພົມວິຫານ ໄດ້ມີຄວາມເຫັນວ່າ: ຖ້າມີພັກມາກ-ເລນິນທີ່ເຂັ້ມແຂງ ຊຶ່ງມີແນວທາງອັນຖືກຕ້ອງປະດິດສ້າງ, ມີອຳນາດການປົກຄອງປະຕິວັດທີ່ໜັກແໜ້ນ ແລະ ປະຊາຊົນຮູ້ເສີມຂະຫຍາຍບົດບາດເປັນເຈົ້າໃນລະດັບສູງ; ຖ້າຮູ້ຍາດແຍ້ງເອົາການສະໜັບສະໜູນ ຊ່ວຍເຫລືອຈາກພາຍນອກ... ເຖິງວ່າປະເທດເຮົາ ຈະມີເສດຖະກິດຫລ້າຫລັງປານໃດກໍ່ຕາມ ພວກເຮົາ ກໍ່ຈະສາມາດປັບປຸງບູລະນະລະບອບປະຊາທິປະໄຕປະຊາຊົນ ກ້າວຂຶ້ນສັງຄົມນິຍົມເທື່ອລະກ້າວໄດ້...

ພວກເຮົາຕ້ອງເປີດກວ້າງການພົວພັນກັບຕ່າງປະເທດ, ເອົາເສດຖະກິດຂອງປະເທດເຮົາ ຕິດພັນກັບເສດຖະກິດຂອງໂລກ ເພື່ອຂະຫຍາຍກຳລັງການຜະລິດ ຫັນເສດຖະກິດກຸ້ມຕົນເອງພໍໃຜພໍລາວໃຫ້ເປັນເສດຖະກິດສິນຄ້າ, ສ້າງໂຄງປະກອບເສດຖະກິດກະສິກຳ-ປ່າໄມ້ - ອຸດສາຫະກຳ-ບໍລິການທີ່ສົມເຫດສົມຜົນຂຶ້ນເທື່ອລະກ້າວ...

• ພ້ອມກັບການໃຫ້ທັດສະນະກວມລວມກ່ຽວກັບການພັດທະນາປະເທດເຮົາໃນໄລຍະໃໝ່, ປະທານໄກສອນຍັງໄດ້ເນັ້ນກ່ຽວກັບນະໂຍບາຍລະອຽດຈຳນວນໜຶ່ງດັ່ງນີ້:

+ ສົ່ງເສີມການລົງທຶນຂອງຕ່າງປະເທດຢ່າງແຂງແຮງ, ເຂົ້າຮ່ວມໃນການແບ່ງງານສາກົນ ເພື່ອຂຸດຄົ້ນຊັບພະຍາກອນຂອງປະເທດເຮົາຢ່າງມີປະສິດທິຜົນ, ຫຍໍ້ເວລາແຫ່ງການຂະຫຍາຍຕົວຂອງກຳລັງການຜະລິດໃຫ້ສັ້ນເຂົ້າ, ບັນລຸຈັງຫວະການຂະຫຍາຍຕົວໄວ, ຍົກລະດັບຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ວັດທະນະທຳຂອງປະຊາຊົນຂຶ້ນຢ່າງໄວວາ.

+ ຂຸດຄົ້ນ ແລະ ນຳໃຊ້ແຫລ່ງເງິນຈາກການກູ້ຢືມ ແລະ ການຊ່ວຍເຫລືອລ້າຢ່າງມີປະສິດທິຜົນ, ທັງມີຄວາມສາມາດໃຊ້ແທນໜີ້ໄດ້.

+ ຂຸດຄົ້ນ ແລະ ນຳໃຊ້ແຫລ່ງ "ສະຕິປັນຍາ" ແລະ ບົດຮຽນທັງພາຍໃນ ແລະ ພາຍນອກໃຫ້ດີ.

ພ້ອມນັ້ນ ຕ້ອງຮັບປະກັນໃຫ້ການປະຕິບັດນະໂຍບາຍເປີດກວ້າງການພົວພັນເສດຖະກິດຕ່າງປະເທດໄດ້ຮັບຜົນດີ ດ້ວຍການສ້າງກຳລັງຂອງພວກເຮົາໃຫ້ເຂັ້ມແຂງຮອບດ້ານຄື:

- ດ້ານການເມືອງ ຕ້ອງເຮັດໃຫ້ປະຊາຊົນຕິດພັນ ເຊື່ອໝັ້ນລະບອບໃໝ່.

- ດ້ານເສດຖະກິດ ຕ້ອງຂະຫຍາຍການຜະລິດທຸລະກິດຢ່າງແຂງແຮງ ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການປັບປຸງໃຫ້ດີຂຶ້ນ.

- ດ້ານສັງຄົມ ຕ້ອງມີຄວາມປອດໄສ.

- ດ້ານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຕ້ອງຕິດແທນ້ນ ແລະ ຮັບໃຊ້ການພົວພັນເສດຖະກິດກັບຕ່າງປະເທດ*.

ຄວາມເຫັນຊີ້ນຳຂອງປະທານໄກສອນ ພົມວິຫານທີ່ສະເໜີເທິງນັ້ນ ຊ່ວຍໃຫ້ພວກເຮົາມີຄວາມເຊື່ອໜັ້ນຕໍ່ຄວາມຖືກຕ້ອງຂອງແນວທາງ ແລະ ວິໄສທັດຍຸດທະສາດຂອງພັກເຮົາ. ຄວາມເຫັນຊີ້ນຳດັ່ງກ່າວ ໄດ້ເປັນຫີນສີລາທາງດ້ານປັດຊະຍາ ຫລື ເປັນພື້ນຖານໃຫ້ແກ່ການກຳນົດທິດທາງໜ້າທີ່ລວມ ແຫ່ງການພັດທະນາປະເທດຂອງພວກເຮົາ ພາຍໃຕ້ກະແສໂລກາພິວັດທີ່ພວມດຳເນີນໄປຢ່າງຕັ້ງໜ້າ.

ບົນພື້ນຖານຄວາມຄິດຊີ້ນຳນັ້ນ ກອງປະຊຸມໃຫຍ່ຄັ້ງທີ VII ຂອງພັກເຮົາຈຶ່ງກຳນົດໜ້າທີ່ລວມສຳລັບທົ່ວພັກ ແລະ ທົ່ວປວງຊົນລາວເຮົາວ່າ: "ເພີ່ມທະວີຄວາມສາມັກຄີເປັນເອກະພາບພາຍໃນພັກ ແລະ ໃນທົ່ວປວງຊົນ, ເສີມຂະຫຍາຍນ້ຳໃຈຮັກຊາດ ເອກະລາດເປັນເຈົ້າຕົນເອງ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ຂຸດຄົ້ນຄວາມອາດສາມາດບົ່ມຊ້ອນຢູ່ພາຍໃນຢ່າງສຸດຂີດ ສົມທົບກັບການຍາດແຍ້ງ

---

* ເອກະສານກອງປະຊຸມຄົບຄະນະຄັ້ງທີ 7 ຂອງຄະນະບໍລິຫານງານສູນກາງພັກສະໄໝທີ IV, ໜ້າ 32-33, 101-115, ວຽງຈັນ ກຸມພາ 1989.

ເອົາການຊ່ວຍເຫລືອຮ່ວມມືຈາກພາຍນອກຢ່າງຕັ້ງໜ້າ, ສືບຕໍ່ດຳເນີນພາລະກິດປ່ຽນແປງໃໝ່ຢ່າງແຂງແຮງ ເພື່ອປະເທດຊາດເຂັ້ມແຂງປະຊາຊົນຮັ່ງມີຜາສຸກ ສັງຄົມສີວິໄລ ແລະ ຍຸດຕິທຳ•.

* ທັງໝົດນັ້ນ ຊ່ວຍໃຫ້ຢືນຢັນໄດ້ວ່າ ທາງເລືອກ, ຈຸດໝາຍ ແລະ ທັດສະນະຊີ້ນຳລວມກ່ຽວກັບການພັດທະນາຢູ່ປະເທດພວກເຮົາ ແມ່ນຈະແຈ້ງແລ້ວ. ບັນຫາທີ່ຕັ້ງຂຶ້ນ ແມ່ນເຮັດແນວໃດຈຶ່ງຈະບັນລຸຈຸດໝາຍຍຸດທະສາດນັ້ນໄດ້.

① <u>ຍຸດທະສາດການພັດທະນາ</u>:

• ຈຸດໝາຍປາຍທາງຂອງການພັດທະນາປະເທດພວກເຮົາແມ່ນສັງຄົມນິຍົມ. ການພັດທະນາສູ່ຈຸດໝາຍສັງຄົມນິຍົມ ແມ່ນການພັດທະນາເພື່ອຄົນ ແລະ ເພື່ອສັງຄົມ.

• ພັກເຮົາຖືເອົາການສ້າງສາເສດຖະກິດເປັນໜ້າທີ່ໃຈກາງຂອງການພັດທະນາ ເພື່ອສ້າງເງື່ອນໄຂ ແລະ ເພີ່ມຂີດຄວາມສາມາດໃຫ້ນັບມື້ນັບສູງຂຶ້ນໃນການພັດທະນາຄົນ ແລະ ການພັດທະນາສັງຄົມຊຶ່ງລວມມີການພັດທະນາການສຶກສາ ແລະ ວັດທະນະທຳ, ການກິລາແລະ ສຸຂະພາບ, ການສະຫວັດດີການ ແລະ ປະກັນສັງຄົມ, ການປະດິດຄິດແຕ່ງ... ແລະ ພັດທະນາສິ່ງແວດລ້ອມ. ອັນນີ້ ໃນແນວທາງຂອງພັກໄດ້ກຳນົດແຈ້ງວ່າ ພັດທະນາເສດຖະກິດຕິດແທດກັບການພັດ

---

• ເອກະສານຂອງກອງປະຊຸມໃຫຍ່ຄັ້ງທີ VII; ລາຍງານການເມືອງ ໜ້າ 20-21.

ທະນາສັງຄົມ; ສ້າງຄວາມຈະເລີນທາງວັດຖຸ ຄຽງຄູ່ກັບການສ້າງຄວາມສີວິໄລທາງດ້ານຈິດໃຈ.

ຍຸດທະສາດການພັດທະນາປະເທດ ທີ່ພັກເຮົາວາງອອກດັ່ງທີ່ກ່າວມານັ້ນ ບໍ່ໄດ້ເລັ່ງໃສ່ສະເພາະແຕ່ການເພີ່ມມູນຄ່າຂອງຍອດຜະລິດຕະພັນພາຍໃນຕໍ່ຫົວຄົນ, ບໍ່ແມ່ນເອົາແຕ່ການເພີ່ມລາຍໄດ້ເປັນເງິນ ຫລື ເອົາຫົວໜ່ວຍເງິນຕາພຽງຢ່າງດຽວ ເປັນມາດຕະຖານວັດແທກຄວາມຈະເລີນຂອງປະເທດ ແລະ ຄວາມຢູ່ດີກິນດີຂອງປະຊາຊົນ.

* ການທີ່ພັກເຮົາໄດ້ກຳນົດທັດສະນະທີ່ຊັດເຈນຄືແນວນັ້ນ ກໍ່ຍ້ອນບົດຮຽນຂອງຫລາຍປະເທດໄດ້ຢັ້ງຢືນໃຫ້ເຫັນແຈ້ງແລ້ວວ່າ ການພັດທະນາໂດຍເນັ້ນໜັກການສ້າງລາຍໄດ້ເປັນເງິນ ຫລື ເອົາແຕ່ມູນຄ່າສະເລ່ຍຂອງຍອດຜະລິດຕະພັນພາຍໃນຕໍ່ຫົວຄົນ ເປັນໄມ້ຫລາວັດແທກນັ້ນ ໄດ້ນຳໄປສູ່ການຂຸດຄົ້ນ ແລະ ທຳລາຍຊັບພະຍາກອນທຳມະຊາດຢ່າງກວ້າງຂວາງ. ໃນເມື່ອຊັບພະຍາກອນທຳມະຊາດບໍ່ສາມາດແບກຫາບພາລະອັນໜັກໜ່ວງໄດ້ ມັນກໍ່ "ແຜງລິດ" ສົ່ງຜົນສະທ້ອນຄືນໃຫ້ຄົນໃນສັງຄົມເຖິງຂັ້ນເປັນໄພພິບັດ, ສ້າງຄວາມເສຍຫາຍຈົນບໍ່ສາມາດປະເມີນຄ່າໄດ້.

ການພັດທະນາຕາມແບບ ບໍ່ເອົາໃຈໃສ່ຢ່າງເໝາະສົມຕໍ່ສັງຄົມ ຍັງໄດ້ປະບົດຮຽນອັນເຈັບແສບໄວ້ໃຫ້ເຫັນ, ເຮັດໃຫ້ສັງຄົມມີບັນຫາຫລາຍຂຶ້ນ ໂດຍສະເພາະແມ່ນບັນຫາຄວາມເລື່ອມລ້ຳທາງດ້ານການມີລາຍໄດ້ ແລະ ໂອກາດ; ກໍ່ໃຫ້ເກີດຄວາມແຕກໂຕນທີ່ນັບມື້ນັບຫ່າງກັນລະຫວ່າງຜູ້ຮັ່ງ ກັບຜູ້ທຸກ. ໃນເມື່ອຄວາມເລື່ອມລ້ຳ ແລະ

ຄວາມບໍ່ສະເຫມີພາບເພີ່ມຂຶ້ນ, ພາຍໃນສັງຄົມກໍ່ເກີດການແຕກແຫງ ແລະມີຄວາມສັບສົນ-ບໍ່ສະຫງົບ, ຈິດໃຈຂອງຄົນມີອັນເສື່ອມ ໂດຍເລີ່ມຈາກການເສື່ອມທາງດ້ານຈະລິຍະທຳ ໄປເຖິງການເສື່ອມທາງດ້ານອຸດົມການ.

ສາເຫດຕົ້ນຕໍ ແມ່ນຍ້ອນການພັດທະນາສັງຄົມ-ວັດທະນະທຳບໍ່ໄປສົມຄູ່ກັບການພັດທະນາເສດຖະກິດ, ຈາກນັ້ນຈຶ່ງເຮັດໃຫ້ຄົນບໍ່ມີໂອກາດໄດ້ຮັບການສຶກສາ, ບໍ່ມີເງື່ອນໄຂໄດ້ປິ່ນປົວພະຍາດ ແລະ ຮັກສາສຸຂະພາບ, ບໍ່ມີເງື່ອນໄຂໄດ້ສະແດງຄວາມຮູ້ຄວາມສາມາດ ແລະ ຄວາມປະດິດສ້າງຂອງຕົນຢ່າງເຫມາະສົມ, ຫລືເວົ້າລວມ ແມ່ນຍ້ອນຄົນບໍ່ໄດ້ຮັບຜົນປະໂຫຍດເທົ່າທີ່ຄວນຈາກການພັດທະນານັ້ນເອງ.

* ການທີ່ພັກເຮົາກຳນົດຍຸດທະສາດການພັດທະນາໂດຍຖືເອົາການພັດທະນາເສດຖະກິດ ເປັນຫນ້າທີ່ໃຈກາງ ຫມາຍເຖິງການສຸມຄວາມເອົາໃຈໃສ່ຕໍ່ການສ້າງສາເສດຖະກິດ ແລະ ເຮັດໃຫ້ເສດຖະກິດຂະຫຍາຍຕົວຢ່າງມີປະສິດທິພາບ ສາມາດເປັນພື້ນຖານ-ເປັນກຳລັງແຮງໃຫ້ແກ່ການພັດທະນາຂົງເຂດອື່ນໆ. ຫມາຍເຖິງການຂຸດຄົ້ນ ແລະ ນຳໃຊ້ທ່າແຮງໃນດ້ານຕ່າງໆຂອງຊາດ, ເປັນຕົ້ນທ່າແຮງດ້ານຊັບພະຍາກອນທຳມະຊາດໃຫ້ມີປະສິດທິຜົນສູງ. ການນຳໃຊ້ຊັບພະຍາກອນມີປະສິດທິຜົນສູງ ແມ່ນການເຮັດເສດຖະກິດທີ່ມີປະສິດທິຜົນສູງ.

ການນຳໃຊ້ຊັບພະຍາກອນທຳມະຊາດ ມີປະສິດທິພາບສູງຫມາຍເຖິງການມີຂໍ້ມູນດ້ານການສືບຄົ້ນ - ຕີລາຄາແຫລ່ງຊັບພະຍາກອນທີ່ຊັດເຈນ, ຫມາຍເຖິງການຂຸດຄົ້ນ ແລະ ນຳໃຊ້ຢ່າງສົມເຫດສົມ

ຜົນ ທັງມີການຟື້ນຟູບູລະນະໃຫ້ມັນຄືງຄວາມອຸດົມສົມບູນຕໍ່ໄປ. ການນຳໃຊ້ຊັບພະຍາກອນທຳມະຊາດມີປະສິດທິຜົນສູງ ຕາມເນື້ອໃນກ່າວມານັ້ນ ແມ່ນພື້ນຖານແຫ່ງການພັດທະນາເສດຖະກິດ-ສັງຄົມແບບຍືນຍົງ.

♦ ການເພີ່ມປະສິດທິຜົນເສດຖະກິດໃຫ້ສູງຂຶ້ນ, ແນ່ນອນ ຈະເຮັດໃຫ້ຄວາມສາມາດ ໃນການພັດທະນາກະໂຕເສດຖະກິດເອງ ແລະ ການພັດທະນາສັງຄົມສູງຂຶ້ນ.

ໝາຍຄວາມວ່າ ເສດຖະກິດມີບົດບາດທີ່ຕັ້ງເປັນໃຈກາງຂອງການພັດທະນາດ້ານຕ່າງໆ ແລະ ເປັນກຳລັງໜູນການພັດທະນາໃຫ້ດຳເນີນໄປຢ່າງບໍ່ຢຸດຢັ້ງ. ອັນນີ້ ໃນທິດສະດີມາກ-ເລນິນ ຖືວ່າເສດຖະກິດເປັນໂຄງລ່າງຂອງສັງຄົມ ແລະ ມີບົດບາດຕັດສິນຕໍ່ໂຄງບົນ. ບົດບາດ-ທີ່ຕັ້ງເປັນໃຈກາງ ແລະ ເປັນກຳລັງດັນ ຂອງເສດຖະກິດແມ່ນຄ້າຍຄືກັນກັບກ້ອນອາໂຕມ ທີ່ເປັນແກ່ນ-ເປັນກຳລັງດັນສິ່ງວັດຖຸທັງຫລາຍທັງປວງໃຫ້ເຄື່ອນເໜັງນັ້ນເອງ.

• ແຕ່ວ່າ, ລຳພັງແຕ່ເສດຖະກິດກໍ່ບໍ່ສາດມາດເຮັດໃຫ້ການພັດທະນາດຳລົງຄົງຢູ່ຢ່າງຍືນຍາວໄດ້. ການພັດທະນາທີ່ຍືນຍົງຄົງໝັ້ນແມ່ນການພັດທະນາແບບປະສົມປະສານ ເປັນຕົ້ນແມ່ນ ປະສົມປະສານການພັດທະນາເສດຖະກິດ ໃຫ້ເໝາະສົມກົມກຽວກັບການພັດທະນາຄົນ, ກັບການພັດທະນາສັງຄົມ ແລະ ວັດທະນະທຳ.

ເມື່ອຄົນໄດ້ຮັບການພັດທະນາຮອບດ້ານຄື ດ້ານປັນຍາ (ໄດ້ຮຽນໜັງສື, ມີຄວາມຮູ້ ມີວິຊາອາຊີບ) ດ້ານຮ່າງກາຍ (ໄດ້ຫລິ້ນ

ກິລາ..., ໄດ້ຮັກສາສຸຂະພາບໃຫ້ມີຄວາມເຂັ້ມແຂງ) ດ້ານຄຸນສົມບັດສິນທຳ ແລະ ດ້ານຈິດໃຈ (ໄດ້ອົບຮົມບົ່ມສອນໃຫ້ເປັນຄົນດີ ມີຄຸນນະທຳ...) ຄົນຈຶ່ງເປັນກຳລັງແຮງໃຫ້ແກ່ການພັດທະນາເສດຖະກິດ ແລະ ສັງຄົມ. ຄົນໄດ້ຮັບການພັດທະນາຮອບດ້ານດີທໍ່ໃດ ກໍ່ຍິ່ງຊ່ວຍໃຫ້ການພັດທະນາເສດຖະກິດມີປະສິດທິຜົນສູງທໍ່ນັ້ນ. ສະນັ້ນ ການພັດທະນາຄົນຈຶ່ງແມ່ນປັດໄຈຕັດສິນຕໍ່ການພັດທະນາເສດຖະກິດ-ສັງຄົມ.

• ໃນຍຸກໂລກາພິວັດທາງເສດຖະກິດ, ຊຶ່ງເປັນຍຸກແຫ່ງຄວາມຮູ້ ແລະ ສະຕິປັນຍານັ້ນ ການພັດທະນາຄົນຍິ່ງມີຄວາມສຳຄັນຕັດສິນຕໍ່ຂະບວນການພັດທະນາ ກໍ່ຄືຕໍ່ການຄົງຕົວ ແລະ ການຂະຫຍາຍຕົວກ້າວຂຶ້ນຂອງທຸກໆປະເທດ. ຄົນແມ່ນຊັບພະຍາກອນທີ່ປະເສີດ ແລະ ລ້ຳຄ່າກວ່າສິ່ງອື່ນໃດ. **ຍິ່ງມີຄົນທີ່ມີຄວາມຮູ້ຄວາມສາມາດ ແລະ ມີຄຸນສົມບັດສິນທຳດີຫລາຍທໍ່ໃດ ກໍ່ຍິ່ງເຮັດໃຫ້ການສ້າງສາພັດທະນາປະເທດຊາດມີຜົນສຳເລັດດີຂຶ້ນທໍ່ນັ້ນ.**

ບົດຮຽນຂອງຫລາຍປະເທດ ໄດ້ພິສູດໃຫ້ເຫັນແຈ້ງແລ້ວວ່າ, ເຖິງຈະຂາດເຂີນຊັບພະຍາກອນທຳມະຊາດ ແລະ ຂາດປັດໄຈອັນຈຳເປັນຫລາຍຢ່າງ ສຳລັບການພັດທະນາກໍ່ຈິງ, ແຕ່ເຂົາເຈົ້າກໍ່ສາມາດສ້າງຄວາມຈະເລີນຮັ່ງມີໄດ້. ສິ່ງຕັດສິນຜົນສຳເລັດ ໃນການສ້າງຄວາມຈະເລີນຮັ່ງມີຂອງປະເທດເຫລົ່ານັ້ນ ແມ່ນຊັບພະຍາກອນຄົນທີ່ມີຄຸນນະພາບ. **ຄົນທີ່ມີຄຸນນະພາບ ຈຶ່ງສາມາດຮອງຮັບການພັດທະນາໃຫ້ດຳເນີນໄປໄດ້ຢ່າງໝັ້ນຄົງ ແລະ ຍືນຍົງຕໍ່ໆໄປ.**

ກົງກັນຂ້າມ, ປະເທດຈຳນວນໜຶ່ງມີແຫລ່ງຊັບພະຍາກອນທຳມະຊາດອຸດົມສົມບູນ (ນ້ຳມັນກໍ່ມີ, ໄມ້ກໍ່ມີ, ແຮ່ທາດກໍ່ມີ...) ແຕ່ການພັດທະນາພັດບໍ່ປະສົບຜົນສຳເລັດ, ປະຊາຊົນທຸກຍາກ. ອັນນີ້ ສາເຫດຕົ້ນຕໍແມ່ນຍ້ອນຄົນ; ຄົນບໍ່ໄດ້ຮັບການພັດທະນາ ຈຶ່ງບໍ່ສາມາດເປັນເຈົ້າຕໍ່ວິວັດການພັດທະນາ, ເຮັດໃຫ້ການພັດທະນາບໍ່ປະສົບຜົນສຳເລັດ.

✱ ຄົນທັງແມ່ນກະໂຕບັນຫາ ແລະ ທັງແມ່ນຜູ້ແກ້ບັນຫາ. ຖ້າເຮັດໃຫ້ຄົນທີ່ເປັນກະໂຕບັນຫາມີຈຳນວນໜ້ອຍທໍ່ໃດ ແລະ ຖ້າສ້າງຄົນທີ່ມີຄວາມສາມາດແກ້ບັນຫາໄດ້ຫລາຍທໍ່ໃດ ສັງຄົມ ແລະ ເສດຖະກິດຍິ່ງໄດ້ຮັບການພັດທະນາດີຂຶ້ນ. ສະນັ້ນ **ການພັດທະນາຄົນຈຶ່ງແມ່ນຈຸດສຳຄັນໃຈກາງຂອງການພັດທະນາສັງຄົມ. ສ່ວນວຽກສຳຄັນໃຈກາງຂອງການພັດທະນາຄົນແມ່ນການສຶກສາ.**

♦ ຍຸດທະສາດພັດທະນາຕາມທິດສັງຄົມນິຍົມ ແມ່ນຍຸດທະສາດທີ່ສອດຄ່ອງທີ່ສຸດແລ້ວ ກັບກະແສຂອງການພັດທະນາໃນຍຸກໂລກາພິວັດທາງເສດຖະກິດ. ເພາະວ່າມັນແມ່ນການພັດທະນາເພື່ອໃຫ້ຄົນຂະຫຍາຍຕົວຢ່າງຮອບດ້ານ ແລະ ກົມກຽວທາງດ້ານສະຕິປັນຍາ -ຄວາມຮູ້ຄວາມສາມາດ, ທາງດ້ານຮ່າງກາຍ ແລະ ດ້ານຈິດໃຈ.

ເພາະວ່າ ມັນແມ່ນການພັດທະນາເພື່ອໃຫ້ສັງຄົມມີຄວາມສີວິໄລ ແລະ ຍຸດຕິທຳ, ໃຫ້ປະເທດມີຄວາມເຂັ້ມແຂງ ແລະ ໃຫ້ປະຊາຊົນຮັ່ງມີຜາສຸກ.

② <u>ກ່ຽວກັບນະໂຍບາຍ</u>:

• ຍຸດທະສາດການພັດທະນາເປັນປັດໄຈກຳນົດທິດທາງການພັດທະນາປະເທດວ່າຈະໄປຕາມທິດທາງໃດ ແລະ ໄປສູ່ຈຸດໝາຍອັນໃດ ຫລືເວົ້າຢ່າງໜຶ່ງ ມັນແມ່ນຕົວກຳນົດວິຖີຊີວິດ ຫລື ຊາຕາກຳຂອງຄົນໃນປະເທດ.

• ຍຸດທະສາດການພັດທະນາຂອງພວກເຮົາ ແມ່ນຍຸດທະສາດທີ່ແນ່ໃສ່ຂຸດຄົ້ນ ແລະ ເສີມຂະຫຍາຍກຳລັງແຮງສັງລວມພາຍໃນປະເທດຢ່າງສຸດຂີດ. ພ້ອມນັ້ນ ກໍ່ຍາດແຍ້ງ ແລະ ດຶງດູດເອົາກຳລັງແຮງຈາກພາຍນອກມາສົມທົບກັບປັດໄຈພາຍໃນ ເພື່ອເຮັດໃຫ້ການນຳໃຊ້ຊັບພະຍາກອນມີປະສິດທິຜົນສູງ.

• ເມື່ອມີຍຸດທະສາດອັນຈະແຈ້ງແລ້ວ ການມີນະໂຍບາຍອັນລະອຽດຈະແຈ້ງ ແມ່ນສິ່ງຈຳເປັນເພື່ອໃຫ້ຍຸດທະສາດນັ້ນກາຍເປັນຈິງເປັນກ້າວໆ.

• ການວາງນະໂຍບາຍເປັນໜ້າທີ່ສຳຄັນຂອງລັດຖະບານແຕ່ລະປະເທດ. ໃນເງື່ອນໄຂໂລກາພິວັດທາງເສດຖະກິດ ອັນນີ້ແມ່ນໜ້າທີ່ທີ່ມີລັກສະນະທ້າທາຍ. ເພາະວ່າໂລກາພິວັດທາງເສດຖະກິດມັນເລັ່ງທວງໃຫ້ປະເທດຕ່າງໆຕ້ອງດຳເນີນນະໂຍບາຍເສດຖະກິດແບບເປີດ; ກ່ອນອື່ນແມ່ນ**ການເປີດເສລີທາງການຄ້າ** ກ້າວໄປເຖິງ**ການເປີດເສລີທາງການເງິນ**, **ຈາກການເງິນໄປສູ່ການຜະລິດ ແລະ ການລົງທຶນລະຫວ່າງປະເທດ**, ໄປເຖິງການເປີດເສລີທາງດ້ານການສົ່ງແຮງງານຂ້າມຊາດ ແລະ ອື່ນໆອີກ.

ສິ່ງທ້າທາຍສຳລັບລັດຖະບານໃນທີ່ນີ້ ແມ່ນການວາງນະໂຍບາຍເສດຖະກິດແບບເປີດນັ້ນ ຈະເປີດອັນໃດ, ເປີດລະດັບໃດຈຶ່ງພໍດີ-ພໍເຫມາະ; ຖ້າປິດ ຈະປິດອັນໃດ, ປິດໄວ້ດົນປານໃດຈຶ່ງເປີດ... ການເຮັດແບບເປີດແລ້ວ-ປິດ, ປິດແລ້ວ-ເປີດ ປີ້ນໄປປີ້ນມາຈະບໍ່ເຂົ້າກັນໄດ້ກັບການພົວພັນຮ່ວມມືທາງດ້ານເສດຖະກິດໃນຍຸກໂລກາພິວັດ.

♦ ຍ້ອນະາສະນະທ້າທາຍຄືແນວນັ້ນ ລັດຖະບານຫລາຍປະເທດ ຈຶ່ງວາງນະໂຍບາຍເປີດກວ້າງໃນດ້ານຕ່າງໆອອກຕ່າງກັນ ໂດຍຂຶ້ນກັບຈຸດພິເສດ ແລະ ລະດັບຄວາມສາມາດຄຸ້ມຄອງຂອງໃຜຂອງລາວ. ຈາກນັ້ນ ຜົນໄດ້ຮັບຈາກການດຳເນີນນະໂຍບາຍກໍ່ຕ່າງກັນ, ມີປະເທດໄດ້ຮັບຜົນສຳເລັດດີ ແລະ ມີປະເທດບໍ່ໄດ້ຮັບຜົນສຳເລັດ ຫລືຍິ່ງໄປກວ່ານັ້ນ ແມ່ນປະສົບກັບວິກິດການ.

ຈາກການວາງ ແລະ ການປະຕິບັດນະໂຍບາຍເປີດກວ້າງທີ່ໄດ້ຮັບຜົນ ແລະ ບໍ່ໄດ້ຮັບຜົນ, ຫລາຍປະເທດໄດ້ພະຍາຍາມຮຽນຮູ້ ແລະ ຖອດຖອນບົດຮຽນສຳລັບຕົນເອງ ກ່ຽວກັບວ່າ ຈະເປີດອັນໃດກ່ອນ ແລະ ເປີດອັນໃດລຸນ, ອັນໃດເປີດຫນ້ອຍ-ອັນໃດເປີດຫລາຍ; ອັນໃດຄວນເປີດຍາມໃດ ແລະ ຕ້ອງປິດຍາມໃດ... ອັນນີ້ທັງແມ່ນວິທະຍາສາດ ທັງແມ່ນສິລະປະ ແລະ ຄວາມສາມາດແຫ່ງການຄຸ້ມຄອງ-ບໍລິຫານຂອງລັດຖະບານ.

★ ປະເທດມາເລເຊຍ ພາຍໃຕ້ການນຳຂອງນາຍົກມະຫາເທຍ ມີປະສົບການທີ່ຫນ້າສົນໃຈກ່ຽວກັບການຮຽນຮູ້ຈາກພຶດຕິກຳ ແລະ ບົດຮຽນຂອງຕົນເອງ ກໍ່ຄືຂອງປະເທດອື່ນ.

ເວລາເກີດວິກິດການທາງການເງິນໃນປີ 1997 ໂດຍເລີ່ມຈາກປະເທດໄທ ແລ້ວແຜ່ກະຈາຍໄປສູ່ປະເທດອື່ນໆຢ່າງໄວວາ ທັງເປັນວິກິດການຄັ້ງຮ້າຍແຮງນັ້ນ ທ່ານນາຍົກ ມະຫາເທຍ ໄດ້ດຳເນີນນະໂຍບາຍປິດປະຕູບໍ່ໃຫ້ເງິນໄຫລອອກນອກປະເທດ ຫລື ສັບວິຊາການເອີ້ນວ່າ ຄວບຄຸມເງິນຕາ ບໍ່ໃຫ້ໄຫລອອກ, ຊຶ່ງເປັນນະໂຍບາຍ ຫລືມາດຕະການທີ່ກອງທຶນການເງິນລະຫວ່າງປະເທດ (ຫລື IMF) ບໍ່ເຫັນດີນຳ ແລະ ຕຳນິຕິຕຽນຢ່າງແຮງ.

ເປັນຫຍັງທ່ານນາຍົກ ມະຫາເທຍ ຈຶ່ງຕັດສິນໃຈໄດ້ຖືກຕ້ອງ ແລະ ດຳເນີນການຢ່າງເດັດຂາດ ໂດຍບໍ່ເອົາຫົວຊານຳການ "ແນະນຳ" ແລະ ການຕຳນິຕິຕຽນຂອງ IMF?

ຄວາມຈິງມີຢູ່ວ່າ ກ່ອນຫນ້ານັ້ນ 13-14 ປີ ປະເທດມາເລເຊຍ ໄດ້ປະສົບກັບວິກິດການທາງການເງິນມາແລ້ວ. ຜ່ານການຖອດຖອນບົດຮຽນຈາກວິກິດການ, ລັດຖະບານມາເລເຊຍໄດ້ດັດປັບນະໂຍບາຍດ້ານການເງິນມາໂດຍຕະຫລອດ, ເຮັດໃຫ້ມາເລເຊຍ (ໃນເວລານັ້ນ) ມີເງິນຕາຕ່າງປະເທດໃນຄັງສຳຮອງກວ່າ 26 ພັນລ້ານໂດລາສະຫະລັດ; ສ່ວນຫນີ້ຕ່າງປະເທດມີພຽງແຕ່ 40 ພັນກວ່າລ້ານໂດລາສະຫະລັດ. ໃນນັ້ນ ຫນີ້ໄລຍະສັ້ນມີພຽງຫນ້ອຍດຽວ.

ຍ້ອນໄດ້ຜ່ານປະສົບການ ແລະ ໄດ້ຮຽນຮູ້ຈາກຕົວຈິງ, ໂດຍສະເພາະແມ່ນໄດ້ປັບປຸງ ບູລະນະນະໂຍບາຍທາງດ້ານເສດຖະກິດ-ການເງິນໃຫ້ມີຄວາມຕໍ່ເນື່ອງຫນັກແຫນ້ນຂຶ້ນເລື້ອຍໆ, ທັງມີການຈັດຕັ້ງຫນ່ວຍງານເສດຖະກິດ ທີ່ປະກອບດ້ວຍບຸກຄະລາກອນທີ່ມີຄຸນນະ

ພາບ ແລະ ມີການມອບຫມາຍຄວາມຮັບຜິດຊອບ ໃນການແກ້ໄຂບັນຫາຕ່າງໆທີ່ກ່ຽວພັນຢ່າງເປັນລະບົບ ລັດຖະບານມາເລເຊຍຈຶ່ງສາມາດແກ້ໄຂບັນຫາໄດ້ຢ່າງທັນການ, ຫນັກແຫນ້ນ ແລະ ໄດ້ຮັບຜົນດີ ໂດຍບໍ່ໄດ້ເອົາເງິນຈາກຄັງສຳຮອງອອກແຊກແຊງຄ່າເງິນ ຣິງກິດ (ເງິນມາເລເຊຍ) ແມ່ນແຕ່ຫນ້ອຍດຽວ.

♦ ກ່ຽວກັບຄວາມສຳຄັນຂອງນະໂຍບາຍນີ້ ຄະນະຄົ້ນຄວ້າລາວ-ຍີ່ປຸ່ນ ດ້ານນະໂຍບາຍເສດຖະກິດມະຫາພາກ ແລະ ການພັດທະນາຢູ່ ສປປ ລາວ ພາຍໃຕ້ໂຄງການຊ່ວຍເຫລືອທາງດ້ານວິຊາການຂອງລັດຖະບານຍີ່ປຸ່ນ ກໍ່ໄດ້ມີຄວາມເຫັນວ່າ "ຍຸດທະສາດ ແລະ ເສັ້ນທາງການພັດທະນາຂອງ ສປປ ລາວຈະມີລັກສະນະພິເສດສະເພາະ...

ຫນ້າທີ່ຕົ້ນຕໍທີ່ສຸດຂອງລັດຖະບານແມ່ນ ເມື່ອໃດຫາກມີການຕົກລົງບັນຫາໃດຫນຶ່ງແລ້ວ ຕ້ອງຖືວ່າການຕົກລົງນັ້ນເປັນພັນທະທີ່ຈະໄດ້ຮັບຄວາມເຊື່ອຖືຈາກປະຊາຊົນລາວ ແລະ ປະຊາຄົມໂລກ"*.

ສະນັ້ນໃນເວລາກຳນົດນະໂຍບາຍ ຂັ້ນຕອນແຫ່ງການສຶກສາຄົ້ນຄວ້າ ຈຶ່ງເປັນຂັ້ນຕອນທີ່ມີຄວາມສຳຄັນຫລາຍ. ແຕ່ວ່າໃນເວລາປະຕິບັດນະໂຍບາຍ ການຮັກສາຄວາມຕໍ່ເນື່ອງຫມັ້ນທ່ຽງ ແລະ ລັກສະນະສະເຫມີຕົ້ນສະເຫມີປາຍພັດມີຄວາມຈຳເປັນແທ້ໆ.

---

* ຈາກປຶ້ມ "ທາງເລືອກຂອງການພັດທະນາໃນ ສປປ ລາວ" ບົດລາຍງານສົມບູນ (ສະບັບພາສາລາວ), ຫນ້າ 3, ກໍລະກົດ 2002.

③ <u>ກ່ຽວກັບກົດໝາຍ:</u>

ກົດໝາຍແມ່ນເຄື່ອງມືຕົ້ນຕໍ ເພື່ອເສີມສ້າງຄວາມຊອບທຳແກ່ການປະຕິບັດອຳນາດຂອງລັດ.

ສ່ວນໃນດ້ານໜຶ່ງອີກ ກົດໝາຍແມ່ນສິ່ງຄ້ຳປະກັນການປະຕິບັດສິດເປັນເຈົ້າຂອງພົນລະເມືອງ ແລະ ຮັບປະກັນຜົນປະໂຫຍດຂອງປະຊາຊົນ.

ລັດໃດ ປະຕິບັດອຳນາດຢ່າງຖືກຕ້ອງຕາມກົດໝາຍ ທັງສາມາດຮັບປະກັນຄວາມສັກສິດຂອງກົດໝາຍໄດ້ເປັນຢ່າງດີ ແລະ ທັງສາມາດຮັບປະກັນສິດເປັນເຈົ້າ ແລະ ຜົນປະໂຫຍດທີ່ຊອບດ້ວຍກົດໝາຍ ຂອງປະຊາຊົນໄດ້ຢ່າງຄົບຖ້ວນ, ສ່ວນສະຕິກົດໝາຍຂອງສະມາຊິກສັງຄົມກໍ່ສູງ ລັດນັ້ນຈຶ່ງຖືໄດ້ວ່າເປັນລັດທີ່ປົກຄອງດ້ວຍກົດໝາຍ (ຫລືລັດແຫ່ງກົດໝາຍ), ລັດນັ້ນ ຈຶ່ງຖືວ່າເປັນລັດຂອງປະຊາຊົນ ໂດຍປະຊາຊົນ ແລະ ເພື່ອປະຊາຊົນ.

♦ ໃນເງື່ອນໄຂໂລກາພິວັດທາງດ້ານເສດຖະກິດ ປະເທດຕ່າງໆ ນອກຈາກໃຫ້ຄວາມສຳຄັນແກ່ການຄົ້ນຄວ້າວາງນະໂຍບາຍທີ່ລະອຽດຈະແຈ້ງແລ້ວ ເຂົາເຈົ້າຍັງເອົາໃຈໃສ່ເປັນພິເສດຕໍ່ການອອກກົດໝາຍທີ່ຈະແຈ້ງຮັດກຸມ. ເຫດຜົນທີ່ປະເທດຕ່າງໆເອົາໃຈໃສ່ຄືແນວນັ້ນ ກໍ່ເພາະວ່າ ກົດໝາຍແມ່ນສິ່ງບົ່ງບອກວັດຖຸປະສົງ ແຫ່ງການເຮັດໃຫ້ນະໂຍບາຍ ໃນດ້ານຕ່າງໆຂອງລັດກາຍເປັນຮູບປະທຳ ຈາກນັ້ນຈຶ່ງຂຽນວັດຖຸປະສົງດັ່ງກ່າວອອກເປັນລາຍລັກອັກສອນ ເພື່ອເປັນກົດເກນສຳລັບຄວບຄຸມການພົວພັນ ແລະ ການປະພຶດຂອງຄົນ

ໃນສັງຄົມໃຫ້ເປັນໄປຕາມທິດທາງດຽວກັນ ແລະ ເພື່ອປະຕິບັດນະໂຍບາຍທີ່ລັດວາງອອກໃຫ້ເປັນຈິງ. ສະນັ້ນ ກົດໝາຍຈຶ່ງມີລັກສະນະບັງຄັບສະເໝີ.

ລັກສະນະບັງຄັບຂອງກົດໝາຍ ກວມເອົາທັງສອງດ້ານຄື: ດ້ານໜຶ່ງແມ່ນບັງຄັບໃຫ້ລັດ, ກໍ່ຄືອົງການຕ່າງໆທີ່ມີສິດອຳນາດຂອງລັດ ແລະ ລັດຖະກອນ ປະຕິບັດໜ້າທີ່ ຫລື ສິດອຳນາດຂອງຕົນຢ່າງຖືກຕ້ອງຕາມກົດໝາຍ; ສ່ວນໃນດ້ານໜຶ່ງອີກ ແມ່ນບັງຄັບໃຫ້ປະຊາຊົນພົນລະເມືອງ ຕ້ອງປະຕິບັດ ຫລື ໃຊ້ສິດທິເສລີພາບຂອງຕົນຢ່າງຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນກົດໝາຍເຊັ່ນກັນ.

ດັ່ງນັ້ນ ກົດໝາຍຈຶ່ງເປັນປັດໄຈພື້ນຖານແຫ່ງການສ້າງຄວາມເຊື່ອໝັ້ນ ແລະ ຄວາມອຸ່ນອຽນໃນການດຳລົງຊີວິດ-ທຳມາຫາກິນ ກໍ່ຄືຄວາມຖືກຕ້ອງຊອບທຳ ໃຫ້ແກ່ການເຄື່ອນໄຫວຂອງທຸກອົງການຈັດຕັ້ງ ແລະ ທຸກຊັ້ນຄົນໃນສັງຄົມ.

ຍ້ອນກົດໝາຍມີລັກສະນະບັງຄັບ, ກົດໝາຍຈຶ່ງມີບົດບາດສຳຄັນໃນຫລາຍດ້ານ ເປັນຕົ້ນແມ່ນດ້ານການບໍລິຫານ ແລະ ການປົກຄອງ; ດ້ານການດັດສົມການພົວພັນລະຫວ່າງຄົນກັບຄົນໃນສັງຄົມ; ດ້ານການຮັກສາຄວາມສະຫງົບປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ; ດ້ານການພັດທະນາປະເທດ...

★ ເຫັນໄດ້ຄວາມສຳຄັນ ແລະ ບົດບາດຂອງກົດໝາຍຄືແນວນັ້ນ ປະເທດຕ່າງໆຈຶ່ງເອົາໃຈໃສ່ຕໍ່ການຄົ້ນຄວ້າອອກກົດໝາຍ ແລະ ການປະຕິບັດກົດໝາຍໃຫ້ສັກສິດ. ເພາະວ່າ ການມີກົດໝາຍ

ປະເພດຕ່າງໆທີ່ນັບມື້ນັບຄົບຖ້ວນ ແລະ ການປະຕິບັດກົດໝາຍຢ່າງສັກສິດ ແມ່ນສິ່ງຈຳເປັນສຳລັບ**ໃຊ້ເປັນເຄື່ອງມື** ໃນການບັນລຸຈຸດໝາຍແຫ່ງການສ້າງສາພັດທະນາປະເທດຊາດ.

**ຍ້ອນກົດໝາຍເປັນເຄື່ອງມື**, ລັດຊຶ່ງເປັນທັງ**ຜູ້ໃຊ້ ແລະ ເປັນຜູ້ປະຕິບັດຈຶ່ງ** ຄວນມີເຄື່ອງມືນັ້ນຢ່າງພຽງພໍ ຫລືບໍ່ກໍ່ຄວນມີໃນຈຳນວນອັນຈຳເປັນ. ພ້ອມກັນນັ້ນ ກໍ່ຕ້ອງສ້າງ ແລະ ປັບປຸງຍົກລະດັບເຄື່ອງມືໃຫ້ດີຂຶ້ນຢູ່ສະເຫມີ.

ລັດທຸກລັດ ລ້ວນແຕ່ໃຊ້ເຄື່ອງມືດ້ານກົດໝາຍເພື່ອປົກຄອງ ແລະ ຄຸ້ມຄອງເສດຖະກິດ-ສັງຄົມ. ຈະແມ່ນລັດໃດ ກໍ່ລ້ວນແຕ່ເອົາໃຈໃສ່ສ້າງ ແລະ ປັບປຸງກົດໝາຍ, ເອົາໃຈໃສ່ໂຄສະນາສຶກສາອົບຮົມກ່ຽວກັບກົດໝາຍໃຫ້ພົນລະເມືອງຂອງຕົນ ເພື່ອໃຫ້ກົດໝາຍມີຄວາມສັກສິດ.

ເນື່ອງຈາກວ່າ ຄວາມສັກສິດຂອງກົດໝາຍບໍ່ສາມາດເປັນໄປໄດ້ຢ່າງສົມບູນ ຍ້ອນກົດໝາຍບໍ່ສາມາດຄອບຄຸມໄປໝົດທຸກການພົວພັນ ແລະ ການປະພຶດຂອງຄົນໃນສັງຄົມ; ເຊັ່ນຕົວຢ່າງ, ກົດໝາຍບໍ່ອະນຸຍາດໃຫ້ລັດຖະກອນສວຍໃຊ້ໜ້າທີ່ - ຕຳແໜ່ງຂອງຕົນເພື່ອສະແຫວງຫາຜົນປະໂຫຍດ ສ້າງຄວາມລ້ຳລວຍແກ່ສ່ວນຕົວ ດ້ວຍການສໍ້ລາດບັງຫລວງ, ແຕ່ພັດຍັງມີລັດຖະກອນບາງຄົນລະເມີດກົດໝາຍຢູ່ ແລະ ກົດໝາຍກໍ່ບໍ່ສາມາດເອົາຜິດກັບລັດຖະກອນຜູ້ນັ້ນໄດ້ເນື່ອງຈາກບໍ່ສາມາດຫາຂໍ້ມູນຫລັກຖານມາຢັ້ງຢືນ. ກໍລະນີແບບນີ້ ບົ່ງບອກແຈ້ງວ່າ ກົດໝາຍບໍ່ສັກສິດສຳລັບຜູ້ທີ່ລະເມີດ. ສະນັ້ນ, ການ

ດຳເນີນມາດຕະການສຶກສາອົບຮົມທາງດ້ານແນວຄິດ ແລະ ທາງດ້ານຈັນຍາທຳ ກໍ່ຄືການສ້າງຄວາມສີວິໄລທາງດ້ານຈິດໃຈ, ເຮັດໃຫ້ຄົນມີຈິດສຳນຶກດີ ຈຶ່ງເປັນເລື່ອງທີ່ບໍ່ອາດຈະຖືເບົາໄດ້.

♦ ການມຸ້ງສູ່ລັດປົກຄອງດ້ວຍກົດໝາຍ ແມ່ນສິ່ງຈຳເປັນພາວະວິໄສ, ເພາະການປົກຄອງດ້ວຍກົດໝາຍ ເປັນປັດໄຈສ້າງຄວາມເຊື່ອໝັ້ນ ຂອງປະຊາຊົນພົນລະເມືອງພາຍໃນປະເທດ ແລະ ປະຊາຄົມໂລກຕໍ່ລັດ ກໍ່ຄືຕໍ່ອຳນາດການປົກຄອງຂອງປະເທດນັ້ນໆ.

ໃນຍຸກໂລກາພິວັດທາງດ້ານເສດຖະກິດ ກົດໝາຍມີຄວາມສຳຄັນສຳລັບການສ້າງຄວາມເປັນເອກະພາບ ແລະ ຄວາມເຂັ້ມແຂງ-ໝັ້ນຄົງແຫ່ງຊາດ; ພ້ອມກັນນັ້ນ ກໍ່ມີຄວາມສຳຄັນ ສຳລັບການສ້າງການພົວພັນຮ່ວມມືກັບນາໆຊາດ. ສະນັ້ນ ການສ້າງກົດໝາຍໃຫ້ເປັນລະບົບຄົບຊຸດຂຶ້ນເລື້ອຍໆ, ການຈັດຕັ້ງປະຕິບັດກົດໝາຍຢ່າງເຂັ້ມງວດ ແລະ ມີຜົນອັນສັກສິດ ຈຶ່ງເປັນໜ້າທີ່ສະເພາະໜ້າ ແລະ ຍາວນານອັນສຳຄັນຍິ່ງຂອງລັດ.

④ <u>ກ່ຽວກັບຄຸ້ມຄອງ-ກວດກາການປະຕິບັດນະໂຍບາຍ ແລະ ກົດໝາຍ</u>:

ໃນຍຸກໂລກາພິວັດທາງເສດຖະກິດ, ມີລັດຖະບານຂອງຫລາຍປະເທດໄດ້ຈ້າງຜູ້ຊ່ຽວຊານນັກວິຊາການທີ່ມີຊື່ສຽງມາເປັນທີ່ປຶກສາ ຫລືເປັນນັກວາງແຜນ, ເປັນນັກຄົ້ນຄວ້າວາງນະໂຍບາຍຊ່ວຍລັດຖະບານໂດຍຫວັງວ່າຈະເຮັດໃຫ້ປະເທດຕົນສາມາດແກ້ບັນຫາ ແລະ ພັດທະນາ

ດ້ວຍບາດກ້າວໄວຂຶ້ນ, ເພີ່ມຄວາມສາມາດແຂ່ງຂັນຂອງປະເທດຕົນຂຶ້ນ ແລະອັນສຳຄັນແມ່ນໃຫ້ສາມາດສ້າງຜົນງານໃຫມ່ໆໄດ້ຢ່າງປະຈັກຕາ.

ການເຮັດຄືແນວນັ້ນ ມີບາງປະເທດກໍ່ປະສົບຜົນສຳເລັດ ແຕ່ມີຫລາຍປະເທດບໍ່ປະສົບຜົນສຳເລັດສົມດັ່ງທີ່ຕັ້ງເປົ້າໄວ້. ສາເຫດຂອງຄວາມບໍ່ສຳເລັດແມ່ນຍ້ອນວ່າ ນັກຄົ້ນຄວ້າ, ຜູ້ຊ່ຽວຊານອາດສາມາດຊ່ວຍວາງແຜນ, ວາງນະໂຍບາຍ ແລະ ຊ່ວຍໃຫ້ຄຳແນະນຳກ່ຽວກັບການອອກກົດຫມາຍ, ການດຳເນີນມາດຕະການຕ່າງໆໄດ້, ແຕ່ເຂົາເຈົ້າບໍ່ມີສິດອຳນາດທີ່ຈະຕິດຕາມ, ກວດກາ ແລະ ຊຸກຍູ້ການປະຕິບັດໄດ້ຢ່າງເປັນເຈົ້າການ. ເພາະອັນນີ້ຂຶ້ນກັບສິດອຳນາດ ແລະ ເປັນຫນ້າທີ່ສຳຄັນອັນຫນຶ່ງຂອງລັດຖະບານ.

ຈາກການສຶກສາຄົ້ນຄວ້າທາງວິຊາການໃຫ້ຮູ້ວ່າ ປະເທດທີ່ປະສົບຜົນສຳເລັດດີໃນການພັດທະນາ ແມ່ນປະເທດທີ່ມີລັດຖະບານເຂັ້ມແຂງ, ປອດໃສ ແລະ ເອົາໃຈໃສ່ຕິດຕາມກວດກາການປະຕິບັດນະໂຍບາຍທີ່ວາງອອກຢ່າງຈິງຈັງ.

- ກົງກັນຂ້າມ, ມີນັກການເມືອງຢູ່ຫລາຍປະເທດມັກເວົ້າ, ມັກຖະແຫລງກ່ຽວກັບນະໂຍບາຍ ແລະ ມາດຕະການຕ່າງໆ; ອັນນີ້ກະສິແກ້, ອັນນັ້ນກະສິເຮັດ... ໃຫ້ຄຳຫມັ້ນສັນຍາຢ່າງຫລວງຫລາຍ ແລະ ຕິດໃຈປະຊາຊົນ ເພື່ອໃຫ້ໄດ້ຄະແນນນິຍົມຈາກຜູ້ເລືອກຕັ້ງ. ແຕ່ເມື່ອເວລາໄດ້ເປັນລັດຖະບານແລ້ວ ຊຳພັດບໍ່ເອົາໃຈໃສ່ຢ່າງເຖິງຖອງຕໍ່ການປະຕິບັດອຳນາດຫນ້າທີ່ຂອງຕົນ ໃນດ້ານການຕິດຕາມກວດກາການປະຕິບັດນະໂຍບາຍທີ່ຕົນເອງວາງອອກ. ຈາກນັ້ນ ຈຶ່ງເຮັດໃຫ້ນະ

ໂຍບາຍ ທີ່ຖະແຫລງອອກໄປແລ້ວບໍ່ໄດ້ຮັບການຈັດຕັ້ງປະຕິບັດ (ເວົ້າແລ້ວເຮັດບໍ່ໄດ້) ຫລື ຈັດຕັ້ງປະຕິບັດໄປໄລຍະໜຶ່ງ ແລ້ວກໍ່ສຸດສ້ອຍໄປ-ບໍ່ໄດ້ຮັບຜົນ.

ຈຸດອ່ອນ ແລະ **ຂໍ້ຂາດຕົກບົກຜ່ອງແບບນີ້** ເກີດຂຶ້ນໃນການບໍລິຫານວຽກງານ ຂອງລັດຖະບານຫລາຍໆປະເທດ, ຊຶ່ງເປັນສາເຫດສຳຄັນອັນໜຶ່ງ ທີ່ພາໃຫ້ລັດຖະບານນັ້ນເສຍບົດບາດ ແລະ ຂາດຄະແນນນິຍົມຈາກປະຊາຊົນ.

ດ້ວຍເຫດນີ້ເອງ ນັກຄົ້ນຄວ້າ, ນັກວາງແຜນຈຶ່ງສະເໜີຕໍ່ລັດຖະບານ ຫລື ຜູ້ບໍລິຫານລະດັບສູງໄວ້ວ່າ: **ຖ້າວາງນະໂຍບາຍອັນໃດອັນໜຶ່ງອອກແລ້ວ ຕ້ອງຮັບປະກັນໃຫ້ໄດ້ວ່າ ລັດຖະບານຈະພ້ອມພຽງກັນນຳໄປປະຕິບັດ.** ຖ້າລັດຖະບານໄດ້ເວົ້າວ່າຈະເຮັດອັນໃດອັນໜຶ່ງແລ້ວ ແມ່ນໃຫ້ເຮັດໂລດ ແລະ ເວລາເຮັດຕ້ອງຕິດພັນກັບສິ່ງນັ້ນຢູ່ສະເໝີ ຕິດຕາມກວດກາເປັນປະຈຳ ເພື່ອໃຫ້ມັນເກີດເປັນຈິງ; **ຖ້າບໍ່ດັ່ງນັ້ນ ກໍ່ບໍ່ຄວນເວົ້າວ່າຈະເຮັດ.**

♦ ເປັນອັນຈະແຈ້ງວ່າ, ການວາງແຜນ, ການວາງນະໂຍບາຍ ແລະ ການອອກລະບຽບກົດໝາຍຕ່າງໆ ທີ່ຖືກຕ້ອງສອດຄ່ອງ ແມ່ນສິ່ງຈຳເປັນ ແລະ ມີຄວາມສຳຄັນແທ້, **ແຕ່ການຄຸ້ມຄອງ - ກວດກາການຈັດຕັ້ງປະຕິບັດໃຫ້ມັນເກີດຜົນເປັນຈິງນັ້ນ ຍິ່ງມີຄວາມສຳຄັນ.**

ການຄຸ້ມຄອງ-ກວດກາການຈັດຕັ້ງປະຕິບັດນະໂຍບາຍ, ແຜນການ ແລະ ລະບຽບກົດໝາຍຕ່າງໆນັ້ນ ຕົ້ນຕໍແມ່ນສຸມໃສ່ການປະຕິບັດໜ້າທີ່ຂອງລັດຖະກອນ ແລະ ການເຄື່ອນໄຫວຂອງກົງຈັກ

ລັດທັງຫມົດ. ເພາະວ່າພະນັກງານລັດຖະກອນ ມີຫນ້າທີ່ນຳເອົາແຜນການ, ນະໂຍບາຍ, ກົດຫມາຍຂອງລັດໄປປະຕິບັດ ໂດຍຕິດພັນກັບການບໍລິການ-ຮັບໃຊ້ປະຊາຊົນ; ຮັບປະກັນຄວາມສະດວກ, ຄວາມຖືກຕ້ອງເປັນທຳ ແລະ ຜົນປະໂຫຍດຕົວຈິງຂອງປະຊາຊົນ.

ສະນັ້ນ ແຜນການ, ນະໂຍບາຍ, ລະບຽບກົດຫມາຍຈະໄດ້ຮັບການຈັດຕັ້ງປະຕິບັດຖືກຕ້ອງ ຫລື ບໍ່ຖືກຕ້ອງ, ໄດ້ຮັບຜົນດີຫລືບໍ່ໄດ້ຮັບຜົນ ແລະ ປະຊາຊົນຈະພໍໃຈຫລືບໍ່ພໍໃຈນຳລັດຖະບານ ລ້ວນແລ້ວແຕ່ຂຶ້ນກັບການປະຕິບັດຫນ້າທີ່ວຽກງານຂອງລັດຖະກອນເປັນຕົ້ນຕໍ.

ໃນການຄຸ້ມຄອງ - ກວດກາການປະຕິບັດນະໂຍບາຍຂອງຕົນນັ້ນ ລັດຖະບານຂອງຫລາຍປະເທດຍັງຖືສຳຄັນ ແລະ ເອົາໃຈໃສ່ເປັນພິເສດຕໍ່ການທາບທາງສຽງ ແລະ ຄວາມຄິດເຫັນຂອງມະຫາຊົນ ເປັນຕົ້ນແມ່ນຕົວແທນຂອງບັນດາຊັ້ນຄົນ ແລະ ພາກສ່ວນເສດຖະກິດວ່າເຂົາເຈົ້າມີທັດສະນະທ່າທີຄືແນວໃດ, ເຫັນດີເຫັນພ້ອມຫລືບໍ່, ສະຫນັບສະຫນູນຫລືຂັດຂ້ອງແນວໃດ ຕໍ່ນະໂຍບາຍຂອງລັດຖະບານ. ເພາະວ່າການປະຕິບັດນະໂຍບາຍ, ແຜນການ ແລະ ລະບຽບກົດຫມາຍທີ່ວາງອອກຈະໄດ້ຮັບຜົນຄືແນວໃດນັ້ນ ສ່ວນຫນຶ່ງທີ່ສຳຄັນແມ່ນຂຶ້ນກັບການສະຫນັບສະຫນູນ ສະຫນອງຕອບຂອງບັນດາຜູ້ປະກອບການຜະລິດ-ທຸລະກິດ, ນັກວິຊາການ-ນັກຮຽນຮູ້ປັນຍາຊົນ ແລະ ຊັ້ນຄົນຕ່າງໆໃນສັງຄົມ.

ພ້ອມກັນນັ້ນ ລັດຖະບານຂອງຫລາຍປະເທດຍັງຖືສຳຄັນການທາບທາມ ແລະ ຊອກຮູ້ຄວາມຄິດຄວາມເຫັນຂອງຊາວຕ່າງປະ

ເທດ ກ່ຽວກັບນະໂຍບາຍ ແລະ ລະບຽບກົດໝາຍທີ່ວາງອອກ; ທັງມີການປຽບທຽບ, ຊັ່ງຊາລະຫວ່າງນະໂຍບາຍທີ່ປະເທດຕົນປະຕິບັດ ກັບນະໂຍບາຍຂອງປະເທດອື່ນ; ພ້ອມກັນນັ້ນ ກໍ່ເບິ່ງວ່າກົດໝາຍ ແລະ ລະບຽບການຕ່າງໆທີ່ວາງອອກ ແລະ ປະຕິບັດນັ້ນ ສອດຄ່ອງຫລືບໍ່ກັບກົດໝາຍ, ກັບລະບຽບການ ແລະ ປະເພນີສາກົນ. ເພາະວ່າ ໃນຍຸກໂລກາພິວັດທາງເສດຖະກິດ ເກືອບວ່າທຸກປະເທດລ້ວນແຕ່ມີການພົວພັນຮ່ວມມືກັນ ແລະ ເພິ່ງພາອາໄສກັນ ບໍ່ແມ່ນໃນດ້ານໃດກໍ່ດ້ານໜຶ່ງ. ການຄຸ້ມຄອງ-ກວດກາການປະຕິບັດກົດໝາຍ ແລະ ນະໂຍບາຍໃນທີ່ນີ້ ແມ່ນເລັງໃສ່ເພີ່ມທະວີການພົວພັນຮ່ວມມືທີ່ເກີດດອກອອກຜົນ; ເສີມຂະຫຍາຍທ່າແຮງປຽບທຽບ ແລະ ຄວາມສາມາດແຂ່ງຂັນຂອງປະເທດຕົນຂຶ້ນຕື່ມ; ພ້ອມນັ້ນ ກໍ່ແກ້ໄຂສິ່ງທີ່ມັນກີດໜ່ວງການພົວພັນຮ່ວມມືແບບຕ່າງຝ່າຍຕ່າງມີຜົນປະໂຫຍດ ກັບຕ່າງປະເທດ ແລະ ກໍາຈັດສິ່ງທີ່ພາໃຫ້ປະເທດຕົນເສຍພາບພົດ, ເສຍຄວາມໜ້າເຊື່ອຖື, ເສຍຄວາມເຊື່ອໝັ້ນ ແລະ ເສຍຜົນປະໂຫຍດ.

ເວົ້າລວມ, ການຄຸ້ມຄອງ-ກວດກາການຈັດຕັ້ງປະຕິບັດນະໂຍບາຍ ແມ່ນເພື່ອກໍາແໜັນບັນຫາ ແລະ ແກ້ບັນຫາໃຫ້ໄດ້ຢ່າງທັນການ ຍູ້ການປະຕິບັດໃຫ້ດໍາເນີນໄປຢ່າງຕໍ່ເນື່ອງ ແລະ ໄດ້ຮັບໝາກຮັບຜົນດີ. ພ້ອມກັນນັ້ນ ກໍ່ເພື່ອປັບປຸງແກ້ໄຂແຜນການ, ນະໂຍບາຍ ແລະ ກົດໝາຍທີ່ວາງອອກໃຫ້ນັບມື້ນັບມີຄວາມສອດຄ່ອງແລະ ມີປະສິດທິຜົນ.

*   *   *

ໂລກາພິວັດທາງເສດທາງເສດຖະກິດ ແມ່ນຂະບວນວິວັດພາວະວິໄສ ທີ່ເປັນໄປຕາມກົດເກນຂະຫຍາຍຕົວທາງດ້ານເສດຖະກິດ ແລະ ສັງຄົມຂອງໂລກ.

ເພື່ອການຄົງຕົວ ແລະ ການຂະຫຍາຍຕົວຂອງປະເທດຊາດໃນຍຸກໃໝ່, ພວກເຮົາຕ້ອງສ້າງຄຸນຄ່າໃໝ່ໃຫ້ແກ່ຄວາມເປັນຊາດລາວຂອງພວກເຮົາ:

- ດຸໝັ່ນ, ປະຢັດ ແລະ ພ້ອມພຽງກັນສ້າງຊາດ.
- ມີວິໄນ ແລະ ມີນ້ຳໃຈເສຍສະລະເພື່ອຊາດ.
- ຮຽນຮູ້ ເພື່ອກ້າວທັນຍຸກສະໄໝ ແລະ ເພື່ອຊາດສີວິໄລ.

* * *

ຜູ້ຂຽນຂໍສະແດງຄວາມຂອບໃຈເປັນພິເສດຕໍ່:

- ທ່ານ ດຣ ໄຊສົມພອນ ພົມວິຫານ
- ທ່ານ ດຣ ພັນຄຳ ວິພາວັນ
- ທ່ານ ຄຳເຜີຍ ປານມະໄລທອງ
- ທ່ານ ດຣ ກຸແກ້ວ ອັກຄະມົນຕຣີ
- ທ່ານ ດຣ ສຸພັນ ແກ້ວມີໄຊ
- ທ່ານ ຄຳວິສັນ ແກ້ວສຸວັນ(ເລີດ ໄຊຊະນະ ຫລື ທິດດີ)

ທີ່ໄດ້ປະກອບຄວາມເຫັນອັນເປັນປະໂຫຍດຫລາຍຢ່າງ ກ່ຽວກັບເນື້ອໃນຂອງປຶ້ມຫົວນີ້.

* * *

**ຄະນະຮັບຜິດຊອບຈັດພິມ**

- ຄຳພອນ ບຸນນະດີ, ຫົວໜ້າຫ້ອງການຄົ້ນຄວ້າທິດສະດີ-ພຶດຕິກຳ ຮັບຜິດຊອບລວມ.
- ຄຳວິສັນ ແກ້ວສຸວັນ (ເລີດ ໄຊຊະນະ ຫລື ທິດດີ) ກວດແກ້-ຮຽບຮຽງ.
- ດຣ ດາວເຮືອງ ສິນຕະນາກ ກວດແກ້-ຮຽບຮຽງ.
- ວິໄຊ ຂຳຕະກຸນ ກວດກາດ້ານເຕັກນິກການພິມ.
- ນ ບົວເງິນ ພົມດີດ.

## ເອກະສານອ້າງອີງ


- ຫັນໄປສູ່ຊີນນະບົດ ແລະ ເປີດກວ້າງການພົວພັນກັບຕ່າງປະເທດ. ເອກະສານກອງປະຊຸມສູນກາງຄັ້ງທີ 7 (ສະໄຫມທີ IV)
- ເອກະສານກອງປະຊຸມໃຫຍ່ຄັ້ງທີ VII. ລາຍງານການເມືອງຂອງ ຄະນະບໍລິຫານງານສູນກາງພັກ (ສະໄຫມທີ VI) ຕໍ່ກອງປະຊຸມ ໃຫຍ່ຄັ້ງທີ VII ຂອງພັກ, ມີນາປີ 2001.
- Dictionary of World History, Brockhampton Press, London.
- Défis au Sud. Rapport de La commission Sud Reproduit par PT. GRAMEDIA PUSTAK UTAMA AuTorié du Sud Centre et Présenté àla Delégation de la Xeme Conférence des Pays Non-Alignés. A JAKARTA, INDONESIE, Septembre 1992.
- ຄວາມສຳພັນລະຫວ່າງປະເທດຍຸກປັດຈຸບັນ (ທິດສະວັດ 1990 ແລະ ແນວໂນ້ມ), ສົມພົງ ຊູມາກ, ສຳນັກພິມແຫ່ງຈຸລາລົງກອນ ມະຫາວິທະຍາໄລ, 2544.
- Alvin Toffler, THE THIRD WAVE, ສະບັບແປເປັນພາສາ ໄທ, ບັນນາທິການໂດຍ ສຸກັນຍາ ຕີຣະວະນິດ, ປີ 2536.
- International Economics Theory and Policy, Paul R. Krugman, Maurice Obstfeld, ແປເປັນພາສາລັດເຊຍ, ບັນນາທິການໂດຍ Kolessov ແລະ Kulakov, Moscou 1997.

- A Beginner's Guide to the WORLD ECONOMY, Randy Charles Epping.
- ເອກະສານ International Conference of Economists. Granma International, 30 January 2000 - 6 February 2000.
- ວາລະສານອະລຸນໃໝ່ 7/2001.
- ທາງເລືອກຂອງການພັດທະນາໃນ ສປປ ລາວ, ບົດລາຍງານ ສົມບູນຂອງຄະນະຄົ້ນຄວ້າລາວ-ຍີ່ປຸ່ນ ກ່ຽວກັບນະໂຍບາຍເສດຖະກິດມະຫາພາກ ເພື່ອການພັດທະນາເສດຖະກິດ-ສັງຄົມ ຢູ່ ສປປ ລາວ. ວຽງຈັນ ກໍລະກົດ 2002.
- CHINA Facts & Figure 2001, New Star Publishers.
- ЧТО ЕСТЬ ЧТО В МИРОВОЙ ПОЛИТИКЕ.
МОСКВА ПРОГРЕСС 1987
- ЭКОНОМИЧЕСКАЯ ИСТОРИЯ КАПИТАЛИСТИЧЕСКИХ СТРАН.
В.Т. ЧУНТОНОВ. В.Г. САРЫЧЕВ
МОСКВА. ВЫСШАЯ ШКОЛА. 1985

# ສາລະບານ

ຄຳນຳ........................................................................ 1-3
ອະລຳພະບົດ ...................................................................4-6
ການຂະຫຍາຍຕົວຂອງລະບົບທຶນນິຍົມ ຕົ້ນກຳເນີດ
ຂອງໂລກາພິວັດທາງເສດຖະກິດ ........................................ 7-14
ໂລກາພິວັດທາງເສດຖະກິດ ນິຍາມ ແລະ ຄວາມໝາຍ 15-22
ສິ່ງທ້າທາຍຂອງໂລກາພິວັດທາງດ້ານເສດຖະກິດ.......... 23-54
ກາລະໂອກາດແຫ່ງການພັດທະນາ ໃນຍຸກໂລກາພິວັດ
ທາງເສດຖະກິດ ........................................................ 55-101
ສ້າງພື້ນຖານສຳລັບການພັດທະນາທີ່ໜັ້ນຄົງ ເພື່ອປະ
ເທດລາວວັດທະນາຖາວອນ ................................ 102-124

* ພິມທີ່ໂຮງພິມແຫ່ງລັດ
ພິມຄັ້ງທີ່ໜຶ່ງ ຈຳນວນ 3000 ຫົວ
ຂະໜາດ 13 x 18,5
ພິມແລ້ວວັນທີ: 1 / 7 / 2003

ລາຄາ: 10.000 ກີບ